# ພຣະທັມລະບຽບພວກເລວີ


| | | | | | | | |
|---|---|---|---|---|---|---|---|
| 1 | 2 | 3 | 4 | 5 | 6 | 7 | 8 |
| 9 | 10 | 11 | 12 | 13 | 14 | 15 | 16 |
| 17 | 18 | 19 | 20 | 21 | 22 | 23 | 24 |
| 25 | 26 | 27 | | | | | |


## ລະບຽບຂອງພວກເລວີ LEVITICUS

### 1 ເຄື່ອງເຜົາບູຊາ

The Burnt Offering

1 ພຣະຜູ້ເປັນເຈົ້າຊົງເອີ້ນໂມເຊສັ່ງກັບທ່ານຈາກເຕັນນັດພົບວ່າ,
2 "ຈົ່ງເວົ້າກັບຊາວອິສຣາເອນ ແລະກ່າວແກ່ເຂົາວ່າ ເມື່ອຄົນໃດໃນພວກທ່ານນຳເຄື່ອງບູຊາມາຖວາຍພຣະຜູ້
ເປັນເຈົ້າ ໃຫ້ນຳສັດລ້ຽງອັນເປັນເຄື່ອງບູຊາຂອງທ່ານມາຈາກຝູງງົວ ຫລືຝູງແກະ ຫລືແບ້
3 "ຖ້າເຄື່ອງບູຊານີ້ເປັນເຄື່ອງເຜົາບູຊາມາຈາກຝູງງົວ ກໍໃຫ້ເຂົານຳສັດໂຕເຖິກທີ່ບໍ່ມີຕຳຫນິ ໃຫ້ເຂົານຳເຄື່ອງບູຊາ
ນັ້ນມາທີ່ປະຕູເຕັນນັດພົບ ເພື່ອໃຫ້ເຂົາເປັນທີ່ຊອບພຣະທັຍຕໍ່ພຣະຜູ້ເປັນເຈົ້າ
4 ໃຫ້ເຂົາເອົາມືວາງເທິງຫົວສັດຊຶ່ງເປັນເຄື່ອງເຜົາບູຊານັ້ນ ແລະເຄື່ອງເຜົາບູຊານັ້ນຈະເປັນທີ່ຊົງຊອບພຣະທັຍ
ເພື່ອທຳການລຶບມົນທິນຂອງຜູ້ນັ້ນ
5 ແລ້ວໃຫ້ເຂົາຂ້າງົວເຖິກນັ້ນຕໍ່ພຣະພັກພຣະຜູ້ເປັນເຈົ້າ ຝ່າຍບຸດຊາຍຂອງອາໂຣນຜູ້ເປັນປະໂຣຫິດຈະຖວາຍ
ເລືອດ ແລະເອົາເລືອດມາຊິດໃສ່ທີ່ແທ່ນແລະຮອບແທ່ນບູຊາຊຶ່ງຢູ່ຊື່ປະຕູເຕັນນັດພົບ
6 ແລະໃຫ້ເຂົາດຶງຫນັງເຄື່ອງເຜົາບູຊານັ້ນອອກເສັຽ ແລ້ວຕັດເປັນຕ່ອນໆ
7 ແລະໃຫ້ບຸດຂອງອາໂຣນຜູ້ເປັນປະໂຣຫິດຈະກໍ່ໄຟທີ່ແທ່ນ ແລະຮຽງຟືນເທິງໄຟ
8 ແລະພວກບຸດຊາຍຂອງອາໂຣນ ຜູ້ເປັນປະໂຣຫິດຈະວາງຕ່ອນຊີ້ນ ຫົວ ແລະໄຂມັນສັດຕາມລຳດັບໄວ້ເທິງຟືນ
ເທິງໄຟທີ່ແທ່ນບູຊາ
9 ແຕ່ໃຫ້ເຂົາເອົານ້ຳລ້າງເຄື່ອງໃນ ແລະຂາສັດ ແລ້ວປະໂຣຫິດຈຶ່ງເຜົາຂອງທັງຫມົດເທິງແທ່ນເປັນເຄື່ອງເຜົາບູ
ຊາ ເປັນເຄື່ອງບູຊາດ້ວຍໄຟ ເປັນກິ່ນທີ່ພໍພຣະທັຍແດ່ພຣະຜູ້ເປັນເຈົ້າ
10 "ຖ້າຂອງຖວາຍທີ່ຜູ້ໃດຈະໃຊ້ເປັນເຄື່ອງເຜົາບູຊາມາຈາກຝູງແກະ ຫລືຝູງແບ້ ໃຫ້ຜູ້ນັ້ນເລືອກເອົາສັດໂຕເຖິກທີ່
ບໍ່ມີຕຳຫນິ
11 ໃຫ້ເຂົາຂ້າສັດນັ້ນເສັຽທີ່ແທ່ນບູຊາຂ້າງດ້ານເຫນືອຕໍ່ພຣະພັກພຣະຜູ້ເປັນເຈົ້າ ແລະບຸດຊາຍຂອງອາໂຣນຜູ້
ເປັນປະໂຣຫິດຈະເອົາເລືອດສັດນັ້ນຊິດໃສ່ທີ່ແທ່ນແລະຮອບແທ່ນບູຊາ
12 ໃຫ້ເຂົາຟັນສັດນັ້ນໃຫ້ເປັນຕ່ອນໆ ທັງຫົວແລະໄຂມັນນຳ ແລະປະໂຣຫິດຈະວາງເຄື່ອງເຫລົ່ານີ້ຕາມລຳດັບໄວ້
ເທິງຟືນເທິງໄຟທີ່ແທ່ນບູຊາ
13 ແຕ່ເຄື່ອງໃນກັບຂານັ້ນຜູ້ຖວາຍບູຊາຈະລ້າງເສັຽດ້ວຍນ້ຳ ແລະໃຫ້ປະໂຣຫິດເອົາເຄື່ອງທັງຫມົດເຫລົ່ານີ້ເຜົາບູ
ຊາດ້ວຍກັນເທິງແທ່ນ ເປັນເຄື່ອງເຜົາບູຊາ ຄືເປັນເຄື່ອງບູຊາດ້ວຍໄຟ ເປັນກິ່ນທີ່ພໍພຣະທັຍແດ່ພຣະຜູ້ເປັນເຈົ້າ
14 "ຖ້າຜູ້ໃດຈະນຳນົກມາຖວາຍເປັນເຄື່ອງເຜົາບູຊາແດ່ພຣະຜູ້ເປັນເຈົ້າ ກໍໃຫ້ຜູ້ນັ້ນນຳຂອງບູຊາທີ່ເປັນນົກເຂົາ
ຫລືນົກກາງແກ່ທີ່ຫນຸ່ມມາຖວາຍ
15 ຈົ່ງໃຫ້ປະໂຣຫິດນຳນົກນັ້ນມາທີ່ແທ່ນ ໃຫ້ເລືອດໄຫລອອກມາຂ້າງໆແທ່ນ

16 ແລະໃຫ້ດຶງຫນຽງ ແລະຫລິກຂົນນົກອອກເສັຽ ແລ້ວຖິ້ມລົງແທ່ນດ້ານຕາເວັນອອກໃນບ່ອນທີ່ຖິ້ມຂີ້ເຖົ່າ

17 ແລະໃຫ້ເຂົາຈີກປີກຢ່າໃຫ້ຂາດອອກຈາກໂຕ ແລະປະໂຣຫິດຈະເຜົານົກນັ້ນເທິງແທ່ນທີ່ກອງຟືນເທິງໄຟ ເປັນເຄື່ອງເຜົາບູຊາ ຄືເປັນເຄື່ອງບູຊາດ້ວຍໄຟ ເປັນກິ່ນທີ່ພໍພຣະທັຍແດ່ພຣະຜູ້ເປັນເຈົ້າ

## 2 ທັນຍາຫານບູຊາ

Grain Offerings

1 "ເມື່ອຜູ້ໃດນຳທັນຍາຫານບູຊາມາເປັນເຄື່ອງບູຊາຖວາຍແດ່ພຣະຜູ້ເປັນເຈົ້າ ກໍໃຫ້ຜູ້ນັ້ນນຳຍອດແປ້ງມາຖວາຍໃຫ້ເຂົາເທນ້ຳມັນລົງທີ່ແປ້ງແລະໃສ່ກຳຍານດ້ວຍ

2 ແລ້ວນຳມາໃຫ້ບຸດອາໂຣນຜູ້ເປັນປະໂຣຫິດ ຜູ້ທຳພິທີຈະເອົາແປ້ງກຳນຶ່ງພ້ອມນ້ຳມັນແລະກຳຍານທັງຫມົດອອກ ແລະປະໂຣຫິດຈະເຜົາເຄື່ອງບູຊາສ່ວນນີ້ເປັນສ່ວນອະນຸສອນເທິງແທ່ນ ຄືບູຊາດ້ວຍໄຟ ເປັນກິ່ນທີ່ພໍພຣະທັຍແດ່ພຣະຜູ້ເປັນເຈົ້າ

3 ສ່ວນພືດຜົນເປັນເມັດທີ່ເຫລືອຢູ່ນັ້ນຈະເປັນຂອງອາໂຣນແລະບຸດຂອງເຂົາ ເປັນສ່ວນບໍຣິສຸດຢ່າງຍິ່ງຈາກເຄື່ອງບູຊາດ້ວຍໄຟຖວາຍແດ່ພຣະຜູ້ເປັນເຈົ້າ

4 "ເມື່ອທ່ານນຳທັນຍາຫານບູຊາເປັນເຂົ້າຈີ່ອົບໃນເຕົາອົບມາຖວາຍເປັນເຄື່ອງບູຊາ ໃຫ້ເປັນເຂົ້າຈີ່ທີ່ບໍ່ມີເຊື້ອແປ້ງເຮັດດ້ວຍຍອດແປ້ງປົນໃສ່ນ້ຳມັນ ຫລືເຂົ້າຈີ່ແຜ່ນທີ່ບໍ່ມີເຊື້ອແປ້ງທານ້ຳມັນ

5 ແລະຖ້າທ່ານນຳທັນຍາຫານບູຊາເປັນເຂົ້າຈີ່ປີ້ງເທິງເຫລັກ ກໍໃຫ້ເປັນເຂົ້າຈີ່ເຮັດດ້ວຍຍອດແປ້ງທີ່ບໍ່ມີເຊື້ອແປ້ງປົນນ້ຳມັນ

6 ທ່ານຈົ່ງຫັກເຂົ້າຈີ່ນັ້ນເປັນຕ່ອນນ້ອຍໆພ້ອມທັງເທນ້ຳມັນລາດໃສ່ ເມື່ອນຳມາຖວາຍເປັນທັນຍາຫານບູຊາ

7 ຖ້າເຄື່ອງບູຊາຂອງທ່ານເປັນທັນຍາຫານບູຊາຈືນດ້ວຍກະທະໃຫ້ເຮັດດ້ວຍຍອດແປ້ງປົນນ້ຳມັນ

8 ທ່ານຈະນຳທັນຍາຫານບູຊາຊຶ່ງທຳດ້ວຍສິ່ງເຫລົ່ານີ້ມາຖວາຍແດ່ພຣະຜູ້ເປັນເຈົ້າ ເມື່ອນຳມາໃຫ້ປະໂຣຫິດແລ້ວ ປະໂຣຫິດຈະນຳມາເຖິງແທ່ນບູຊາ

9 ແລະປະໂຣຫິດຈະນຳສ່ວນທີ່ຣະລຶກອອກຈາກທັນຍາບູຊາ ແລະເຜົາເສັຽເທິງແທ່ນເປັນເຄື່ອງບູຊາດ້ວຍໄຟເປັນກິ່ນທີ່ພໍ    ພຣະທັຍແດ່ພຣະຜູ້ເປັນເຈົ້າ

10 ສ່ວນທັນຍາຫານບູຊາທີ່ເຫລືອຢູ່ນັ້ນຕົກເປັນຂອງອາໂຣນແລະຂອງບຸດທ່ານ ເປັນສ່ວນບໍຣິສຸດຢ່າງຍິ່ງຈາກເຄື່ອງບູຊາດ້ວຍໄຟຖວາຍແດ່ພຣະຜູ້ເປັນເຈົ້າ

11 "ບັນດາທັນຍາບູຊາຊຶ່ງນຳມາຖວາຍແດ່ພຣະຜູ້ເປັນເຈົ້ານັ້ນຢ່າໃຫ້ມີເຊື້ອແປ້ງ ເຈົ້າຢ່າເຜົາເຊື້ອແປ້ງແລະນ້ຳເຜີ້ງເປັນເຄື່ອງບູຊາດ້ວຍໄຟຖວາຍແດ່ພຣະຜູ້ເປັນເຈົ້າ

12 ຖ້າເຈົ້າຈະນຳສິ່ງທັງສອງນີ້ຈາກຜົນທຳອິດມາຖວາຍແດ່ພຣະຜູ້ເປັນເຈົ້າກໍໄດ້ ແຕ່ຢ່າເຜົາຖວາຍເທິງແທ່ນໃຫ້ເປັນກິ່ນທີ່ພໍ  ພຣະທັຍ

13 ເຈົ້າຈົ່ງປຸງບັນດາທັນຍາບູຊາດ້ວຍໃສ່ເກືອ ເຈົ້າຢ່າໃຫ້ເກືອແຫ່ງຄຳຫມັ້ນສັນຍາກັບພຣະເຈົ້າຂອງເຈົ້າຂາດເສັຽຈາກທັນຍາຫານບູຊາຂອງເຈົ້າ ເຈົ້າຈົ່ງຖວາຍເກືອພ້ອມກັບບັນດາເຄື່ອງບູຊາຂອງເຈົ້າ

14 "ຖ້າເຈົ້າຖວາຍທັນຍາຫານບູຊາຈາກຜົນທຳອິດແດ່ພຣະຜູ້ເປັນເຈົ້າ ທັນຍາຫານບູຊາຈາກຜົນທຳອິດນັ້ນເຈົ້າຈົ່ງຖວາຍຮວງໃຫມ່ໆຢ້າງໃຫ້ແຫ້ງ ບົດເມັດໃຫ້ລະອຽດ

15 ເຈົ້າຈົ່ງໃສ່ນ້ຳມັນ ແລະວາງເຄື່ອງກຳຍານໄວ້ເທິງນັ້ນ ເປັນທັນຍາບູຊາ

16 ປະໂຣຫິດຈະເອົາສ່ວນນຶ່ງຂອງເມັດທີ່ບົດ ນ້ຳມັນແລະເຄື່ອງກຳຍານເຜົາຖວາຍເປັນສ່ວນອະນຸສອນເປັນເຄື່ອງບູຊາດ້ວຍໄຟຖວາຍແດ່ພຣະຜູ້ເປັນເຈົ້າ

## 3 ສານຕິບູຊາ

Offerings of Well-Being

1 “ຖ້າຜູ້ນຶ່ງຜູ້ໃດຖວາຍເຄື່ອງບູຊາເປັນສານຕິບູຊາ ຖ້າເຂົາຖວາຍງົວເຖິກ ຫລືງົວແມ່ຈາກຝູງ ໃຫ້ເຂົາຖວາຍສັດໂຕທີ່ບໍ່ມີຕຳຫນິແດ່ພຣະຜູ້ເປັນເຈົ້າ

2 ໃຫ້ເຂົາເອົາມືວາງເທິງຫົວຂອງສັດຕົວທີ່ຈະຖວາຍ ແລະຈິ່ງຂ້າເສັຽທີ່ປະຕູເຕັນນັດພົບ ບຸດຂອງອາໂຣນຜູ້ເປັນປະໂຣຫິດຈະເອົາເລືອດຊິດໃສ່ທີ່ແທ່ນແລະອ້ອມຮອບແທ່ນບູຊາ

3 ຈາກເຄື່ອງບູຊາທີ່ຖວາຍເປັນສານຕິບູຊາ ເປັນເຄື່ອງບູຊາດ້ວຍໄຟຖວາຍແດ່ພຣະຜູ້ເປັນເຈົ້າ ຜູ້ຖວາຍຈະນຳໄຂມັນທີ່ຕິດກັບເຄື່ອງໃນແລະໄຂມັນທີ່ໃນເຄື່ອງໃນທັງຫມົດ

4 ແລະຫມາກໄຂ່ຫລັງທັງສອງຫນ່ວຍກັບໄຂມັນທີ່ຕິດບັ້ນແອວນັ້ນ ແລະໃຫ້ເອົາສ່ວນທີ່ດີທີ່ສຸດຂອງຕັບນັ້ນອອກເສັຽພ້ອມກັບຫມາກໄຂ່ຫລັງ

5 ບຸດອາໂຣນຈະເຜົາເສັຽເທິງແທ່ນບູຊາເທິງເຄື່ອງເຜົາບູຊາຊຶ່ງຢູ່ເທິງຟືນເທິງໄຟ ເປັນເຄື່ອງບູຊາດ້ວຍໄຟ ເປັນກິ່ນຫອມທີ່ພໍພຣະທັຍແດ່ພຣະຜູ້ເປັນເຈົ້າ

6 “ຖ້າຜູ້ໃດນຳເຄື່ອງບູຊາທີ່ເປັນສານຕິບູຊາເປັນສັດໂຕເຖິກຫລືໂຕແມ່ທີ່ໄດ້ມາຈາກຝູງແບ້ ແກະ ກໍຢ່າໃຫ້ສັດນັ້ນມີຕຳຫນິ

7 ຖ້າເຂົາຈະຖວາຍລູກແກະເປັນເຄື່ອງບູຊາກໍໃຫ້ເຂົານຳມາຖວາຍແດ່ພຣະຜູ້ເປັນເຈົ້າ

8 ໃຫ້ເຂົາເອົາມືວາງເທິງຫົວຂອງສັດນັ້ນ ແລະໃຫ້ຂ້າເສັຽທີ່ຫນ້າເຕັນນັດພົບ ແລະບຸດອາໂຣນຈະເອົາເລືອດຊິດໃສ່ຂ້າງທັງສີ່ຂອງແທ່ນບູຊາ

9 ຈາກເຄື່ອງບູຊາທີ່ຖວາຍເປັນສານຕິບູຊາ ຄືບູຊາດ້ວຍໄຟຖວາຍແດ່ພຣະຜູ້ເປັນເຈົ້າ ໃຫ້ເຂົາຖວາຍໄຂມັນ ຫາງທີ່ເປັນໄຂມັນທັງຫມົດແປະກະດູກສັນຫລັງ ແລະໄຂມັນທີ່ຫຸ້ມເຄື່ອງໃນ ກັບໄຂມັນທີ່ໃນເຄື່ອງໃນ

10 ຫມາກໄຂ່ຫລັງສອງຫນ່ວຍກັບໄຂມັນທີ່ຕິດຢູ່ບັ້ນແອວ ໃຫ້ເອົາສ່ວນທີ່ດີທີ່ສຸດຂອງຕັບອອກເສັຽພ້ອມກັບຫມາກໄຂ່ຫລັງ

11 ແລະປະໂຣຫິດຈະເອົາສິ່ງເຫລົ່ານີ້ເຜົາເທິງແທ່ນເປັນອາຫານເຜົາດ້ວຍໄຟຖວາຍແດ່ພຣະຜູ້ເປັນເຈົ້າ

12 “ຖ້າເຄື່ອງບູຊາຂອງເຂົາເປັນແບ້ ກໍໃຫ້ເຂົານຳມາຖວາຍຕໍ່ພຣະພັກພຣະຜູ້ເປັນເຈົ້າ

13 ໃຫ້ເຂົາເອົາມືວາງເທິງຫົວຂອງມັນ ແລະຂ້າມັນເສັຽທີ່ຫນ້າເຕັນນັດພົບ ແລະບຸດອາໂຣນຈະເອົາເລືອດຊິດໃສ່ທັງສີ່ຂ້າງຂອງແທ່ນບູຊາ

14 ແລ້ວໃຫ້ເຂົາເອົາສິ່ງເຫລົ່ານີ້ຈາກແບ້ໂຕນັ້ນເປັນເຄື່ອງບູຊາ ເປັນເຄື່ອງບູຊາດ້ວຍໄຟຖວາຍແດ່ພຣະຜູ້ເປັນເຈົ້າ ຄືໄຂມັນທີ່ຫຸ້ມເຄື່ອງໃນ ແລະໄຂມັນທີ່ຢູ່ໃນເຄື່ອງໃນ

15 ຫມາກໄຂ່ຫລັງສອງຫນ່ວຍກັບໄຂມັນທີ່ຕິດຢູ່ບັ້ນແອວ ສ່ວນທີ່ດີທີ່ສຸດຂອງຕັບ ຊຶ່ງເຂົາຈະຕ້ອງເອົາອອກເສັຽພ້ອມກັບ ຫມາກໄຂ່ຫລັງ

16 ແລະປະໂຣຫິດຈະເຜົາສິ່ງເຫລົ່ານີ້ເທິງແທ່ນເປັນອາຫານເຜົາໄຟ ເປັນກິ່ນທີ່ພໍພຣະທັຍ ໄຂມັນທັງຫມົດເປັນຂອງພຣະຜູ້ເປັນເຈົ້າ

17 ໃຫ້ເປັນກົດເກນຖາວອນປະຈຳຕລອດຊົ່ວຊາດເຊື້ອສາຍຂອງເຈົ້າໃນບ່ອນທີ່ເຈົ້າອາໄສຢູ່ທົ່ວໆໄປວ່າ ເຈົ້າຢ່າຮັບປະທານໄຂມັນຫລືເລືອດ”

## 4 ເຄື່ອງບູຊາໄຖ່ບາບ

Sin Offerings

1 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ,

2 “ຈົ່ງກ່າວແກ່ຄົນອິສຣາເອນວ່າ ຖ້າຜູ້ນຶ່ງຜູ້ໃດກະທຳຜິດສິ່ງໃດຊຶ່ງພຣະເຈົ້າໄດ້ຊົງບັນຊາບໍ່ໃຫ້ກະທຳ ໂດຍເຂົາບໍ່
ໄດ້ເຈຕນາກະທຳສິ່ງເຫລົ່ານັ້ນປະການນຶ່ງປະການໃດ
3 ຖ້າຜູ້ກະທຳຜິດເປັນປະໂຣຫິດທີ່ໄດ້ຮັບການຫົດສົງໄວ້ ຍ່ອມນຳກັມບາບມາສູ່ປະຊາຊົນ ເຫດດ້ວຍບາບທີ່ເຂົາ
ໄດ້ກະທຳໄປກໍໃຫ້ເຂົານຳງົວເຖິກຊຶ່ງບໍ່ມີຕຳໜິມາຖວາຍເປັນເຄື່ອງບູຊາໄຖ່ບາບ
4 ໃຫ້ເຂົານຳງົວນັ້ນມາທີ່ເຕັນນັດພົບຕໍ່ພຣະຜູ້ເປັນເຈົ້າ ແລະໃຫ້ເຂົາເອົາມືວາງເທິງຫົວງົວໂຕນັ້ນ ແລະໃຫ້ຂ້າມັນ
ເສັຽຕໍ່ພຣະພັກພຣະຜູ້ເປັນເຈົ້າ
5 ແລະປະໂຣຫິດຜູ້ໄດ້ຮັບການຫົດສົງແລ້ວຈະນຳເລືອດງົວນັ້ນມາທີ່ເຕັນນັດພົບ
6 ປະໂຣຫິດຈະເອົານິ້ວຈຸ່ມລົງໃນເລືອດ ແລະຊິດໃສ່ທີ່ໜ້າເຕັນສະຖານນະມັສການເຈັດຄັ້ງຕໍ່ພຣະພັກພຣະເຈົ້າ
7 ແລະປະໂຣຫິດຈະເອົາເລືອດໜ້ອຍນຶ່ງເຈີມທີ່ຍອດຂອງແທ່ນເຜົາເຄື່ອງຫອມຊຶ່ງຢູ່ທີ່ປະຕູເຕັນນັດພົບ
8 ແລະເຂົາຈະເອົາໄຂມັນອອກເສັຽຈາກງົວໂຕທີ່ເປັນເຄື່ອງບູຊາໄຖ່ບາບນີ້ ຄືໄຂມັນທີ່ຫຸ້ມເຄື່ອງໃນ ແລະໄຂມັນ
ທີ່ໃນເຄື່ອງໃນ
9 ແລະໝາກໄຂ່ຫລັງສອງອັນກັບໄຂມັນທີ່ຕິດຢູ່ ແລະສ່ວນທີ່ດີທີ່ສຸດຂອງຕັບ ຊຶ່ງເຂົາຈະຕ້ອງເອົາອອກເສັຽ
ພ້ອມກັບໝາກໄຂ່ຫລັງ
10 (ໃຫ້ເອົາອອກເຊັ່ນດຽວກັບເອົາອອກຈາກງົວທີ່ຖວາຍເປັນສານຕິບູຊາ) ແລະປະໂຣຫິດຈະເຜົາສິ່ງເຫລົ່ານີ້ເທິງ
ແທ່ນເຄື່ອງເຜົາບູຊາ
11 ແຕ່ໜັງຂອງງົວພ້ອມກັບຊີ້ນງົວ ຫົວ ຂາ ເຄື່ອງໃນ ແລະອຸດຈາຣະຂອງມັນ
12 ຄືງົວທັງໂຕນີ້ ໃຫ້ເອົາອອກໄປເສັຽຈາກຄ້າຍເຖິງບ່ອນສະອາດ ບ່ອນຖິ້ມຂີ້ເທົ່າ ແລະໃຫ້ສຸມໄຟເຜົາເສັຽ ບ່ອນ
ຖິ້ມຂີ້ເທົ່າຢູ່ທີ່ໃດກໍໃຫ້ເຜົາທີ່ນັ້ນ
13 “ຖ້າຊຸມນຸມຊົນອິສຣາເອນທັງໝົດກະທຳຜິດໂດຍບໍ່ຮູ້ຕົວ ແລະຄວາມຜິດນັ້ນກໍປາກົດແກ່ທີ່ປະຊຸມ ແລະເຂົາ
ໄດ້ກະທຳສິ່ງນຶ່ງສິ່ງໃດ ຊຶ່ງພຣະຜູ້ເປັນເຈົ້າບັນຊາບໍ່ໃຫ້ກະທຳ ຈຶ່ງເປັນການກະທຳກັມບາບ
14 ເມື່ອຄວາມຜິດທີ່ເຂົາໄດ້ກະທຳນັ້ນເປັນທີ່ປະຈັກຂຶ້ນ ໃຫ້ທີ່ປະຊຸມຖວາຍງົວໜຸ່ມໂຕນຶ່ງເປັນເຄື່ອງບູຊາໄຖ່ບາບ
ໃຫ້ນຳງົວນັ້ນມາທີ່ໜ້າເຕັນນັດພົບ
15 ແລະຜູ້ໃຫຍ່ຂອງຊຸມນຸມຊົນຈະເອົາມືວາງເທິງຫົວຂອງງົວນັ້ນຕໍ່ພຣະພັກພຣະຜູ້ເປັນເຈົ້າ
16 ແລ້ວປະໂຣຫິດຜູ້ຮັບການເຈີມຈະນຳເລືອດຂອງງົວມາທີ່ເຕັນນັດພົບ
17 ແລະປະໂຣຫິດຈະເອົານິ້ວມືຈຸ່ມລົງໃນເລືອດແລະຊິດເລືອດນັ້ນໃສ່ໜ້າຜ້າກັ້ງເຈັດຄັ້ງຕໍ່ພຣະພັກ
ພຣະເຈົ້າ
18 ແລະປະໂຣຫິດຈະເອົາເລືອດໜ້ອຍນຶ່ງທາໃສ່ຍອດຂອງແທ່ນບູຊາຊຶ່ງຢູ່ໃນເຕັນນັດພົບຕໍ່ພຣະພັກພຣະເຈົ້າ
ສ່ວນເລືອດທີ່ເຫລືອຢູ່ນັ້ນ ເຂົາຈະເຫລົ່ງທີ່ຖານແທ່ນເຄື່ອງບູຊາຊຶ່ງຢູ່ທີ່ປະຕູເຕັນນັດພົບ
19 ແລະເຂົາຈະເອົາໄຂມັນອອກຈາກງົວນັ້ນທັງໝົດ ນຳໄປເຜົາເສັຽເທິງແທ່ນ
20 ເຂົາຈະກະທຳດັ່ງນີ້ແກ່ງົວຕົວນີ້ ເຂົາໄດ້ກະທຳກັບງົວຕົວທີ່ຖວາຍເປັນເຄື່ອງບູຊາໄຖ່ບາບຢ່າງໃດກໍໃຫ້ເຂົາກະ
ທຳແກ່ງົວຕົວນີ້ຢ່າງນັ້ນ ດັ່ງນີ້ປະໂຣຫິດຈະທຳການລຶບມົນທິນບາບຂອງຊຸມນຸມຊົນ ແລ້ວເຂົາທັງຫລາຍຈະໄດ້
ຮັບການອະພັຍ
21 ແລ້ວປະໂຣຫິດຈະນຳງົວອອກໄປນອກຄ້າຍ ແລະເຜົາເສັຽຢ່າງກັບເຜົາງົວໂຕກ່ອນ ເປັນເຄື່ອງບູຊາໄຖ່ບາບ
ຂອງທີ່ປະຊຸມ
22 “ຖ້າຜູ້ປົກຄອງກະທຳຄວາມຜິດ ກະທຳສິ່ງຊຶ່ງພຣະຜູ້ເປັນເຈົ້າພຣະເຈົ້າຂອງເຂົາຊົງບັນຊາບໍ່ໃຫ້ກະທຳໂດຍບໍ່ຮູ້
ຕົວ ແລ້ວມີບາບກັມ

23 ຖ້າໄດ້ແຈ້ງໃຫ້ເຂົາຊາບເຖິງຄວາມຜິດທີ່ເຂົາໄດ້ກະທຳນັ້ນແລ້ວ ກໍໃຫ້ເຂົານຳແບ້ເຖິກທີ່ບໍ່ມີຕຳໜິໂຕນຶ່ງມາ
ເປັນເຄື່ອງບູຊາ
24 ໃຫ້ເຂົາເອົາມືວາງເທິງຫົວແບ້ ແລະໃຫ້ຂ້າແບ້ໃນບ່ອນທີ່ເຂົາຂ້າສັດເປັນເຄື່ອງເຜົາບູຊາແດ່ພຣະຜູ້ເປັນເຈົ້າ ນີ້
ເປັນເຄື່ອງບູຊາໄຖ່ບາບ
25 ປະໂຣຫິດຈະເອົານິ້ວມືຈຸ່ມເລືອດ ເຄື່ອງບູຊາໄຖ່ບາບນຳໄປທາທີ່ຍອດແທ່ນເຄື່ອງເຜົາບູຊາ ແລະເທເລືອດທີ່
ເຫລືອຢູ່ນັ້ນທີ່ຖານຂອງແທ່ນເຄື່ອງເຜົາບູຊາ
26 ແລະໃຫ້ເຂົາເຜົາໄຂມັນທັງໝົດເທິງແທ່ນ ເຫມືອນຢ່າງກັບເຜົາໄຂມັນເຄື່ອງສານຕິບູຊາ ດັ່ງນີ້ແຫລະປະໂຣ
ຫິດຈະທຳການລຶບມົນທິນບາບຂອງເຂົາ ແລະເຂົາຈະໄດ້ຮັບການອະພັຍ
27 “ຖ້າປະຊາຊົນສາມັນຄົນນຶ່ງຄົນໃດກະທຳຄວາມຜິດໂດຍບໍ່ໄດ້ເຈຕນາ ຄືກະທຳສິ່ງນຶ່ງສິ່ງໃດຊຶ່ງພຣະເຈົ້າຊົງບັນ
ຊາບໍ່ໃຫ້ກະທຳ ແລະກໍມີບາບກັມ
28 ເມື່ອໄດ້ແຈ້ງໃຫ້ເຂົາຊາບເຖິງຄວາມຜິດ ຊຶ່ງເຂົາໄດ້ກະທຳແລ້ວ ໃຫ້ເຂົານຳແບ້ແມ່ໂຕນຶ່ງຊຶ່ງບໍ່ມີຕຳໜິມາເປັນ
ເຄື່ອງບູຊາໄຖ່ບາບທີ່ເຂົາໄດ້ກະທຳໄປນັ້ນ
29 ເຂົາຈະເອົາມືວາງເທິງຫົວຂອງເຄື່ອງເຜົາບູຊາໄຖ່ບາບ ແລະຂ້າເຄື່ອງບູຊາໄຖ່ບາບນັ້ນໃນບ່ອນທີ່ເຂົາຖວາຍ
ເຄື່ອງເຜົາບູຊາ
30 ປະໂຣຫິດຈະເອົານິ້ວມືຈຸ່ມເລືອດແບ້ນັ້ນໄປທາທີ່ຍອດຂອງແທ່ນເຄື່ອງເຜົາບູຊາ
31 ເຂົາຈະເອົາໄຂມັນອອກເສັຽໃຫ້ໝົດຢ່າງທີ່ເອົາອອກເສັຽຈາກເຄື່ອງສານຕິບູຊາ ແລະປະໂຣຫິດຈະເຜົາໄຂມັນ
ນັ້ນເທິງແທ່ນ ເປັນກິ່ນທີ່ພໍພຣະທັຍແດ່ພຣະຜູ້ເປັນເຈົ້າ ແລະປະໂຣຫິດຈະທຳການລຶບມົນທິນບາບຂອງເຂົາ
ແລະເຂົາຈະໄດ້ຮັບການອະພັຍ
32 “ຖ້າເຂົານຳລູກແກະມາເປັນເຄື່ອງບູຊາໄຖ່ບາບ ກໍໃຫ້ເຂົານຳລູກແກະແມ່ບໍ່ມີຕຳໜິມາ
33 ເຂົາຈະເອົາມືວາງເທິງຫົວຂອງເຄື່ອງບູຊາໄຖ່ບາບ ແລະຂ້າເສັຽເປັນເຄື່ອງບູຊາໄຖ່ບາບໃນບ່ອນທີ່ເຂົາຂ້າເຄື່ອງ
ເຜົາບູຊາ
34 ປະໂຣຫິດຈະເອົານິ້ວມືຈຸ່ມເລືອດເຄື່ອງບູຊາໄຖ່ບາບນັ້ນ ນຳໄປທາທີ່ຍອດຂອງແທ່ນເຄື່ອງເຜົາບູຊາ ແລະ
ເທເລືອດທີ່ເຫລືອນັ້ນລົງທີ່ຖານຂອງແທ່ນ
35 ເຂົາຈະເອົາໄຂມັນທັງໝົດອອກເສັຽຢ່າງທີ່ເອົາໄຂມັນຂອງລູກແກະອອກຈາກເຄື່ອງສານຕິບູຊາ ແລະປະໂຣ
ຫິດຈະເຜົາໄຂມັນເທິງແທ່ນເທິງເຄື່ອງບູຊາດ້ວຍໄຟຖວາຍແດ່ພຣະຜູ້ເປັນເຈົ້າ ແລະປະໂຣຫິດຈະທຳການລຶບ
ມົນທິນບາບຂອງເຂົາ ຊຶ່ງເຂົາໄດ້ກະທຳຜິດ ແລະເຂົາຈະໄດ້ຮັບການອະພັຍ

# 5

Chapter 5

1 “ຖ້າຜູ້ໃດກະທຳຄວາມຜິດໃນຂໍ້ທີ່ໄດ້ຍິນຄຳໃຫ້ສາບານຕົວເປັນພຍານ ແລະແມ້ວ່າເຂົາເປັນພຍານ ໂດຍທີ່ເຂົາ
ເຫັນຫລືຮູ້ເຣື່ອງກໍຕາມ ແຕ່ເຂົາບໍ່ຍອມໃຫ້ການເປັນພຍານ ເຂົາຕ້ອງຮັບຄວາມຜິດ
2 ຫລືຜູ້ນຶ່ງຜູ້ໃດແຕະຕ້ອງສິ່ງທີ່ເປັນມົນທິນ ຈະເປັນຊາກສັດປ່າທີ່ມົນທິນ ຫລືຊາກສັດລ້ຽງທີ່ມົນທິນ ຫລືຊາກສັດ
ນ້ອຍໆທີ່ມີຫລາຍທີ່ເປັນມົນທິນ ໂດຍບໍ່ທັນຮູ້ຕົວ ເຂົາຈຶ່ງເປັນຄົນມີມົນທິນ ເຂົາກໍມີບາບກັມ
3 ຖ້າເຂົາແຕະຕ້ອງມົນທິນຂອງຄົນ ຈະເປັນສິ່ງໃດໆຊຶ່ງເປັນມົນທິນອັນເປັນສິ່ງທີ່ກະທຳໃຫ້ຄົນນັ້ນເປັນມົນທິນ
ໂດຍເຂົາບໍ່ຮູ້ຕົວ ເມື່ອເຂົາຮູ້ແລ້ວເຂົາກໍມີບາບກັມ
4 ຖ້າຄົນນຶ່ງຄົນໃດເຜີຕົວກ່າວຄຳສາບານວ່າຈະກະທຳຊົ່ວຫລືດີ ຫລືເຜີຕົວກ່າວຄຳສາບານໃດໆ ແລະເຂົາກະ
ທຳໂດຍບໍ່ທັນຮູ້ຕົວ ເມື່ອເຂົາຮູ້ສຶກຕົວແລ້ວໃນປະການໃດກໍຕາມ ເຂົາກໍມີບາບກັມ

5 ເມື່ອຜູ້ນຶ່ງຜູ້ໃດກະທຳບາບກັມໃດໆທີ່ກ່າວມານີ້ ກໍໃຫ້ເຂົາສາລະພາບຄວາມຜິດທີ່ເຂົາໄດ້ກະທຳ
6 ແລະໃຫ້ເຂົານຳເຄື່ອງບູຊາໄຖ່ບາບກັມມາຖວາຍແດ່ພຣະຜູ້ເປັນເຈົ້າ ເພາະບາບຊຶ່ງເຂົາໄດ້ກະທຳນັ້ນ ເຄື່ອງບູ
ຊານັ້ນຈະເປັນສັດໂຕແມ່ຈາກຝູງ ຄືລູກແກະຫລືແບ້ ກໍເປັນເຄື່ອງບູຊາໄຖ່ບາບໄດ້ ດັ່ງນີ້ປະໂຣຫິດຈະທຳການ
ລຶບມົນທິນບາບໃຫ້ເຂົາ ເພາະເຂົາທຳບາບ
7 "ຖ້າເຂົາບໍ່ສາມາດຖວາຍລູກແກະຕົວນຶ່ງ ກໍໃຫ້ເຂົານຳນົກເຂົາສອງຕົວ ຫລືນົກກາງແກສອງຕົວ ນົກຕົວນຶ່ງເປັນ
ເຄື່ອງບູຊາໄຖ່ບາບ ແລະນົກອີກຕົວນຶ່ງເປັນເຄື່ອງເຜົາບູຊາ ໃຫ້ເປັນເຄື່ອງບູຊາໄຖ່ບາບກັມຖວາຍແດ່ພຣະຜູ້
ເປັນເຈົ້າ ລ້າງຄວາມຜິດທີ່ເຂົາໄດ້ກະທຳໄປ
8 ໃຫ້ເຂົານຳນົກທັງສອງນີ້ມາໃຫ້ປະໂຣຫິດ ປະໂຣຫິດກໍຖວາຍນົກຕົວນຶ່ງເປັນເຄື່ອງບູຊາໄຖ່ບາບ ໃຫ້ເຂົາບິດຫົວ
ນົກຫລຸດຈາກຄໍແຕ່ຢ່າໃຫ້ຂາດ
9 ແລະໃຫ້ເອົາເລືອດເຄື່ອງບູຊາໄຖ່ບາບຊິດໃສ່ທີ່ຂ້າງແທ່ນເສັງ ສ່ວນເລືອດທີ່ເຫລືອຢູ່ປ່ອຍໃຫ້ໄຫລອອກຈາ
ກທີ່ຖານແທ່ນ ນີ້ເປັນເຄື່ອງບູຊາໄຖ່ບາບ
10 ແລ້ວເຂົາຈະຖວາຍນົກຕົວທີສອງເປັນເຄື່ອງເຜົາບູຊາຕາມກົດຫມາຍ ແລະປະໂຣຫິດຈະທຳການລຶບມົນທິນ
ບາບຂອງເຂົາຊຶ່ງເຂົາໄດ້ກະທຳໄປ ແລະເຂົາຈະໄດ້ຮັບການອະພັຍ
11 "ແຕ່ຖ້າເຂົາຍັງບໍ່ສາມາດທີ່ຈະນຳນົກເຂົາສອງຕົວ ຫລືນົກກາງແກຫນຸ່ມສອງຕົວມາ ກໍໃຫ້ເຂົານຳເຄື່ອງບູຊາ
ໄຖ່ບາບຊຶ່ງເຂົາໄດ້ກະທຳນັ້ນມາ ຄືຍອດແປ້ງນຶ່ງໃນສິບເອຟາ ເອົາມາເປັນເຄື່ອງບູຊາໄຖ່ບາບ ຢ່າໃສ່ນ້ຳມັນ
ຫລືໃສ່ເຄື່ອງກຳຍານໃນແປ້ງ ເພາະເປັນເຄື່ອງບູຊາໄຖ່ບາບ
12 ໃຫ້ເຂົານຳແປ້ງມາໃຫ້ປະໂຣຫິດ ແລະປະໂຣຫິດຈະເອົາແປ້ງກຳມືນຶ່ງເປັນສ່ວນອະນຸສອນ ແລະເຜົາເສັງເທິງ
ແທ່ນເທິງເຄື່ອງເຜົາບູຊາດ້ວຍໄຟຖວາຍແດ່ພຣະຜູ້ເປັນເຈົ້າ ເປັນເຄື່ອງບູຊາໄຖ່ບາບ
13 ຢ່າງນີ້ແຫລະ ປະໂຣຫິດຈະທຳການລຶບມົນທິນບາບຂອງເຂົາ ຊຶ່ງເຂົາໄດ້ກະທຳໃນເຣື່ອງນຶ່ງເຣື່ອງໃດທີ່ກ່າວມາ
ນີ້ ແລະເຂົາຈະໄດ້ຮັບການອະພັຍ ສ່ວນທີ່ເຫລືອນັ້ນຈະເປັນຂອງປະໂຣຫິດ ເຊັ່ນດຽວກັບເຄື່ອງຖວາຍພືດພັນ
ເປັນເມັດ"

**ເຄື່ອງບູຊາໄຖ່ບາບກັມ**

Offerings with Restitution

14 ພຣະເຈົ້າສັ່ງກັບໂມເຊວ່າ,
15 "ຖ້າຜູ້ໃດທຳການບໍ່ຊື່ສັດ ແລະທຳບາບໂດຍບໍ່ຮູ້ຕົວໃນເຣື່ອງຂອງບໍຣິສຸດແຫ່ງພຣະເຈົ້າ ໃຫ້ຜູ້ນັ້ນນຳແກະ
ໂຕເຖິກທີ່ປາສຈາກຕຳຫນິເປັນເຄື່ອງບູຊາໄຖ່ບາບກັມຖວາຍແດ່ພຣະເຈົ້າ ໃຫ້ເຈົ້າຕີຣາຄາເປັນເງິນເຊເກລ
ຕາມເຊເກລຂອງສະຖານນະ
ມັສການ ເປັນເຄື່ອງບູຊາໄຖ່ກັມບາບ
16 ແລະໃຫ້ຜູ້ນັ້ນຊົດໃຊ້ຂອງບໍຣິສຸດທີ່ຂາດໄປ ແລະເພີ້ມອີກນຶ່ງໃນຫ້າຂອງຣາຄາສິ່ງທີ່ຂາດໄປນັ້ນ ນຳມອບໃຫ້
ແກ່ປະໂຣຫິດ ແລະປະໂຣຫິດຈະທຳການລຶບມົນທິນບາບຂອງເຂົາດ້ວຍແກະເຖິກ ທີ່ຖວາຍເປັນເຄື່ອງບູຊາໄຖ່
ກັມບາບ ແລະເຂົາຈະໄດ້ຮັບການອະພັຍ
17 "ຖ້າຜູ້ໃດກະທຳຜິດ ຄືກະທຳສິ່ງທີ່ພຣະເຈົ້າຊົງບັນຊາບໍ່ໃຫ້ກະທຳ ເຖິງແມ່ນວ່າເຂົາກະທຳໂດຍບໍ່ຮູ້ເທົ່າເຖິງ
ການເຂົາກໍມີຄວາມຜິດຈະຕ້ອງຮັບໂທດ
18 ໃຫ້ຜູ້ນັ້ນນຳແກະເຖິກທີ່ປາສຈາກຕຳຫນິມາຈາກຝູງ ໃຫ້ເຈົ້າຕີຣາຄາ ເປັນຣາຄາເຄື່ອງບູຊາໄຖ່ກັມບາບ ແລະ
ໃຫ້ປະໂຣຫິດທຳການລຶບມົນທິນບາບຂອງເຂົາຕາມຄວາມຜິດຊຶ່ງເຂົາໄດ້ກະທຳດ້ວຍບໍ່ໄດ້ເຈຕນານັ້ນ ແລະ
ເຂົາຈະໄດ້ຮັບການອະພັຍ
19 ເປັນເຄື່ອງບູຊາໄຖ່ກັມບາບ ເພາະເຂົາໄດ້ກະທຳກັມບາບຕໍ່ພຣະເຈົ້າ"

# 6

Chapter 6

1 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ,

2 "ຜູ້ໃດເຮັດບາບແລະເຮັດການບໍ່ຊື່ສັດຕໍ່ພຣະຜູ້ເປັນເຈົ້າ ດ້ວຍການຫລອກລວງເພື່ອນບ້ານໃນເຣື່ອງການຝາກ
ຫລືການປະກັນ ຫລືທາງການໂຈຣະກັມ ຫລືຖ້າເຂົາໄດ້ບີບບັງຄັບເພື່ອນບ້ານ

3 ຫລືພົບສິ່ງທີ່ຫາຍໄປແລ້ວແຕ່ບໍ່ຍອມຮັບ ສາບານຕົນເປັນຄວາມເທັດ ຫລືກະທຳສິ່ງໃດທີ່ຄົນກະທຳຜິດ

4 ເມື່ອຜູ້ໃດໄດ້ເຮັດບາບ ແລະມີບາບກັມແລ້ວ ກໍໃຫ້ຜູ້ນັ້ນຄືນຂອງໄດ້ມາທາງໂຈຣະກັມນັ້ນເສັຽ ຫລືສິ່ງໃດທີ່ເຂົາ
ໄດ້ມາດ້ວຍການບີບບັງຄັບ ຫລືສິ່ງທີ່ຝາກເຂົາໄວ້ ຫລືສິ່ງສູນຫາຍທີ່ເຂົາໄດ້ພົບເຂົ້າ

5 ຫລືສິ່ງໃດໆທີ່ໄດ້ສາບານເທັດໄວ້ ເຂົາຕ້ອງຄືນໃຫ້ເຕັມຕາມຈຳນວນ ແລະຈົ່ງເພີ້ມອີກນຶ່ງໃນຫ້າ ແລະມອບໃຫ້
ແກ່ເຈົ້າຂອງໃນວັນທີ່ເຂົາຖວາຍເຄື່ອງບູຊາໄຖ່ກັມບາບ

6 ໃຫ້ຜູ້ນັ້ນນຳແກະໂຕເຖິກທີ່ບໍ່ມີຕຳໜິມາຈາກຝູງເປັນເຄື່ອງບູຊາໄຖ່ບາບກັມຖວາຍແດ່ພຣະເຈົ້າ ມາມອບໃຫ້
ປະໂຣຫິດ ໃຫ້ເຈົ້າຕີຣາຄາເອງເປັນຣາຄາເຄື່ອງບູຊາໄຖ່ບາບກັມ

7 ແລະໃຫ້ປະໂຣຫິດເຮັດການລຶບມົນທິນບາບຂອງເຂົາຕໍ່ພຣະພັກພຣະເຈົ້າ ແລະເຂົາຈະໄດ້ຮັບການອະພັຍໃນ
ທຸກສິ່ງທີ່ເຂົາໄດ້ກະທຳໄປຊຶ່ງໃຫ້ຮັບບາບກັມ"

**ກົດອື່ນໆຂອງການຖວາຍບູຊາ**

Instructions concerning Sacrifice

8 ພຣະເຈົ້າຊົງບອກກັບໂມເຊວ່າ,

9 "ຈົ່ງບັນຊາແກ່ອາໂຣນ ແລະບຸດຂອງເຂົາວ່າ ຕໍ່ໄປນີ້ເປັນກົດເຣື່ອງເຄື່ອງເຜົາບູຊາ ເຄື່ອງເຜົາບູຊານັ້ນຈະຕ້ອງ
ເຜົາຢູ່ເທິງແທ່ນຕລອດຄືນຈົນຮຸ່ງເຊົ້າ ຈົ່ງໃຫ້ໄຟເທິງແທ່ນເຜົາເຄື່ອງບູຊາລຸກຢູ່ເລື້ອຍໄປ

10 ໃຫ້ປະໂຣຫິດນຸ່ງເສື້ອຜ້າປ່ານແລະນຸ່ງສົ້ງຜ້າປ່ານ ແລະໃຫ້ຕັກຂີ້ເທົ່າອອກຈາກໄຟທີ່ໄຫມ້ເຄື່ອງເຜົາບູຊາຢູ່ເທິງ
ແທ່ນນຳໄປໄວ້ຂ້າງແທ່ນ

11 ໃຫ້ຖອດເສື້ອທີ່ນຸ່ງຢູ່ອອກແລ້ວ ສວມເສື້ອອີກໂຕນຶ່ງ ນຳຂີ້ເທົ່າອອກໄປນອກຄ້າຍຍັງທີ່ສະອາດ

12 ໃຫ້ຮັກສາໄຟທີ່ເທິງແທ່ນໃຫ້ລຸກຢູ່ ຢ່າໃຫ້ໄຟນັ້ນມອດ ໃຫ້ປະໂຣຫິດໃສ່ຟືນທຸກເຊົ້າແລະໃຫ້ຮຽງເຄື່ອງເຜົາບູຊາ
ໃຫ້ເປັນລະບຽບໄວ້ເທິງແທ່ນ ແລະເຜົາໄຂມັນຂອງເຄື່ອງສານຕິບູຊາເທິງນັ້ນ

13 ຕ້ອງຮັກສາໃຫ້ໄຟຕິດຢູ່ເທິງແທ່ນເລື້ອຍໄປ ຢ່າໃຫ້ມອດເປັນອັນຂາດ

14 "ຕໍ່ໄປນີ້ເປັນກົດຂອງການຖວາຍທັນຍາບູຊາ ໃຫ້ບຸດອາໂຣນຖວາຍເຄື່ອງບູຊານີ້ຕໍ່ພຣະພັກພຣະເຈົ້າທີ່ຫນ້າ
ແທ່ນບູຊາ

15 ໃຫ້ປະໂຣຫິດຄົນນຶ່ງຫຍິບຍອດແປ້ງກຳມືນຶ່ງມາຈາກທັນຍາບູຊາ ປົນໃສ່ນ້ຳມັນແລະເຄື່ອງກຳຍານທັງຫມົດຊຶ່ງ
ຢູ່ເທິງທັນຍາບູຊາ ແລະເຜົາສ່ວນນີ້ເທິງແທ່ນເປັນສ່ວນອະນຸສອນ ເປັນກິ່ນທີ່ພໍພຣະທັຍແດ່ພຣະເຈົ້າ

16 ສ່ວນທີ່ເຫລືອຢູ່ໃຫ້ອາໂຣນ ແລະບຸດຂອງເຂົາຮັບປະທານ ໃຫ້ເປັນເຂົ້າຈີ່ທີ່ບໍ່ມີເຊື້ອແປ້ງຮັບປະທານໃນສະ
ຖານສັກສິດ ໃຫ້ຮັບປະທານໃນເດີ່ນຂອງເຕັນນັດພົບ

17 ຢ່າໃສ່ເຊື້ອແປ້ງໃນເຂົ້າຈີ່ນັ້ນແລ້ວປີ້ງ ເຮົາໄດ້ໃຫ້ສ່ວນນີ້ເປັນສ່ວນເຄື່ອງບູຊາດ້ວຍໄຟຂອງເຮົາອັນຕົກແກ່ເຂົາ
ເປັນສິ່ງບໍຣິສຸດທີ່ສຸດເຊັ່ນດຽວກັບເຄື່ອງບູຊາໄຖ່ບາບ ແລະເຄື່ອງບູຊາໄຖ່ບາບກັມ

18 ໃຫ້ບຸດທັງຫລາຍຂອງອາໂຣນຮັບປະທານສິ່ງນີ້ ເປັນກົດຖາວອນຕລອດຊົ່ວຊາດເຊື້ອສາຍຂອງເຈົ້າ ຈາກເຄື່ອງ
ບູຊາດ້ວຍໄຟຂອງພຣະເຈົ້າ ຜູ້ໃດທີ່ຖືກຕ້ອງສິ່ງເຫລົ່ານີ້ຈະບໍຣິສຸດ"

19 ພຣະເຈົ້າຊົງບອກກັບໂມເຊວ່າ,

20 “ຕໍ່ໄປນີ້ເປັນເຄື່ອງບູຊາທີ່ອາໂຣນແລະບຸດທັງຫລາຍຂອງເຂົາຈະຕ້ອງຖວາຍແດ່ພຣະເຈົ້າໃນວັນທີ່ເຂົາຮັບການເຈີມ ຄືຍອດແປ້ງນຶ່ງໃນສິບເອຟາເປັນທັນຍາບູຊາປະຈຳໃຫ້ຖວາຍຕອນເຊົ້າເຄິ່ງນຶ່ງ ຕອນແລງເຄິ່ງນຶ່ງ

21 ໃຫ້ປັ້ນໃສ່ກັບນ້ຳມັນໃຫ້ເຂົ້າກັນດີແລ້ວຈີ່ນເທິງເຫລັກ ເຮັດເປັນແຜ່ນເຫມືອນທັນຍາບູຊາ ແລ້ວຖວາຍເປັນກິ່ນພໍພຣະທັຍແດ່ພຣະເຈົ້າ

22 ໃຫ້ປະໂຣຫິດຈາກບັນດາບຸດຂອງອາໂຣນຜູ້ຮັບການເຈີມຕັ້ງແທນເຂົາ ໃຫ້ຖວາຍສິ່ງນີ້ແດ່ພຣະເຈົ້າເປັນກົດສືບໄປເປັນນິດ ໃຫ້ເຜົາເຄື່ອງບູຊາທັງຫມົດເສັຽ

23 ທັນຍາບູຊາຂອງປະໂຣຫິດທຸກຢ່າງໃຫ້ເຜົາເສັຽໃຫ້ຫມົດ ຢ່າໃຫ້ຮັບປະທານ

24 ພຣະເຈົ້າຊົງບອກກັບໂມເຊວ່າ,

25 “ຈົ່ງກ່າວແກ່ອາໂຣນແລະບຸດຂອງເຂົາວ່າ ຕໍ່ໄປນີ້ເປັນກົດຂອງການຖວາຍເຄື່ອງບູຊາໄຖ່ບາບ ໃຫ້ຂ້າສັດທີ່ເປັນເຄື່ອງບູຊາໄຖ່ບາບໃນບ່ອນທີ່ຂ້າສັດ ອັນເປັນເຄື່ອງເຜົາບູຊາຕໍ່ພຣະພັກພຣະເຈົ້າ ເປັນຂອງບໍຣິສຸດທີ່ສຸດ

26 ໃຫ້ປະໂຣຫິດຜູ້ຖວາຍບູຊາໄຖ່ບາບຮັບປະທານສັດນັ້ນ ໃຫ້ເຂົາຮັບປະທານໃນສະຖານສັກສິດໃນເດີ່ນເຕັນນັດພົບ

27 ສິ່ງໃດທີ່ແຕະຕ້ອງຊີ້ນສັດນັ້ນຈະບໍຣິສຸດ ແລະເມື່ອປະພົມມີເລືອດຕິດເສື້ອ ກໍໃຫ້ຊັກເສື້ອສ່ວນທີ່ຕິດເລືອດນັ້ນໃນສະຖານສັກສິດ

28 ຈົ່ງທຳລາຍພາຊນະດິນທີ່ໃຊ້ຕົ້ມຊີ້ນນັ້ນເສັຽ ຖ້າຕົ້ມໃນພາຊນະທອງສຳຣິດກໍໃຫ້ຂັດແລະລ້າງດ້ວຍນ້ຳ

29 ຜູ້ຊາຍທຸກຄົນທີ່ເປັນປະໂຣຫິດຮັບປະທານໄດ້ ເປັນຂອງບໍຣິສຸດທີ່ສຸດ

30 ແຕ່ເຄື່ອງບູຊາໄຖ່ບາບ ຊຶ່ງປະໂຣຫິດນຳເລືອດໄປໃນເຕັນນັດພົບ ເພື່ອທຳການລົບມົນທິນໃນສະຖານສັກສິດນັ້ນຢ່າຮັບປະທານເລີຍ ຕ້ອງເຜົາໄຟເສັຽ

## 7

Chapter 7

1 ຕໍ່ໄປນີ້ເປັນກົດເຣື່ອງເຄື່ອງບູຊາໄຖ່ບາບກັມ ເປັນສິ່ງບໍຣິສຸດທີ່ສຸດ

2 ໃຫ້ຂ້າສັດອັນເປັນເຄື່ອງບູຊາໄຖ່ບາບກັມໃນບ່ອນທີ່ຂ້າສັດອັນເປັນເຄື່ອງເຜົາບູຊາ ແລະໃຫ້ເອົາເລືອດສັດນັ້ນຊິດໃສ່ທີ່ແທ່ນແລະຮອບແທ່ນ

3 ແລະໃຫ້ເອົາໄຂມັນຂອງສັດນັ້ນຖວາຍບູຊາເສັຽທັງຫມົດດ້ວຍ ຫາງມັນໆ ໄຂມັນທີ່ຫຸ້ມເຄື່ອງໃນ

4 ຫມາກໄຂ່ຫລັງສອງອັນພ້ອມກັບໄຂມັນທີ່ຕິດຢູ່ຊີ່ບັ້ນແອວ ແລະສ່ວນດີທີ່ສຸດຂອງຕັບ ຊຶ່ງຕ້ອງເອົາອອກພ້ອມກັບຫມາກໄຂ່ຫລັງ

5 ໃຫ້ປະໂຣຫິດເຜົາສິ່ງເຫລົ່ານີ້ເທິງແທ່ນເປັນເຄື່ອງບູຊາດ້ວຍໄຟຖວາຍແດ່ພຣະຜູ້ເປັນເຈົ້າ ເປັນເຄື່ອງບູຊາໄຖ່ບາບກັມ

6 ຜູ້ຊາຍທຸກຄົນທີ່ເປັນປະໂຣຫິດຮັບປະທານໄດ້ ໃຫ້ຮັບປະທານໃນສະຖານບໍຣິສຸດ ເປັນຂອງບໍຣິສຸດທີ່ສຸດ

7 ເຄື່ອງບູຊາໄຖ່ບາບກັມກໍເຫມືອນເຄື່ອງບູຊາໄຖ່ບາບ ມີກົດຢ່າງດຽວກັນ ປະໂຣຫິດຜູ້ໃຊ້ເຄື່ອງບູຊາທຳການລົບມົນທິນຈະໄດ້ເຄື່ອງບູຊານັ້ນ

8 ປະໂຣຫິດຄົນໃດຖວາຍເຄື່ອງເຜົາບູຊາຂອງຜູ້ໃດ ປະໂຣຫິດຜູ້ນັ້ນຍ່ອມໄດ້ຫນັງຂອງເຄື່ອງເຜົາບູຊາທີ່ຕົນຖວາຍ

9 ເຄື່ອງທັນຍາບູຊາທຸກຢ່າງທີ່ປີ້ງໃນເຕົາອົບ ແລະສິ່ງທັງຫມົດຊຶ່ງຕຽມໃນກະທະຫລືທີ່ເຫລັກໃຫ້ຕົກເປັນຂອງປະໂຣຫິດຜູ້ຖວາຍຂອງເຫລົ່ານັ້ນ

10 ທັນຍາບູຊາທຸກຢ່າງທີ່ປົນນ້ຳມັນຫລືບໍ່ປົນຈະຕົກເປັນຂອງບຸດອາໂຣນທົ່ວກັນ

Further Instructions

11 "ຕໍ່ໄປນີ້ເປັນກົດເຣື່ອງເຄື່ອງສານຕິບູຊາຊຶ່ງຜູ້ນຶ່ງຜູ້ໃດນຳມາຖວາຍແດ່ພຣະຜູ້ເປັນເຈົ້າ

12 ຖ້າເຂົາຖວາຍເປັນເຄື່ອງໂມທະນາພຣະຄຸນ ກໍໃຫ້ເຂົາຖວາຍເຂົ້າຈີ່ບໍ່ມີເຊື້ອແປ້ງປົນໃສ່ກັບນໍ້າມັນ ເຂົ້າໜົມເປັນແຜ່ນບໍ່ມີເຊື້ອແປ້ງທານໍ້າມັນ ເຂົ້າໜົມຍອດແປ້ງປົນນໍ້າມັນໃຫ້ດີພ້ອມກັບເຄື່ອງບູຊາໂມທະນາ

13 ໃຫ້ເຂົານຳເຂົ້າຈີ່ໃສ່ເຊື້ອແປ້ງມາຖວາຍເປັນສ່ວນຂອງເຄື່ອງບູຊາພ້ອມກັບສັດອັນເປັນເຄື່ອງສານຕິບູຊາທີ່ຖວາຍເປັນການໂມທະນາພຣະຄຸນ

14 ໃຫ້ເຂົາຖວາຍຂອງບູຊາເຫລົ່ານີ້ຢ່າງລະກ້ອນແດ່ພຣະຜູ້ເປັນເຈົ້າ ຊຶ່ງເປັນສ່ວນທີ່ຕົກແກ່ປະໂຣຫິດຜູ້ເອົາເລືອດສານຕິບູຊາໄປຊິດໃສ່ແທ່ນບູຊາ

15 ສ່ວນຊີ້ນສັຕເຄື່ອງສານຕິບູຊາເພື່ອໂມທະນາພຣະຄຸນນັ້ນ ເຂົາຈະຕ້ອງຮັບປະທານເສັຽໃນວັນທຳການຖວາຍບູຊາ ຢ່າເຫລືອໄວ້ຈົນເຖິງຮຸ່ງເຊົ້າເລີຍ

16 ຖ້າເຄື່ອງບູຊານັ້ນເປັນເຄື່ອງບູຊາແກ້ບົນ ຫລືເປັນເຄື່ອງບູຊາຕາມໃຈສມັກໃຫ້ເຂົາຮັບປະທານເສັຽໃນວັນທຳການຖວາຍບູຊາ ແລະໃນວັນຮຸ່ງຂຶ້ນເຂົາຍັງຮັບປະທານສ່ວນທີ່ເຫລືອໄດ້

17 ສ່ວນຊີ້ນຂອງເຄື່ອງບູຊາທີ່ເຫລືອເຖິງວັນທີສາມໃຫ້ເຜົາເສັຽດ້ວຍໄຟ

18 ຖ້າຜູ້ໃດຮັບປະທານຊີ້ນສັດອັນເປັນເຄື່ອງສານຕິບູຊາໃນວັນທີສາມ ຜູ້ຖວາຍນັ້ນຈະບໍ່ເປັນທີ່ໂປດປານ ແລະບໍ່ຊົງຖືວ່າ ເຄື່ອງບູຊານັ້ນເປັນທີ່ພໍພຣະທັຍ ເປັນການກະທຳທີ່ໜ້າລັງກຽດແລະຜູ້ທີ່ຮັບປະທານຈະຕ້ອງໄດ້ຮັບໂທດ

19 "ຊີ້ນທີ່ໄປຖືກຂອງທີ່ເປັນມົນທິນໃດໆຢ່າຮັບປະທານ ຈົ່ງເຜົາເສັຽດ້ວຍໄຟ ຜູ້ໃດທີ່ສະອາດທຸກຄົນຮັບປະທານຊີ້ນໄດ້

20 ຖ້າຜູ້ໃດຮັບປະທານຊີ້ນສັດບູຊາອັນເປັນສານຕິບູຊາແດ່ພຣະຜູ້ເປັນເຈົ້າໂດຍທີ່ຕົນຍັງມີມົນທິນຕິດຕົວຢູ່ ຕ້ອງຕັດຂາດຜູ້ນັ້ນເສັຽຈາກປະຊາຊົນ (ຈະບໍ່ມີໄດ້ມີຊື່ວ່າເປັນປະຊາຊົນຂອງພຣະເຈົ້າອີກຕໍ່ໄປ)

21 ຖ້າຜູ້ໃດແຕະຕ້ອງສິ່ງທີ່ເປັນມົນທິນ ບໍ່ວ່າຈະເປັນມົນທິນຂອງຄົນ ຫລືເປັນສັດທີ່ມົນທິນ ຫລືເປັນສິ່ງທີ່ໜ້າລັງກຽດອັນໃດທີ່ມີມົນທິນ ແລະຜູ້ນັ້ນມາຮັບປະທານຊີ້ນເຄື່ອງບູຊາຂອງສານຕິບູຊາແດ່ພຣະຜູ້ເປັນເຈົ້າ ໃຫ້ຕັດຂາດຜູ້ນັ້ນເສັຽຈາກຊົນຊາດຂອງຕົນ"

22 ພຣະຜູ້ເປັນເຈົ້າຊົງກ່າວກັບໂມເຊວ່າ,

23 "ຈົ່ງກ່າວແກ່ຄົນອິສຣາເອນວ່າ ເຈົ້າທັງຫລາຍຢ່າຮັບປະທານໄຂມັນຂອງງົວ ຂອງແກະ ຫລືຂອງແບ້

24 ໄຂມັນຂອງສັດທີ່ຕາຍເອງ ແລະໄຂມັນຂອງສັດ ທີ່ສັດກັດຕາຍຈະນຳໄປໃຊ້ຢ່າງອື່ນກໍໄດ້ ແຕ່ຢ່າຮັບປະທານເລີຍເປັນອັນຂາດ

25 ຖ້າຜູ້ໃດຮັບປະທານໄຂມັນສັດອັນເປັນເຄື່ອງບູຊາດ້ວຍໄຟຖວາຍແດ່ພຣະຜູ້ເປນັເຈົ້າ ໃຫ້ຕັດຂາດຜູ້ນັ້ນເສັຽຈາກຊົນຊາດຂອງຕົນ

26 ນອກຈາກນີ້ ເຈົ້າຢ່າຮັບປະທານເລືອດເລີຍ ບໍ່ວ່າເລືອດນົກຫລືເລືອດສັດໃນທີ່ໃດໆທີ່ເຈົ້າອາໄສຢູ່

27 ຜູ້ໃດຮັບປະທານເລືອດຢ່າງໃດໆໃຫ້ຕັດຂາດຜູ້ນັ້ນເສັຽຈາກຊົນຊາດຂອງຕົນ"

28 ພຣະຜູ້ເປັນເຈົ້າຊົງກ່າວກັບໂມເຊວ່າ,

29 "ຈົ່ງກ່າວແກ່ຄົນອິສຣາເອນວ່າ ຜູ້ໃດຈະຖວາຍສັຕບູຊາອັນເປັນສານຕິບູຊາແດ່ພຣະຜູ້ເປັນເຈົ້າ ໃຫ້ຜູ້ນັ້ນນຳເຄື່ອງບູຊາຂອງເຂົາມາຖວາຍແດ່ພຣະຜູ້ເປັນເຈົ້າ ຈາກສັຕບູຊາອັນເປັນສານຕິບູຊາຂອງເຂົາ

30 ໃຫ້ເຂົານຳເຄື່ອງຖວາຍບູຊາດ້ວຍໄຟແດ່ພຣະຜູ້ເປັນເຈົ້າມາດ້ວຍຕົນເອງ ໃຫ້ເຂົານຳໄຂມັນມາພ້ອມກັບຊີ້ນໜ້າເອິກນັ້ນ ເພື່ອເອົາຊີ້ນໜ້າເອິກນັ້ນທຳພິທີຍື່ນຖວາຍເປັນເຄື່ອງຍື່ນບູຊາຖວາຍແດ່ພຣະຜູ້ເປັນເຈົ້າ

31 ໃຫ້ປະໂຣຫິດເຜົາໄຂມັນເສັຽເທິງແທ່ນບູຊາ ແຕ່ຊີ້ນໜ້າເອິກນັ້ນຕົກເປັນຂອງອາໂຣນແລະບຸດຂອງເຂົາ

32 ແຕ່ຂາຂວາຂອງສັດນັ້ນເຈົ້າຈົ່ງໃຫ້ປະໂຣຫິດເປັນສ່ວນຖວາຍຈາກເຄື່ອງບູຊາແຫ່ງສານຕິບູຊາ
33 ບຸດອາໂຣນຜູ້ທຳພິທີຖວາຍເລືອດແຫ່ງສານຕິບູຊາແລະໄຂມັນຈະໄດ້ຮັບຂາຂວາເປັນສ່ວນຂອງເຂົາ
34 ເພາະວ່າຊີ້ນຫນ້າເອິກທີ່ຍື່ນຖວາຍ ແລະຊີ້ນຂາທີ່ຖວາຍນັ້ນເຮົາໄດ້ເອົາຈາກຄົນອິສຣາເອນຈາກເຄື່ອງສານຕິບູ
ຊາຂອງເຂົາ ແລະເຮົາໄດ້ມອບໃຫ້ແກ່ອາໂຣນປະໂຣຫິດແລະບຸດຂອງເຂົາ ເປັນສ່ວນໄດ້ອັນຖາວອນຈາກຄົນ
ອິສຣາເອນ
35 ນີ້ເປັນສ່ວນຂອງອາໂຣນແລະບຸດຂອງເຂົາ ໄດ້ຈາກເຄື່ອງບູຊາດ້ວຍໄຟຖວາຍແດ່ພຣະຜູ້ເປັນເຈົ້າ ມອບຫມາຍ
ໃຫ້ແກ່ເຂົາທັງຫລາຍໃນວັນທີ່ເຂົາທັງຫລາຍຖືກຖວາຍໄວ້ເປັນປະໂຣຫິດປົວຣະບັດພຣະຜູ້ເປັນເຈົ້າ
36 ພຣະຜູ້ເປັນເຈົ້າຊົງສັ່ງຄົນອິສຣາເອນໃຫ້ມອບສິ່ງເຫລົ່ານີ້ແກ່ເຂົາທັງຫລາຍ ໃນວັນທີ່ເຂົາທັງຫລາຍໄດ້ຮັບການ
ເຈີມເປັນປະໂຣຫິດ ເປັນສ່ວນໄດ້ອັນຖາວອນຕລອດຊົ່ວຊາດເຊື້ອສາຍຂອງເຂົາ”
37 ທັງຫມົດນີ້ເປັນກົດເຣື່ອງເຄື່ອງເຜົາບູຊາ ເຄື່ອງທັນຍາບູຊາ ເຄື່ອງໄຖ່ບາບ ເຄື່ອງບູຊາໄຖ່ກັມບາບ ພິທີຊຳຣະ
ໃຫ້ບໍຣິສຸດ ແລະເຄື່ອງສານຕິບູຊາ
38 ຊຶ່ງພຣະຜູ້ເປັນເຈົ້າບັນຊາໂມເຊເທິງພູເຂົາຊີນາອີ ໃນວັນທີ່ພຣະອົງຊົງບັນຊາຄົນອິສຣາເອນໃຫ້ນຳເຄື່ອງບູຊາ
ມາຖວາຍແດ່ພຣະຜູ້ເປັນເຈົ້າໃນຖິ່ນກັນດານຊີນາອີ

## 8 ອາໂຣນແລະບຸດຂອງທ່ານຖວາຍຕົວ

The Rites of Ordination

(ອພຍ 29:1-37)

1 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ,
2 “ຈົ່ງນຳອາໂຣນແລະບຸດຂອງເຂົາມາພ້ອມກັບເສື້ອຍົດ ນ້ຳມັນເຈີມ ງົວອັນເປັນເຄື່ອງບູຊາໄຖ່ບາບ ແກະເຖິກ
ສອງໂຕ ຖາດເຂົ້າຈີ່ທີ່ບໍ່ມີເຊື້ອແປ້ງ
3 ແລະຈົ່ງເອີ້ນຊຸມນຸມຊົນທັງຫມົດໃຫ້ປະຊຸມກັນທີ່ປະຕູເຕັນນັດພົບ”
4 ແລະໂມເຊກໍກະທຳດັ່ງທີ່ພຣະຜູ້ເປັນເຈົ້າຊົງບັນຊາແກ່ທ່ານ ແລະຊຸມນຸມຊົນກໍປະຊຸມກັນທີ່ປະຕູເຕັນນັດພົບ
5 ໂມເຊກ່າວແກ່ຊຸມນຸມຊົນວ່າ, “ຕໍ່ໄປນີ້ເປັນສິ່ງຊຶ່ງພຣະຜູ້ເປັນເຈົ້າຊົງບັນຊາໃຫ້ກະທຳ”
6 ໂມເຊກໍນຳອາໂຣນແລະບຸດທັງຫລາຍຂອງເຂົາມາຊຳຣະກາຍດ້ວຍນ້ຳ
7 ແລ້ວສວມເສື້ອໃຫ້ແລະເອົາຜ້າມັດແອວໃຫ້ ແລ້ວສວມເສື້ອໃນໃຫ້ ແລະສວມເອໂຟດໃຫ້ເຂົາເອົາຜ້າຮັດແອວ
ຂອງເອໂຟດທີ່ເຮັດດ້ວຍຜ້າປ່ານຢ່າງດີຮັດແອວໃຫ້ ຜູກເອໂຟດໃຫ້ຕິດເຂົາໄວ້
8 ແລະໂມເຊສວມແຜ່ນຮອງເອິກໃຫ້ອາໂຣນ ແລະໃສ່ອູຣິມກັບທຸມມີມ ໄວ້ໃນນັ້ນດ້ວຍ
9 ແລະສວມຜ້າມາລາໄວ້ເທິງຫົວ ແລະຕິດແຜ່ນທອງຄຳອັນເປັນມົງກຸດທີ່ຜ້າມາລາດ້ານຫນ້າ ດັ່ງທີ່ພຣະຜູ້ເປັນ
ເຈົ້າຊົງບັນຊາໂມເຊໄວ້ນັ້ນ
10 ແລ້ວໂມເຊນຳນ້ຳມັນເຈີມມາເຈີມເຕັນແລະທຸກສິ່ງທີ່ຢູ່ໃນນັ້ນ ຊຳຣະໃຫ້ເປັນຂອງບໍຣິສຸດ
11 ແລະທ່ານເອົານ້ຳມັນເຈີມຊິດໃສ່ເທິງແທ່ນເຈັດເທື່ອ ເຈີມແທ່ນແລະເຈີມພາຊນະປະຈຳແທ່ນທັງຫມົດ ເຈີມຂັນ
ແລະພານຮອງຂັນເພື່ອຊຳຣະໃຫ້ເປັນຂອງບໍຣິສຸດ
12 ແລະທ່ານເທນ້ຳມັນເຈີມລົງເທິງຫົວຂອງອາໂຣນແລະເຈີມເຂົາໄວ້ເພື່ອຊຳຣະໃຫ້ບໍຣິສຸດ
13 ແລະໂມເຊກໍນຳບຸດອາໂຣນເຂົ້າມາສວມເສື້ອແລ້ວຮັດສາຍແອວໃຫ້ ແລະສວມມາລາໃຫ້ ດັ່ງທີ່ພຣະຜູ້ເປັນ
ເຈົ້າຊົງບັນຊາໂມເຊໄວ້
14 ແລ້ວທ່ານຈຶ່ງນຳງົວອັນເປັນເຄື່ອງບູຊາໄຖ່ບາບເຂົ້າມາ ອາໂຣນແລະບຸດທັງຫລາຍຂອງເຂົາກໍເອົາມືຂອງຕົນ
ວາງເທິງຫົວງົວອັນເປັນເຄື່ອງບູຊາໄຖ່ບາບນັ້ນ

15 ໂມເຊກໍຂ້າງົວຕົວນັ້ນເສັຽ ເອົານິ້ວມືຈຸ່ມເລືອດໄປເຈີມໃສ່ຍອດທີ່ແຈແທ່ນ ຊ□າຣະແທ່ນໃຫ້ບໍຣິສຸດ ແລ້ວເທເລືອດທີ່ຖານຂອງແທ່ນ ຖວາຍແທ່ນໄວ້ເປັນສິ່ງບໍຣິສຸດ ເພື່ອທຳການລົບມົນທິນຂອງແທ່ນນັ້ນ

16 ແລະທ່ານນຳໄຂມັນທີ່ຢູ່ກັບເຄື່ອງໃນແລະສ່ວນດີທີ່ສຸດຂອງຕັບ ແລະຫມາກໄຂ່ຫລັງສອງອັນພ້ອມກັບໄຂມັນແລ້ວໂມເຊກໍເຜົາສິ່ງເຫລົ່ານີ້ເສັຽເທິງແທ່ນ

17 ແຕ່ງົວແລະຫນັງງົວ ກັບຊີ້ນແລະເຄື່ອງໃນໃສ້ພຸງຂອງມັນ ທ່ານເຜົາເສັຽດ້ວຍໄຟຂ້າງນອກຄ້າຍ ດັ່ງທີ່ພຣະຜູ້ເປັນເຈົ້າຊົງບັນຊາໂມເຊໄວ້

18 ແລ້ວທ່ານກໍນຳແກະເຖິກອັນເປັນເຄື່ອງເຜົາບູຊາເຂົ້າມາ ອາໂຣນກັບບຸດທັງຫລາຍຂອງເຂົາກໍເອົາມືຂອງຕົນວາງເທິງຫົວຂອງແກະເຖິກນັ້ນ

19 ໂມເຊກໍຂ້າແກະນັ້ນເສັຽ ເອົາເລືອດຊິດໃສ່ທີ່ແທ່ນແລະຮອບແທ່ນ

20 ເມື່ອເຂົາຟັນແກະອອກເປັນຕ່ອນໆ ໂມເຊກໍເຜົາຫົວແລະແກະຕ່ອນໆກັບໄຂມັນເສັຽ

21 ເມື່ອເອົານ້ຳລ້າງເຄື່ອງໃນແລະຂາແກະແລ້ວ ໂມເຊກໍເຜົາແກະທັງໂຕເທິງແທ່ນ ເປັນເຄື່ອງເຜົາບູຊາເປັນກິ່ນທີ່ພໍພຣະທັຍ ເປັນເຄື່ອງບູຊາດ້ວຍໄຟຖວາຍແດ່ພຣະຜູ້ເປັນເຈົ້າ ດັ່ງທີ່ພຣະຜູ້ເປັນເຈົ້າຊົງບັນຊາໂມເຊ

22 ທ່ານຈຶ່ງນຳແກະເຖິກອີກໂຕນຶ່ງນັ້ນເຂົ້າມາ ຄືແກະໂຕທີ່ເປັນເຄື່ອງສະຖາປະນາອາໂຣນແລະບຸດທັງຫລາຍຂອງເຂົາກໍເອົາມືຂອງຕົນວາງເທິງຫົວຂອງແກະເຖິກນັ້ນ

23 ໂມເຊກໍຂ້າແກະນັ້ນເສັຽ ເອົາເລືອດເຈີມທີ່ປາຍຫູຂ້າງຂວາຂອງອາໂຣນ ແລະທີ່ນິ້ວຫົວໂປ້ມືຂວາຂອງເຂົາ ແລະທີ່ນິ້ວຫົວໂປ້ຕີນຂວາຂອງເຂົາ

24 ແລ້ວກໍນຳບຸດທັງຫລາຍຂອງອາໂຣນເຂົ້າມາແລະໂມເຊເອົາເລືອດເຈີມທີ່ປາຍຫູຂ້າງຂວາ ທີ່ນິ້ວຫົວໂປ້ມືຂ້າງຂວາ ທີ່ນິ້ວຫົວໂປ້ຕີນຂ້າງຂວາຂອງເຂົາ ແລະໂມເຊເອົາເລືອດຊິດໃສ່ທີ່ແທ່ນແລະຮອບແທ່ນ

25 ແລ້ວທ່ານຈຶ່ງນຳໄຂມັນແລະຫາງມັນໆ ແລະໄຂມັນທັງຫມົດທີ່ຢູ່ກັບເຄື່ອງໃນ ແລະສ່ວນທີ່ດີທີ່ສຸດຂອງຕັບແລະຫມາກໄຂ່ຫລັງສອງອັນກັບໄຂມັນທີ່ຕິດຢູ່ ແລະຂາຂ້າງຂວາ

26 ແລະທ່ານຈັບເຂົ້າຫນົມທີ່ບໍ່ມີເຊື້ອແປ້ງກ້ອນນຶ່ງຈາກຖາດເຂົ້າຫນົມທີ່ບໍ່ມີເຊື້ອ ຊຶ່ງຢູ່ຕໍ່ພຣະພັກພຣະຜູ້ເປັນເຈົ້າແລະຈັບເຂົ້າຫນົມປິ້ນນ້ຳມັນກ້ອນນຶ່ງ ເຂົ້າຫນົມແຜ່ນອັນນຶ່ງ ວາງຂອງເຫລົ່ານີ້ໄວ້ເທິງໄຂມັນ ແລະເທິງຂາຂ້າງຂວາ

27 ທ່ານເອົາສິ່ງເຫລົ່ານີ້ວາງໄວ້ໃນມືຂອງອາໂຣນ ແລະມືຂອງບຸດທັງຫລາຍຂອງເຂົາ ແລະທຳພິທີຍື່ນເປັນເຄື່ອງຍື່ນຖວາຍແດ່ພຣະຜູ້ເປັນເຈົ້າ

28 ແລ້ວໂມເຊກໍຮັບຂອງເຫລົ່ານັ້ນມາຈາກມືຂອງເຂົາທັງຫລາຍແລະເຜົາເສັຽເທິງແທ່ນ ພ້ອມກັບເຄື່ອງເຜົາບູຊາເປັນເຄື່ອງສຳລັບການແຕ່ງຕັ້ງ ເປັນກິ່ນທີ່ພໍພຣະທັຍ ເປັນເຄື່ອງບູຊາດ້ວຍໄຟຖວາຍແດ່ພຣະຜູ້ເປັນເຈົ້າ

29 ແລະໂມເຊເອົາຊີ້ນເອິກທຳພິທີຍື່ນ ເປັນເຄື່ອງຍື່ນຖວາຍແດ່ພຣະຜູ້ເປັນເຈົ້າ ນີ້ເປັນແກະສະຖາປະນາສ່ວນຂອງໂມເຊ ດັ່ງທີ່ພຣະຜູ້ເປັນເຈົ້າຊົງບັນຊາໂມເຊ

30 ແລ້ວໂມເຊນຳນ້ຳມັນເຈີມແລະເລືອດຊຶ່ງຢູ່ເທິງແທ່ນ ປະພົມເທິງອາໂຣນແລະເຄື່ອງຍົດຂອງເຂົາ ແລະເທິງບຸດທັງຫລາຍ ກັບເທິງເສື້ອຂອງບຸດທັງຫລາຍຂອງເຂົາ ດັ່ງນີ້ແຫລະທ່ານກໍຊຳຣະອາໂຣນກັບເຄື່ອງຍົດຂອງເຂົາໃຫ້ບໍຣິສຸດ ບຸດທັງຫລາຍຂອງເຂົາກັບເຄື່ອງຍົດຂອງບຸດນັ້ນດ້ວຍ

31 ໂມເຊສັ່ງອາໂຣນແລະບຸດທັງຫລາຍຂອງເຂົາວ່າ, “ຈົ່ງຕົ້ມຊີ້ນເສັຽທີ່ປະຕູເຕັນນັດພົບ ແລະຮັບປະທານເສັຽທີ່ນັ້ນກັບເຂົ້າຫນົມຊຶ່ງຢູ່ໃນຖາດສຳລັບການແຕ່ງຕັ້ງ ດັ່ງທີ່ຂ້າພະເຈົ້າບັນຊາທ່ານໄວ້ ອາໂຣນແລະບຸດທັງຫລາຍຂອງເຂົາຈະຮັບປະທານ

32 ຊີ້ນແລະເຂົ້າຫນົມທີ່ເຫລືອນັ້ນທ່ານຈົ່ງເຜົາເສັຽດ້ວຍໄຟ

33 ແລະທ່ານທັງຫລາຍຢ່າອອກໄປນອກປະຕູເຕັນນັດພົບຕລອດເຈັດວັນຈົນກວ່າວັນກຳນົດສະຖາປະນາຂອງ
ທ່ານຈະຄົບ ເພາະທີ່ຈະສະຖາປະນາທ່ານນັ້ນກໍກິນເວລາເຈັດວັນ
34 ສິ່ງທີ່ໄດ້ກະທຳໃນວັນນີ້ ພຣະຜູ້ເປັນເຈົ້າຊົງບັນຊາໃຫ້ກະທຳເພື່ອລົບມົນທິນຂອງທ່ານ
35 ທ່ານຈົ່ງຢູ່ທີ່ປະຕູເຕັນນັດພົບທັງກາງເວັນແລະກາງຄືນຕລອດເຈັດວັນ ກະທຳກິດທີ່ພຣະຜູ້ເປັນເຈົ້າຊົງກຳຊັບ
ໄວ້ ຢ້ານວ່າທ່ານຈະຕ້ອງເຖິງຕາຍ ເພາະນີ້ເປັນສິ່ງທີ່ຂ້າພະເຈົ້າໄດ້ຮັບບັນຊາມາ"
36 ອາໂຣນກັບບຸດທັງຫລາຍຂອງເຂົາໄດ້ກະທຳຕາມທີ່ພຣະຜູ້ເປັນເຈົ້າຊົງບັນຊາທາງໂມເຊທຸກປະການ

## 9 ອາໂຣນຖວາຍເຄື່ອງສັກກາຣະບູຊາ

Aaron's Priesthood Inaugurated

1 ໃນວັນທີແປດໂມເຊກໍເອີ້ນອາໂຣນແລະບຸດທັງຫລາຍຂອງເຂົາ ແລະພວກຜູ້ໃຫຍ່ຂອງອິສຣາເອນ
2 ທ່ານກ່າວແກ່ອາໂຣນວ່າ, "ຈົ່ງນຳລູກງົວໂຕນຶ່ງເປັນເຄື່ອງບູຊາໄຖ່ບາບ ແລະແກະເຖິກໂຕນຶ່ງເປັນເຄື່ອງເຜົາບູ
ຊາ ທັງສອງຢ່າໃຫ້ມີຕຳໜິ ຈົ່ງຖວາຍບູຊາແດ່ພຣະຜູ້ເປັນເຈົ້າ
3 ແລະກ່າວແກ່ຄົນອິສຣາເອນວ່າ, "ຈົ່ງເອົາແບ້ເຖິກໂຕນຶ່ງເປັນເຄື່ອງບູຊາໄຖ່ບາບ ແລະລູກງົວໂຕນຶ່ງກັບລູກ
ແກະໂຕນຶ່ງ ທັງສອງໃຫ້ມີອາຍຸນຶ່ງປີ ປາສຈາກຕຳໜິເປັນເຄື່ອງເຜົາບູຊາ
4 ແລະເອົາງົວເຖິກໂຕນຶ່ງແລະແກະເຖິກໂຕນຶ່ງເປັນສານຕິບູຊາຖວາຍແດ່ພຣະຜູ້ເປັນເຈົ້າ ແລະເອົາທັນຍາບູຊາ
ປົນນ້ຳມັນມາຖວາຍ ເພາະວ່າພຣະຜູ້ເປັນເຈົ້າຈະຊົງປາກົດແກ່ທ່ານໃນວັນນີ້"
5 ເຂົາທັງຫລາຍກໍນຳສິ່ງທີ່ໂມເຊບັນຊານັ້ນມາທີ່ເຕັນນັດພົບ ແລະຊຸມນຸມຊົນທັງໝົດກໍເຂົ້າມາໃກ້ ຢືນຢູ່ຕໍ່ພຣະ
ພັກພຣະຜູ້ເປັນເຈົ້າ
6 ໂມເຊກ່າວວ່າ, "ນີ້ເປັນສິ່ງຊຶ່ງພຣະຜູ້ເປັນເຈົ້າຊົງບັນຊາໃຫ້ທ່ານທັງຫລາຍກະທຳ ແລະພຣະສະງ່າຣາສີຂອງພ
ຣະຜູ້ເປັນເຈົ້າຈະປາກົດແກ່ທ່ານທັງຫລາຍ"
7 ແລ້ວໂມເຊຈຶ່ງສັ່ງອາໂຣນວ່າ, "ຈົ່ງເຂົ້າໄປໃກ້ແທ່ນບູຊາ ຖວາຍເຄື່ອງບູຊາໄຖ່ບາບ ແລະເຄື່ອງບູຊາຂອງທ່ານ
ເສັຽ ແລະທຳການລົບມົນທິນບາບຂອງຕົວທ່ານກັບປະຊາຊົນທັງຫລາຍ ແລະຈົ່ງນຳເຄື່ອງຖວາຍບູຊາຂອງປະ
ຊາຊົນມາ ແລະທຳການລົບມົນທິນບາບຂອງເຂົາ ດັ່ງທີ່ພຣະຜູ້ເປັນເຈົ້າຊົງສັ່ງ"
8 ອາໂຣນຈຶ່ງເຂົ້າໄປໃກ້ແທ່ນບູຊາ ແລະຂ້າລູກງົວອັນເປັນເຄື່ອງບູຊາໄຖ່ບາບຊຶ່ງເປັນຂອງເພື່ອຕົນ
9 ແລະບຸດອາໂຣນກໍນຳເລືອດມາໃຫ້ເຂົາ ເຂົາກໍເອົານິ້ວມືຈຸ່ມເລືອດໄປທາໃສ່ຍອດແທ່ນ ແລະເທເລືອດລົງທີ່
ຖານແທ່ນ
10 ສ່ວນໄຂມັນແລະໝາກໄຂຫລັງສ່ວນທີ່ດີທີ່ສຸດຂອງຕັບ ຈາກເຄື່ອງບູຊາໄຖ່ບາບນັ້ນເຂົາເຜົາເສັຽເທິງແທ່ນ ດັ່ງ
ທີ່ພຣະຜູ້ເປັນເຈົ້າຊົງບັນຊາໂມເຊ
11 ເຂົາກໍເຜົາຊີ້ນແລະໜັງເສັຽດ້ວຍໄຟທີ່ພາຍນອກຄ້າຍ
12 ເຂົາຂ້າສັດເຄື່ອງເຜົາບູຊາ ແລ້ວບຸດອາໂຣນກໍນຳເລືອດມາໃຫ້ເຂົາ ເຂົາຈຶ່ງເອົາເລືອດນັ້ນຊິດໃສ່ທີ່ແທ່ນແລະ
ຮອບແທ່ນ
13 ແລະບຸດອາໂຣນກໍສົ່ງເຄື່ອງເຜົາບູຊາທີ່ລະທ່ອນກັບຫົວມາໃຫ້ອາໂຣນ ອາໂຣນກໍເຜົາສິ່ງເຫລົ່ານີ້ເທິງແທ່ນ
14 ອາໂຣນຈຶ່ງລ້າງເຄື່ອງໃນແລະຂາສັດ ແລະເຜົາເສັຽພ້ອມກັບເຄື່ອງເຜົາບູຊາທີ່ເທິງແທ່ນບູຊາ
15 ແລ້ວອາໂຣນກໍນຳເຄື່ອງບູຊາຂອງປະຊາຊົນມາຖວາຍ ຄືນຳແບ້ຊຶ່ງເປັນເຄື່ອງບູຊາໄຖ່ບາບ ຊຶ່ງເປັນຂອງເພື່ອ
ປະຊາຊົນມາຂ້າເສັຽບູຊາໄຖ່ບາບ ດັ່ງເຄື່ອງບູຊາໄຖ່ບາບຄັ້ງກ່ອນນັ້ນ
16 ເຂົາກໍຖວາຍເຄື່ອງເຜົາບູຊາຖວາຍຕາມກົດໝາຍ

17 ແລະເຂົາກໍຖວາຍທັນຍາບູຊາໂດຍຈັບມາກຳມືນຶ່ງເຜົາເສັງເທິງແທ່ນ ນອກເຫນືອເຄື່ອງເຜົາບູຊາປະຈຳ
ຕອນເຊົ້າ
18 ເຂົາຂ້າງົວເຖິກແລະແກະເຖິກເປັນເຄື່ອງສານຕິບູຊາສຳລັບປະຊາຊົນ ແລະບຸດອາໂຣນນຳເລືອດມາໃຫ້ອາ
ໂຣນ ອາໂຣນກໍເອົາເລືອດຊິດທີ່ແທ່ນແລະຮອບແທ່ນ
19 ແລະນຳໄຂມັນງົວ ແລະໄຂມັນແກະກັບຫາງມັນ ແລະໄຂມັນທີ່ຫຸ້ມເຄື່ອງໃນ ແລະຫມາກໄຂ່ຫລັງກັບສ່ວນທີ່ດີ
ທີ່ສຸດຂອງຕັບມາໃຫ້
20 ແລະເຂົາທັງຫລາຍວາງໄຂມັນເສັງເທິງແທ່ນ
21 ສ່ວນຊີ້ນຫນ້າເອິກແລະຊີ້ນຂາຂວານັ້ນ ອາໂຣນທຳພິທີຍື່ນຖວາຍແດ່ພຣະຜູ້ເປັນເຈົ້າ ດັ່ງທີໂມເຊໄດ້ບັນຊາໄວ້
22 ແລ້ວອາໂຣນຍົກມືຂຶ້ນອວຍພອນປະຊາຊົນ ແລະອາໂຣນກໍລົງມາຈາກການຖວາຍເຄື່ອງບູຊາໄຖ່ບາບ ເຄື່ອງ
ເຜົາບູຊາແລະສານຕິບູຊາ
23 ໂມເຊກັບອາໂຣນຈຶ່ງເຂົ້າໄປໃນເຕັນນັດພົບ ເມື່ອເຂົາທັງສອງອອກມາ ເຂົາກໍອວຍພອນປະຊາຊົນ ແລະພຣະ
ສະງ່າຣາສີຂອງພຣະຜູ້ເປັນເຈົ້າ ກໍປາກົດແກ່ປະຊາຊົນທັງມວນ
24 ແປວໄຟພຸ່ງອອກມາຕໍ່ພຣະພັກພຣະຜູ້ເປັນເຈົ້າ ເຜົາເຄື່ອງເຜົາບູຊາແລະໄຂມັນຊຶ່ງຢູ່ເທິງແທ່ນ ເມື່ອປະຊາຊົນ
ທັງຫລາຍເຫັນກໍໂຮ່ຮ້ອງແລະນ້ອມຫນ້າລົງທີ່ດິນ

## 10 ບາບຂອງນາດາບແລະອາບີຮູ

Nadab and Abihu

1 ຝ່າຍນາດາບແລະອາບີຮູບຸດຂອງອາໂຣນ ຕ່າງນຳຫມໍ້ຂາງໄຟຂອງເຂົາມາ ແລະເອົາໄຟໃສ່ໃນນັ້ນ ແລ້ວໃສ່
ເຄື່ອງຫອມລົງ ເອົາໄຟທີ່ຕ້ອງຫ້າມມາເຜົາຖວາຍບູຊາແດ່ພຣະຜູ້ເປັນເຈົ້າ ຊຶ່ງພຣະອົງບໍ່ໄດ້ຊົງບັນຊາໃຫ້ເຂົາ
ກະທຳເຊັ່ນນັ້ນ
2 ໄຟກໍພຸ່ງຂຶ້ນມາຈາກທີ່ພຣະຜູ້ເປັນເຈົ້າປະທັບໄຫມ້ເຂົາທັງສອງ ແລະເຂົາກໍຕາຍຕໍ່ພຣະພັກພຣະຜູ້ເປັນເຈົ້າ
3 ໂມເຊຈຶ່ງບອກອາໂຣນວ່າ, "ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເຮົາຈະສຳແດງຄວາມບໍຣິສຸດຂອງເຮົາຖ້າມກາງຜູ້ທີ່
ຢູ່ໃກ້ເຮົາ ເຂົາຈະຖວາຍຄວາມຍິ່ງໃຫຍ່ແກ່ເຮົາຕໍ່ຫນ້າປະຊົນຊົນທັງປວງ" ແລະອາໂຣນກໍມິດຢູ່
4 ໂມເຊເອີ້ນມີຊາເອນ ແລະເອນຊາຟານ ບຸດຂອງອຸສຊີເອນ ລຸງຂອງອາໂຣນບອກເຂົາວ່າ, "ຈົ່ງເຂົ້າມາໃກ້ ຫາມ
ເອົາພີ່ນ້ອງຂອງເຈົ້າອອກໄປເສັງນອກຄ້າຍຈາກຫນ້າສະຖານນະມັສການ"
5 ເຂົາກໍເຂົ້າມາໃຫ້ຫາມສົບທັງເສື້ອອອກໄປໄວ້ນອກຄ້າຍຕາມທີ່ໂມເຊສັ່ງ
6 ແລະໂມເຊກ່າວແກ່ອາໂຣນ ແລະເອເລອາຊາ ແລະອິທາມາ ບຸດອາໂຣນວ່າ, "ທ່ານທັງຫລາຍຢ່າປ່ອຍຜົມ
ຫ້ອຍ ຫລືຈີກເສື້ອຜ້າຂອງທ່ານ ຢ້ານວ່າທ່ານຈະຕ້ອງຕາຍ ແລະຢ້ານວ່າພຣະພິໂຣດຈະຕົກຢູ່ເຫນືອຊຸມນຸມ
ຊົນ ແຕ່ພີ່ນ້ອງຂອງທ່ານຄືວົງວານອິສຣາເອນທັງປວງ ຈະໄວ້ທຸກເພາະພຣະເຈົ້າຊົງໃຫ້ບັງເກີດການເຜົາໄຫມ້ກໍ
ໄດ້
7 ແລະຢ່າອອກໄປຈາກປະຕູເຕັນນັດພົບ ຢ້ານວ່າທ່ານຕ້ອງຕາຍ ເພາະວ່ານ້ຳມັນເຈີມແຫ່ງພຣະເຈົ້າຢູ່ເຫນືອ
ທ່ານທັງຫລາຍ" ແລະເຂົາທັງຫລາຍກໍກະທຳຕາມຄຳຂອງໂມເຊ

**ສ່ວນໄດ້ແລະຫນ້າທີ່ຂອງປະໂຣຫິດ**

8 ພຣະເຈົ້າຊົງກ່າວກັບອາໂຣນວ່າ,
9 "ເມື່ອຕົວເຈົ້າຫລືບຸດຂອງເຈົ້າຈະເຂົ້າໄປໃນເຕັນນັດພົບ ຢ່າດື່ມເຫລົ້າອະງຸ່ນ ຫລືສຸຣາຢ້ານວ່າເຈົ້າຈະຕ້ອງ
ຕາຍ ທັງນີ້ໃຫ້ເປັນກົດເກນຖາວອນຢູ່ຕລອດຊົ່ວເຊື້ອສາຍຂອງເຈົ້າ

10 ເຈົ້າຈຶ່ງແຍກຂອງບໍຣິສຸດລະຫວ່າງສິ່ງທີ່ເປັນຂອງພຣະເຈົ້າ ແລະສິ່ງທີ່ໃຊ້ກັນຢູ່ທົ່ວໄປ ຂອງມົນທິນຈາກຂອງບໍ່ມົນທິນ
11 ແລະເຈົ້າຈະຕ້ອງສອນປະຊາຊົນອິສຣາເອນໃຫ້ຊາບເຖິງກົດເກນທັງມວນ ຊຶ່ງພຣະເຈົ້າໄດ້ຊົງກ່າວແກ່ເຂົາທັງຫລາຍຜ່ານທາງໂມເຊ
12 ໂມເຊກ່າວແກ່ອາໂຣນ ແລະເອເລອາຊາ ແລະອິທາມາ ບຸດຂອງເຂົາຜູ້ທີ່ເຫລືອຢູ່ວ່າ, “ຈົ່ງເອົາທັນຍາບູຊາ ຊຶ່ງເຫລືອຈາກການບູຊາດ້ວຍໄຟຖວາຍແດ່ພຣະເຈົ້າ ມາຮັບປະທານທີ່ແຄມແທ່ນບູຊາ ບໍ່ໃສ່ເຊື້ອແປ້ງ ເພາະເປັນຂອງບໍຣິສຸດທີ່ສຸດ
13 ເຈົ້າຈຶ່ງຮັບປະທານໃນສະຖານບໍຣິສຸດ ເພາະເປັນສ່ວນຂອງເຈົ້າ ແລະສ່ວນຂອງບຸດຂອງເຈົ້າ ຈາກເຄື່ອງບູຊາດ້ວຍໄຟ ຖວາຍແດ່ພຣະເຈົ້າ ເພາະຂ້າພະເຈົ້າໄດ້ຮັບບັນຊາດັ່ງນີ້
14 ແຕ່ຊີ້ນຫນ້າເອິກທີ່ຍື່ນບູຊາ ແລະຊີ້ນຂາທີ່ບູຊາແລ້ວນັ້ນ ເຈົ້າຈົ່ງຮັບປະທານໃນບ່ອນສະອາດທີ່ໃດກໍໄດ້ ທັງຕົວເຈົ້າແລະບຸດຊາຍບຸດຍິງຂອງເຈົ້າກໍຮັບປະທານໄດ້ ເພາະເປັນສ່ວນທີ່ໄດ້ມາຈາກສານຕິບູຊາຂອງປະຊາຊົນອັນຕົກຢູ່ກັບທ່ານທັງບຸດຊາຍທັງຫລາຍຂອງທ່ານດ້ວຍ
15 ຊີ້ນຂາທີ່ບູຊາ ແລະຊີ້ນຫນ້າເອິກທີ່ຍື່ນຖວາຍເຂົາຈະນຳມາບູຊາພ້ອມກັບເຄື່ອງໄຂມັນທີ່ບູຊາດ້ວຍໄຟ ເພື່ອຍື່ນຖວາຍເປັນເຄື່ອງຍື່ນບູຊາຖວາຍແດ່ພຣະເຈົ້າ ສິ່ງເຫລົ່ານີ້ເປັນຂອງທ່ານແລະບຸດທັງຫລາຍຂອງທ່ານ ເປັນສ່ວນໄດ້ຂອງທ່ານເປັນນິດ ດັ່ງທີ່ພຣະເຈົ້າຊົງບັນຊາໄວ້”
16 ຝ່າຍໂມເຊໄດ້ພຍາຍາມໄຕ່ຖາມເຖິງເຣື່ອງແບ້ຊຶ່ງເປັນເຄື່ອງບູຊາໄຖ່ບາບ ແລະເບິ່ງແມ ແບ້ໂຕນັ້ນຖືກເຜົາເສັຽແລ້ວ ທ່ານຈຶ່ງໃຈຮ້າຍເອເລອາຊາ ແລະອິທາມາ ບຸດຊາຍຂອງອາໂຣນທີ່ເຫລືອຢູ່ ທ່ານບອກເຂົາວ່າ,
17 “ເຫດໃດ ທ່ານຈຶ່ງບໍ່ໄດ້ຮັບປະທານເຄື່ອງບູຊາໄຖ່ບາບໃນສະຖານສັກສິດ? ໃນເມື່ອເປັນຂອງບໍຣິສຸດທີ່ສຸດ ແລະເຂົາໄດ້ໃຫ້ທ່ານເພື່ອທ່ານຈະໄດ້ຮັບຄວາມຜິດຂອງຊຸມນຸມຊົນ ເພື່ອທຳການລຶບມົນທິນບາບຂອງເຂົາທັງຫລາຍຕໍ່ພຣະເຈົ້າ
18 ເບິ່ງແມ, ເລືອດສັດນັ້ນກໍບໍ່ໄດ້ນຳເຂົ້າມາຍັງສະຖານສັກສິດທີ່ຫ້ອງຂ້າງໃນ ທ່ານຄວນຈະໄດ້ຮັບປະທານສິ່ງເຫລົ່ານີ້ໃນສະຖານສັກສິດ ດັ່ງທີ່ຂ້າພະເຈົ້າໄດ້ບັນຊາແລ້ວນັ້ນ”
19 ອາໂຣນຈຶ່ງກ່າວແກ່ໂມເຊວ່າ, “ເບິ່ງແມ, ມື້ນີ້ເຂົາໄດ້ຖວາຍເຄື່ອງບູຊາຂອງເຂົາຕໍ່ພຣະພັກພຣະເຈົ້າແລ້ວ ແລະເຫດການເຫລົ່ານີ້ກໍຕົກທີ່ຂ້າພະເຈົ້າ ຖ້າມື້ນີ້ຂ້າພະເຈົ້າໄດ້ຮັບປະທານເຄື່ອງບູຊາໄຖ່ບາບ ຈະເປັນທີ່ໂປດປານຕໍ່ພຣະພັກພຣະເຈົ້າຫລື”
20 ເມື່ອໂມເຊໄດ້ຟັງດັ່ງນັ້ນທ່ານກໍພໍໃຈ

## 11 ສັດສະອາດແລະສັດມົນທິນ

Clean and Unclean Foods

(ພບຍ 14:3-21)

1 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊແລະອາໂຣນວ່າ,
2 “ຈົ່ງກ່າວແກ່ຄົນອິສຣາເອນວ່າ ຕໍ່ໄປນີ້ເປັນສັດທີ່ມີຊີວິດໃນບັນດາສັດໃນໂລກຊຶ່ງເຈົ້າຈະຮັບປະທານໄດ້
3 ບັນດາສັດທີ່ແຍກກີບ ແລະມີກີບຜ່າ ແລະສັດຄ້ຽວເອື້ອງເຈົ້າຮັບປະທານໄດ້
4 ຢ່າງໃດກໍຕາມສັດຕໍ່ໄປນີ້ທີ່ຄ້ຽວເອື້ອງ ຫລືແຍກກີບເຈົ້າກໍຢ່າຮັບປະທານ ອູດ ເພາະມັນຄ້ຽວເອື້ອງແຕ່ບໍ່ແຍກກີບເປັນສັດມົນທິນແກ່ເຈົ້າ
5 ເຫມັ້ນ ເພາະມັນເປັນຄ້ຽວເອື້ອງແຕ່ບໍ່ແຍກກີບ ເປັນສັດມົນທິນແກ່ເຈົ້າ
6 ກະຕ່າຍ ເພາະວ່າມັນເປັນສັດຄ້ຽວເອື້ອງແຕ່ບໍ່ແຍກກີບ ເປັນສັດມົນທິນແກ່ເຈົ້າ

7 ຫມູ ເພາະມັນເປັນສັດແຍກກີບ ແລະມີກີບຜ່າແຕ່ບໍ່ຄ້ຽວເອື້ອງ ຈຶ່ງເປັນສັດມົນທິນແກ່ເຈົ້າ
8 ຢ່າຮັບປະທານຊີ້ນຂອງສັດເຫລົ່ານີ້ເລີຍ ແລະເຈົ້າຢ່າແຕະຕ້ອງຊາກຂອງມັນ ມັນເປັນຂອງມົນທິນແກ່ເຈົ້າ
9 "ສັດທີ່ຢູ່ໃນນໍ້າທັງຫມົດເຫລົ່ານີ້ເຈົ້າຮັບປະທານໄດ້ ຂອງທຸກຢ່າງຊຶ່ງຢູ່ໃນນໍ້າ ທີ່ມີຄີແລະມີເກັດ ຈະຢູ່ໃນທະເລ ຫລືໃນແມ່ນໍ້າກໍຕາມ ເຈົ້າຮັບປະທານໄດ້
10 ແຕ່ຂອງທຸກຢ່າງຊຶ່ງຢູ່ໃນນໍ້າບໍ່ມີຄີແລະເກັດ ຈະເປັນສັດໂຕນ້ອຍໆໃນນໍ້າ ຫລືສັດທີ່ມີຊີວິດໃນນໍ້າ ເປັນສັດທີ່ຫນ້າລັງກຽດແກ່ເຈົ້າ
11 ເຖິງຈະເປັນສັດທີ່ຫນ້າລັງກຽດແກ່ເຈົ້າ ຊີ້ນມັນກໍດີເຈົ້າຢ່າຮັບປະທານ ຫລືແມ່ນແຕ່ແຕະຕ້ອງຊາກຂອງມັນ
12 ຂອງທຸກຢ່າງຊຶ່ງຢູ່ໃນນໍ້າບໍ່ມີກີບ ແລະມີເກັດເປັນສິ່ງທີ່ຫນ້າລັງກຽດແກ່ເຈົ້າ
13 "ຕໍ່ໄປນີ້ເປັນນົກຊຶ່ງເຈົ້າຫນ້າລັງກຽດ ເຈົ້າຢ່າຮັບປະທານ ມັນເປັນສັດທີ່ຫນ້າລັງກຽດ ຄືນົກອິນຊີ ແຮ້ງ ນົກອອກ
14 ແຫລວຫາງຍາວ ແຫລວດໍາຕາມຊະນິດຂອງມັນ
15 ນົກແກຕາມຊະນິດຂອງມັນ
16 ນົກກະຈອກເທດ ນົກເຄົ້າ ນົກນາງນວນ ນົກເຂົາຕາມຊະນິດຂອງມັນ
17 ນົກເຄົ້າແມວ ນົກຍາງ
18 ນົກກະທຸງ ກາ ແຮ້ງ
19 ນົກກະສາດໍາ ນົກກະສາຕາມຊະນິດຂອງມັນ ນົກຫອນຍາວ ແລະເຈັຽ
20 ແມງໄມ້ທີ່ມີປີກຊຶ່ງຄານສີ່ຂາ ເປັນສັດທີ່ຫນ້າລັງກຽດແກ່ເຈົ້າ
21 ແຕ່ໃນບັນດາແມງໄມ້ມີປີກທີ່ຄານສີ່ຂານີ້ ເຈົ້າຈະຮັບປະທານຈໍາພວກທີ່ມີຂາພັບໃຊ້ກະໂດດໄປເທິງດິນໄດ້
22 ໃນຈໍາພວກແມງໄມ້ຕໍ່ໄປນີ້ເຈົ້າຮັບປະທານໄດ້ ຕັກແຕນຕາມຊະນິດຂອງມັນ ຈີ່ຫລໍ່ຕາມຊະນິດຂອງມັນ ຈັກ ຈັ່ນຕາມຊະນິດຂອງມັນ ແລະຕັກແຕນໂມ້ຕາມຊະນິດຂອງມັນ
23 ແຕ່ແມງໄມ້ມີປີກຢ່າງອື່ນຊຶ່ງມີສີ່ຂາເປັນສັດທີ່ຫນ້າລັງກຽດແກ່ເຈົ້າ

Unclean Animals

24 "ສິ່ງເຫລົ່ານັ້ນຈະກະທໍາໃຫ້ເຈົ້າມົນທິນໄດ້ ຄືຜູ້ໃດຜູ້ນຶ່ງແຕະຕ້ອງຊາກຂອງມັນຈະຕ້ອງມົນທິນໄປຈົນເຖິງຕອນ ແລງ
25 ຜູ້ໃດຖືກຊາກສັດສ່ວນໃດໆໄປ ຕ້ອງຊັກເສື້ອຜ້າຂອງຕົນ ແລະມົນທິນໄປຈົນເຖິງຕອນແລງ
26 ສັດແຍກກີບແຕ່ບໍ່ມີກີບຜ່າ ບໍ່ຄ້ຽວເອື້ອງເປັນສັດມົນທິນແກ່ເຈົ້າ ຜູ້ໃດແຕະຕ້ອງສັດເຫລົ່ານີ້ຈະມົນທິນ
27 ໃນບັນດາສັດສີ່ຕີນທຸກຢ່າງຊຶ່ງເດີນດ້ວຍຂະຍຸ້ມຕີນເປັນສັດມົນທິນແກ່ເຈົ້າ ຜູ້ໃດແຕະຕ້ອງຊາກສັດນີ້ຈະຕ້ອງ ມົນທິນໄປເຖິງຕອນແລງ
28 ຜູ້ໃດນໍາຊາກມັນໄປຈະຕ້ອງຊັກເສື້ອຜ້າຂອງຕົນ ແລະມົນທິນໄປຈົນເຖິງຕອນແລງ ເປັນສັດມົນທິນແກ່ເຈົ້າ
29 "ໃນບັນດາສັດນ້ອຍໆຊຶ່ງມີຫລາຍເທິງດິນຊະນິດຕໍ່ໄປນີ້ເປັນສັດມົນທິນແກ່ເຈົ້າ ຄືເຫງັນ ຫນູ ເຮັ້ຽຕາມຊະນິດ ຂອງມັນ
30 ຂີ້ໂກະ ກັບແກ້
31 ໃນບັນດາສັດນ້ອຍໆທີ່ມີຫລາຍ ຊະນິດເຫລົ່ານີ້ເປັນມົນທິນແກ່ເຈົ້າ ຜູ້ໃດແຕະຕ້ອງເມື່ອມັນຕາຍແລ້ວ ຜູ້ນັ້ນ ຈະມົນທິນໄປເຖິງຕອນແລງ
32 ແລະເມື່ອມັນຕາຍຕົກທັບສິ່ງໃດສິ່ງນັ້ນກໍເປັນມົນທິນ ບໍ່ວ່າຈະເປັນສິ່ງທີ່ເປັນໄມ້ ຫລືເສື້ອຜ້າ ຫລືຫນັງສັດ ຫລື ກະສອບ ຫລືພາຊະນະໃດໆທີ່ໃຊ້ເພື່ອປໂຍດຢ່າງໃດຈະຕ້ອງແຊ່ນໍ້າ ແລະຈະມົນທິນໄປຈົນເຖິງຕອນແລງຕໍ່ໄປ ກໍນັບວ່າສະອາດໄດ້
33 ແລະຖ້າມັນຕົກໃສ່ພາຊະນະດິນ ສິ່ງທີ່ຢູ່ໃນພາຊະນະນັ້ນຈະມົນທິນ ຈົ່ງທຸບພາຊະນະນັ້ນເສັຽ

34 ອາຫານໃນພາຊນະນັ້ນທີ່ຮັບປະທານໄດ້ຊຶ່ງມີນໍ້າປົນຢູ່ກໍເປັນມົນທິນ ແລະນໍ້າດື່ມທັງສິ້ນຊຶ່ງຈະດື່ມໄດ້ຈາກພາຊນະຢ່າງນີ້ຈະມົນທິນ
35 ຖ້າສ່ວນໃດຂອງຊາກສັດຕົກໃສ່ສິ່ງໃດໆ ສິ່ງນັ້ນກໍມົນທິນ ບໍ່ວ່າເປັນເຕົາອົບຫລືເຕົາ ຕ້ອງທຸບເສັຽ ເປັນມົນທິນ ແລະເປັນຂອງມົນທິນແກ່ເຈົ້າ
36 ຢ່າງໃດກໍຕາມນໍ້າພຸຫລືນໍ້າໃນອ່າງເກັບນໍ້າເປັນຂອງສະອາດ ແຕ່ສິ່ງໃດທີ່ແຕະຕ້ອງຊາກສັດນັ້ນຈະມົນທິນ
37 ຖ້າສ່ວນໃດຂອງຊາກຕົກໃສ່ເມັດພືດທີ່ໃຊ້ຫວ່ານ ພືດນັ້ນນັບວ່າສະອາດ
38 ຖ້າຖອກນໍ້າໃສ່ພືດນັ້ນ ແລະຊາກສັດສ່ວນໃດຕົກໃສ່ ພືດນັ້ນກໍເປັນມົນທິນແກ່ເຈົ້າ
39 "ຖ້າສັດຊຶ່ງເຈົ້າຈະຮັບປະທານໄດ້ນັ້ນຕາຍເອງ ຜູ້ທີ່ແຕະຕ້ອງຊາກສັດນັ້ນຈະມົນທິນໄປຈົນເຖິງຕອນແລງ
40 ແລະຜູ້ໃດທີ່ຮັບປະທານຊາກນັ້ນຈະຕ້ອງຊັກເສື້ອຜ້າຂອງເຂົາເສັຽ ແລະເປັນມົນທິນໄປຈົນເຖິງຕອນແລງ ຜູ້ໃດທີ່ຈັບຖືຊາກນັ້ນໄປກໍຕ້ອງຊັກເສື້ອຜ້າຂອງຕົນ ແລະເປັນມົນທິນໄປຈົນເຖິງຕອນແລງ
41 "ບັນດາສັດເລືອຄານທີ່ໄປເປັນຝູງໆເທິງແຜ່ນດິນເປັນສິ່ງທີ່ຫນ້າລັງກຽດ ຢ່າຮັບປະທານ
42 ສິ່ງໃດທີ່ເລືອໄປດ້ວຍທ້ອງ ຫລືສິ່ງທີ່ຍ່າງສີ່ຂາ ຫລືສິ່ງທີ່ມີຫລາຍຂາ ທຸກສິ່ງທີ່ຄານໄປເທິງແຜ່ນດິນ ເຈົ້າຢ່າຮັບປະທານ ເພາະເປັນສິ່ງທີ່ຫນ້າລັງກຽດແກ່ເຈົ້າ
43 ເຈົ້າຢ່າກະທຳໃຫ້ຕົວເອງເປັນທີ່ຫນ້າລັງກຽດດ້ວຍສັດເລືອຄານໃດໆ ຢ່າທຳຕົວໃຫ້ເປັນມົນທິນໄປດ້ວຍສິ່ງເຫລົ່ານີ້ເລີຍ ຢ້ານວ່າເຈົ້າຈະບໍ່ສະອາດໄປນຳ
44 ເພາະເຮົາຄື ພຣະຜູ້ເປັນເຈົ້າ ພຣະເຈົ້າຂອງເຈົ້າ ຈົ່ງຊຳຣະຕົວໄວ້ໃຫ້ບໍຣິສຸດ ເພາະເຮົາບໍຣິສຸດ ເຈົ້າຢ່າທຳຕົວໃຫ້ເປັນມົນທິນໄປດ້ວຍສັດນ້ອຍໆທີ່ມີຫລາຍຊຶ່ງຄານໄປເທິງດິນ
45 ເພາະເຮົາຄື ພຣະເຈົ້າຜູ້ນຳເຈົ້າອອກຈາກແຜ່ນດິນເອຢິບ ເພື່ອເປັນພຣະເຈົ້າຂອງເຈົ້າ ເພາະສະນັ້ນເຈົ້າຈຶ່ງຕ້ອງບໍຣິສຸດ ເພາະເຮົາບໍຣິສຸດ"
46 ເຫລົ່ານີ້ເປັນກົດກ່າວເຖິງເຣື່ອງສັດແລະນົກ ແລະສິ່ງທີ່ມີຊີວິດທີ່ເຄື່ອນໄຫວໄປມາໃນນໍ້າ ແລະສັດທຸກຊະນິດທີ່ເລືອຄານເທິງແຜ່ນດິນ
47 ເພື່ອໃຫ້ສັງເກດຄວາມແຕກຕ່າງລະຫວ່າງສິ່ງທີ່ມີຊີວິດຮັບປະທານໄດ້ ແລະສັດມີຊີວິດທີ່ຮັບປະທານບໍ່ໄດ້

## 12 ການທີ່ຍິງຊຳຣະຫລັງຈາກຄອດບຸດ

Purification of Women after Chilbirth

(ລກ 2:22-24)

1 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ,
2 "ຈົ່ງກ່າວແກ່ຄົນອິສຣາເອນວ່າ ຖ້າຍິງຄົນໃດຖືພາຄອດບຸດເປັນຊາຍ ນາງຕ້ອງເປັນມົນທິນເຈັດວັນ ນາງຈະເປັນມົນທິນຢ່າງດຽວກັບມົນທິນເວລາທີ່ນາງມີປະຈຳເດືອນ
3 ໃນວັນທີ່ແປດໃຫ້ຕັດຫນັງປາຍອະວັຍະວະຂອງເດັກນັ້ນເສັຽເພື່ອເປັນການເຂົ້າສູ່ພິທີຕັດ
4 ໃຫ້ນາງຄອຍຢູ່ອີກສາມສິບສາມວັນດ້ວຍເຣື່ອງໂລຫິດຊຳຣະຂອງນາງ ຢ່າໃຫ້ນາງແຕະຕ້ອງຂອງບໍຣິສຸດອັນໃດ ຫລືເຂົ້າໄປໃນສະຖານນະມັສການ ຈົນກວ່າຈະຄົບວັນຊຳຣະຂອງນາງ
5 ແຕ່ຖ້ານາງຄອດບຸດເປັນຍິງ ນາງຈະມົນທິນໄປສອງອາທິດ ຢ່າງດຽວກັບເຣື່ອງການມີປະຈຳເດືອນ ແລະນາງຈະຕ້ອງຄອຍຢູ່ຫົກສິບຫົກວັນ ດ້ວຍເຣື່ອງໂລຫິດຊຳຣະຂອງນາງ
6 "ແລະເມື່ອວັນຊຳຣະຂອງນາງຄົບແລ້ວ ບໍ່ວ່າເປັນກຳນົດຂອງບຸດຊາຍຫລືບຸດຍິງ ໃຫ້ນາງໄປຫາປະໂຣຫິດທີ່ປະຕູເຕັນນັດພົບ ນຳລູກແກະອາຍຸນຶ່ງປີໂຕນຶ່ງໄປເປັນເຄື່ອງເຜົາບູຊາ ແລະນົກກາງແກຫນຸ່ມໂຕນຶ່ງຫລືນົກເຂົາໂຕນຶ່ງເປັນເຄື່ອງບູຊາໄຖ່ບາບ

7 ໃຫ້ປະໂຣຫິດນຳຖວາຍແດ່ພຣະຜູ້ເປັນເຈົ້າ ແລະທຳການລົບມົນທິນໃຫ້ນາງ ແລ້ວນາງຈະສະອາດໃນເຣື່ອງໂລ
ຫິດຂອງນາງຕົກ ນີ້ເປັນກົດກ່າວດ້ວຍເຣື່ອງການຄອດບຸດ ບໍ່ວ່າເປັນຊາຍຫລືຍິງ
8 ແລະຖ້ານາງບໍ່ສາມາດຫາລູກແກະໂຕນຶ່ງໄດ້ ກໍໃຫ້ນາງນຳນົກເຂົາສອງໂຕຫລືນົກກາງແກຫນຸ່ມສອງໂຕ ໂຕນຶ່ງ
ເປັນເຄື່ອງເຜົາບູຊາ ແລະອີກໂຕນຶ່ງເປັນເຄື່ອງບູຊາໄຖ່ບາບ ແລະໃຫ້ປະໂຣຫິດທຳການລົບມົນທິນໃຫ້ນາງ
ແລ້ວນາງຈະສະອາດ"

## 13 ກົດຫມາຍເຣື່ອງໂຣກເຮື້ອນ

Leprosy, Varieties and Symptoms

1 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊ ແລະອາໂຣນວ່າ,
2 "ຖ້າຜູ້ໃດເກີດອາການບວມ ຫລືໂພງ ຫລືດ່າງຂຶ້ນທີ່ຜິວຫນັງ ແລ້ວຜິວຫນັງຂອງເຂົາເປັນເຮື້ອນ ກໍໃຫ້ພາຜູ້ນັ້ນ
ມາຫາອາໂຣນປະໂຣຫິດ ຫລືມາຫາບຸດຄົນນຶ່ງຄົນໃດຂອງເຂົາທີ່ເປັນປະໂຣຫິດ
3 ໃຫ້ປະໂຣຫິດກວດຜິວຫນັງບ່ອນທີ່ເປັນບາດ ຖ້າຂົນໃນບ່ອນນັ້ນຫງອກແລະເຫັນວ່າບາດນັ້ນຢູ່ເລິກກວ່າ
ຜິວຫນັງລົງໄປ ນັບວ່າເປັນໂຣກເຮື້ອນ ເມື່ອປະໂຣຫິດກວດເຂົາຮຽບຮ້ອຍແລ້ວໃຫ້ປະກາດວ່າ ເຂົາເປັນມົນ
ທິນ
4 ຖ້າຜິວຫນັງບ່ອນທີ່ເຈັບປວດນັ້ນຂາວ ແລະປາກົດວ່າພຍາດບໍ່ກິນເລິກລົງໄປກວ່າຜິວຫນັງ ແລະຂົນໃນບໍຣິ
ເວນນັ້ນກໍບໍ່ຫງອກ ໃຫ້ປະໂຣຫິດກັກຕົວຜູ້ປ່ວຍໄວ້ເຈັດວັນ
5 ແລະໃຫ້ປະໂຣຫິດກວດເຂົາອີກໃນວັນທີເຈັດ ຖ້າຕາມສາຍຕາຂອງເຂົາເຫັນວ່າບາດນັ້ນຍັງຄືເກົ່າແລະບໍ່ລາມ
ອອກໄປໃນຜິວຫນັງ ກໍໃຫ້ປະໂຣຫິດກັກຕົວເຂົາຕໍ່ໄປອີກເຈັດວັນ
6 ພໍເຖິງວັນທີເຈັດໃຫ້ປະໂຣຫິດກວດເຂົາອີກເທື່ອນຶ່ງ ຖ້າບໍຣິເວນທີ່ເຈັບນັ້ນຈາງລົງ ແລະບາດບໍ່ໄດ້ລາມອອກໄປ
ໃນຜິວຫນັງ ກໍໃຫ້ປະໂຣຫິດປະກາດວ່າ ເຂົາສະອາດແລ້ວ ເຂົາເປັນບາດໂພງເທົ່ານັ້ນ ໃຫ້ເຂົາຊັກເຄື່ອງນຸ່ງ
ແລ້ວເຂົາກໍສະອາດໄດ້
7 ແຕ່ຖ້າຫາກວ່າພາຍຫລັງຈາກທີ່ເຂົາສຳແດງຕົວແກ່ປະໂຣຫິດເພື່ອຮັບການຊຳຣະແລ້ວນັ້ນ ປາກົດວ່າບໍຣິເວນ
ທີ່ເຈັບປວດນັ້ນລາມອອກໄປໃນຜິວຫນັງ ເຂົາຕ້ອງກັບໄປຫາປະໂຣຫິດອີກ
8 ໃຫ້ປະໂຣຫິດທຳການກວດ ຖ້າບໍຣິເວນທີ່ເຈັບລາມອອກໄປໃນຜິວຫນັງ ກໍໃຫ້ປະໂຣຫິດປະກາດວ່າ ເຂົາເປັນ
ມົນທິນ ເຂົາເປັນໂຣກເຮື້ອນ
9 "ຖ້າຜູ້ໃດເປັນໂຣກເຮື້ອນກໍໃຫ້ພາເຂົາມາຫາປະໂຣຫິດ
10 ແລະໃຫ້ປະໂຣຫິດກວດເບິ່ງຕົວເຂົາ ຖ້າມີບໍຣິເວນບວມສີຂາວເກີດຂຶ້ນທີ່ຜິວຫນັງ ຊຶ່ງທຳໃຫ້ຂົນທີ່ນັ້ນຫງອກ
ແລະມີເນື້ອແຜສົດໃນບ່ອນທີ່ບວມນັ້ນ
11 ສະແດງວ່າເປັນໂຣກເຮື້ອຮັງທີ່ຜິວຫນັງ ໃຫ້ປະໂຣຫິດປະກາດວ່າເຂົາມົນທິນ ຢ່າກັກຕົວເຂົາໄວ້ ເພາະວ່າເຂົາ
ເປັນມົນທິນ
12 ຖ້າໂຣກເຮື້ອນນັ້ນລາມໄປຕາມຜິວຫນັງ ຕາມທີ່ປະໂຣຫິດເຫັນກໍປາກົດວ່າລາມໄປຕາມຜິວຫນັງທົ່ວຕົວຜູ້
ປ່ວຍຕັ້ງແຕ່ຫົວຈົນເຖິງຕີນ
13 ປະໂຣຫິດຕ້ອງກວດເບິ່ງ ຖ້າເຮື້ອນນັ້ນແຜ່ໄປທົ່ວຕົວ ໃຫ້ປະໂຣຫິດປະກາດວ່າເຂົາສະອາດດ້ວຍໂຣກຂອງເຂົາ
ແລ້ວຕົວຂອງເຂົາເຜືອກ ເຂົາສະອາດ
14 ຖ້າມີເນື້ອແຜສົດປາກົດຂຶ້ນມາເມື່ອໃດ ເຂົາກໍເປັນມົນທິນ
15 ໃຫ້ປະໂຣຫິດກວດເບິ່ງທີ່ເນື້ອແຜສົດ ແລະປະກາດວ່າເຂົາເປັນມົນທິນ ເພາະເນື້ອແຜສົດນັ້ນທຳໃຫ້ມົນທິນ
ເຂົາເປັນໂຣກເຮື້ອນ

16 ຖ້າເນື້ອແຜສົດນັ້ນປ່ຽນໄປອີກກາຍເປັນສີຂາວ ໃຫ້ເຂົາມາຫາປະໂຣຫິດ
17 ແລະໃຫ້ປະໂຣຫິດກວດເບິ່ງເຂົາ ແລະຖ້າພຍາດນັ້ນກາຍເປັນໂຣກເຜືອກ ໃຫ້ປະໂຣຫິດປະກາດວ່າ ຄົນທີ່ເປັນ
ໂຣກນັ້ນ ສະອາດ ເຂົາສະອາດ
18 "ຖ້າທີ່ຮ່າງກາຍຂອງຄົນໃດມີແຜຝີຊຶ່ງຫາຍແລ້ວ
19 ຖ້າທີ່ແຜເປັນນັ້ນມີສີຂາວບວມຂຶ້ນມາຫລືມີຮອຍສີແດງຊ້ຳປາກົດ ກໍໃຫ້ຜູ້ນັ້ນສຳແດງຕົວຕໍ່ປະໂຣຫິດ
20 ແລະປະໂຣຫິດຈະກວດເບິ່ງ ຖ້າປາກົດວ່າທີ່ເປັນນັ້ນເລິກກວ່າຜິວໜັງ ແລະຂົນທີ່ບໍຣິເວນນັ້ນຫງອກໃຫ້ປະໂຣ
ຫິດປະກາດວ່າ ເຂົາເປັນມົນທິນ ບາດນັ້ນເປັນໂຣກເຮື້ອນມັນໂພງຂຶ້ນມາທີ່ແຜຝີ
21 ແຕ່ຖ້າປະໂຣຫິດກວດເບິ່ງແລ້ວເຫັນວ່າຂົນທີ່ນັ້ນກໍບໍ່ຫງອກ ແລະເປັນບໍ່ເລິກກວ່າຜິວໜັງ ແຕ່ມີສີຊີດໆ ໃຫ້ປະ
ໂຣຫິດກັກຕົວເຂົາໄວ້ເຈັດວັນ
22 ຖ້າບາດນັ້ນລາມອອກໄປໃນຜິວໜັງ ກໍໃຫ້ປະໂຣຫິດປະກາດວ່າເຂົາເປັນມົນທິນ ເຂົາເປັນພຍາດຜິວ
ໜັງແລ້ວ
23 ແຕ່ຖ້າບໍຣິເວນນັ້ນຄົງທີ່ຢູ່ບໍ່ລາມອອກໄປ ກໍເປັນແຕ່ພຽງແຜເປັນຂອງຝີໃຫ້ປະໂຣຫິດປະກາດວ່າ ເຂົາສະອາດ
24 "ຫລື ເມື່ອສ່ວນຂອງຮ່າງກາຍຖືກໄຟລວກ ແລະເນື້ອແຜສົດທີ່ບ່ອນນັ້ນເປັນຮອຍສີແດງຊ້ຳຫລືສີຂາວ
25 ໃຫ້ປະໂຣຫິດກວດເບິ່ງ ຖ້າຂົນໃນບໍຣິເວນນັ້ນຫງອກ ແລະປາກົດວ່າເປັນເລິກກວ່າຜິວໜັງ
ກໍເປັນໂຣກເຮື້ອນ ມັນໂພງຂຶ້ນມາທີ່ແຜໄຟລວກ ແລະໃຫ້ປະໂຣຫິດປະກາດວ່າເຂົາເປັນມົນທິນ ເຂົາເປັນໂຣກ
ເຮື້ອນ
26 ແຕ່ຖ້າປະໂຣຫິດກວດເບິ່ງ ເຫັນວ່າຂົນໃນບໍຣິເວນນັ້ນບໍ່ຫງອກ ແລະເປັນບໍ່ເລິກກວ່າຜິວໜັງ ແຕ່ຈາງ ໃຫ້ປະ
ໂຣຫິດກັກຕົວເຂົາໄວ້ເຈັດວັນ
27 ພໍເຖິງວັນທີເຈັດກໍໃຫ້ປະໂຣຫິດກວດເບິ່ງເຂົາ ຖ້າທີ່ເປັນນັ້ນລາມອອກໄປໃນຜິວໜັງ ກໍໃຫ້ປະໂຣຫິດປະກາດ
ວ່າເຂົາເປັນມົນທິນ ເຂົາເປັນໂຣກເຮື້ອນ
28 ຖ້າຮອຍທີ່ເປັນນັ້ນຄົງຢູ່ ບໍ່ລາມອອກໄປໃນຜິວໜັງ ແຕ່ຈາງ ບວມເພາະໄຟລວກໃຫ້ປະໂຣຫິດປະກາດວ່າເຂົາ
ສະອາດ ເພາະມັນເປັນພຽງແຜຂອງໄຟລວກ
29 "ຖ້າຊາຍຫລືຍິງຄົນໃດມີໂຣກທີ່ຫົວ ຫລືທີ່ໜວດ
30 ໃຫ້ປະໂຣຫິດກວດເບິ່ງໂຣກນັ້ນ ຖ້າປາກົດວ່າເປັນເລິກກວ່າຜິວໜັງ ແລະຜົມບ່ອນນັ້ນເຫລືອງແລະບາງ ໃຫ້
ປະໂຣຫິດປະກາດວ່າເຂົາເປັນມົນທິນ ເຂົາເປັນໂຣກຄັນ ເປັນໂຣກເຮື້ອນທີ່ຫົວ ຫລືທີ່ໜວດ
31 ແລະຖ້າປະໂຣຫິດກວດເບິ່ງໂຣກຄັນນັ້ນ ແລະປາກົດວ່າເປັນບໍ່ເລິກກວ່າຜິວໜັງ ແລະບໍ່ມີຜົມດຳຢູ່ໃນບໍຣິເວນ
ນັ້ນ ໃຫ້ປະໂຣຫິດກັກຕົວບຸກຄົນທີ່ເປັນໂຣກຄັນນັ້ນໄວ້ເຈັດວັນ
32 ພໍເຖິງວັນທີເຈັດກໍໃຫ້ປະໂຣຫິດກວດບາດນັ້ນ ຖ້າອາການຄັນນັ້ນບໍ່ລາມອອກໄປ ແລະບໍ່ມີຂົນເຫລືອງໃນບໍຣິ
ເວນນັ້ນ ແລະປາກົດວ່າອາການຄັນບໍ່ເລິກກວ່າຜິວໜັງ
33 ກໍໃຫ້ຄົນນັ້ນແຖຜົມເສັຽ ແຕ່ຢ່າແຖບ່ອນບໍຣິເວນທີ່ຄັນ ໃຫ້ປະໂຣຫິດກັກຕົວບຸກຄົນທີ່ເປັນໂຣກຄັນນັ້ນໄວ້
ອີກເຈັດວັນ
34 ພໍເຖິງວັນທີເຈັດ ກໍໃຫ້ປະໂຣຫິດກວດເບິ່ງບ່ອນທີ່ຄັນ ຖ້າທີ່ຄັນນັ້ນບໍ່ລາມອອກໄປໃນຜິວໜັງ ແລະປາກົດວ່າ
ເປັນບໍ່ເລິກໄປກວ່າຜິວໜັງ ໃຫ້ປະໂຣຫິດປະກາດວ່າເຂົາສະອາດ ໃຫ້ເຂົາຊັກເຄື່ອງນຸ່ງ ແລ້ວຈະສະອາດ
35 ແຕ່ຖ້າເຂົາຊຳຣະຕົວແລ້ວ ຍັງປາກົດວ່າໂຣກຄັນນັ້ນລາມອອກໄປໃນຜິວໜັງ
36 ກໍໃຫ້ປະໂຣຫິດກວດເຂົາ ຖ້າໂຣກຄັນນັ້ນລາມອອກໄປໃນຜິວໜັງແລ້ວ ບໍ່ຈຳເປັນຕ້ອງຊອກຫາຂົນສີເຫລືອງ
ເຂົາເປັນມົນທິນແລ້ວ

37 “ແຕ່ຖ້າຕາມສາຍຕາຂອງເຂົາໂຣກຄັນນັ້ນລະງັບແລ້ວ ແລະມີຜົມດຳງອກຢູ່ໃນບໍຣິເວນນັ້ນ ໂຣກຄັນນັ້ນຫາຍແລ້ວເຂົາກໍສະອາດ ແລະໃຫ້ປະໂຣຫິດປະກາດວ່າເຂົາສະອາດ

38 “ເມື່ອຜູ້ຊາຍຫລືຜູ້ຍິງມີຮອຍຂາວທີ່ຜິວຫນັງ

39 ໃຫ້ປະໂຣຫິດກວດເຂົາ ຖ້າຮອຍທີ່ຜິວກາຍເປັນສີຂາວຫມົ່ນ ນັ້ນເປັນຂີ້ກ້ຽນທີ່ໂພງຂຶ້ນໃນຜິວຫນັງ ເຂົາສະອາດ

40 “ຖ້າຊາຍຄົນໃດມີຜົມຫລົ່ນຈາກຫົວ ເຂົາເປັນຄົນຫົວລ້ານ ແຕ່ເຂົາສະອາດ

41 ຖ້າຊາຍຄົນໃດມີຜົມທີ່ຫນ້າຜາກ ແລະທີ່ຂມັບຫລົ່ນ ຫນ້າຜາກຂອງເຂົາລ້ານແຕ່ເຂົາສະອາດ

42 ແຕ່ຖ້າຕົງບໍຣິເວນຫົວລ້ານ ຫລືຫນ້າຜາກລ້ານມີບໍຣິເວນເປັນໂຣກສີແດງຊ້ຳ ເຂົາເປັນຂີ້ກ້ຽນໂພງຂຶ້ນ ທີ່ຫົວລ້ານ ຫລືທີ່ຫນ້າຜາກລ້ານນັ້ນ

43 ໃຫ້ປະໂຣຫິດກວດເບິ່ງເຂົາ ຖ້າໂຣກບວມນັ້ນສີແດງຊ້ຳຢູ່ບ່ອນຫົວລ້ານ ຫລືຫນ້າຜາກລ້ານຂອງເຂົາ ເຫມືອນກັບໂຣກເຮື້ອນທີ່ປາກົດຕາມຜິວຫນັງ

44 ຊາຍຜູ້ນັ້ນເປັນໂຣກເຮື້ອນ ເຂົາເປັນມົນທິນ ປະໂຣຫິດຕ້ອງປະກາດວ່າ ເຂົາເປັນມົນທິນ ໂຣກຂອງເຂົາຢູ່ທີ່ຫົວ

45 “ໃຫ້ບຸກຄົນທີ່ເປັນໂຣກເຮື້ອນສວມເສື້ອຜ້າທີ່ຂາດ ແລະໃຫ້ປ່ອຍຜົມ ແລະໃຫ້ເຂົາປົດຮີມຝີປາກເທິງໄວ້ແລ້ວຮ້ອງໄປວ່າ “ມົນທິນ ມົນທິນ”

46 ເຂົາຈະເປັນມົນທິນຢູ່ຕລອດເວລາທີ່ເຂົາເປັນໂຣກ ເຂົາເປັນມົນທິນ ເຂົາຈະຕ້ອງຢູ່ແຕ່ລຳພັງພາຍນອກຄ້າຍ

47 “ເມື່ອໃນເຄື່ອງແຕ່ງກາຍມີເຮື້ອນ ບໍ່ວ່າຈະເປັນເຄື່ອງແຕ່ງກາຍຂົນສັດ ຫລືຜ້າປ່ານ

48 ຫລືຕິດຢູ່ຜ້າປ່ານຕ່ອນໃດຕ່ອນນຶ່ງຫລືຜ້າຂົນສັດ ຫລືຫນັງສັດ ຫລືສິ່ງໃດໆທີ່ເຮັດດ້ວຍຫນັງສັດ

49 ຖ້າໂຣກນັ້ນເຮັດໃຫ້ເຄື່ອງແຕ່ງກາຍມີສີຂຽວໆ ຫລືແດງໆ ທີ່ດ້າຍເສັ້ນຍືນຫລືເສັ້ນພຸ່ງ ທີ່ຫນັງຫລືສິ່ງໃດໆທີ່ທຳດ້ວຍຫນັງ ນັ້ນແມ່ນເຮື້ອນຈະຕ້ອງນຳໄປສະແດງຕໍ່ປະໂຣຫິດ

50 ແລະໃຫ້ປະໂຣຫິດກວດໂຣກນັ້ນ ແລະໃຫ້ກັກສິ່ງທີ່ເປັນໂຣກນັ້ນໄວ້ເຈັດວັນ

51 ພໍເຖິງວັນທີເຈັດກໍໃຫ້ກວດເບິ່ງໂຣກນັ້ນອີກ ຖ້າໂຣກນັ້ນແຜ່ລາມໄປໃນເສື້ອຜ້າເຄື່ອງແຕ່ງກາຍ ບໍ່ວ່າທີ່ດ້າຍເສັ້ນຍືນຫລືເສັ້ນພຸ່ງ ເປັນທີ່ຫນັງສັດ ຫລືສິ່ງໃດທີ່ທຳດ້ວຍຫນັງສັດ ໂຣກນັ້ນເປັນໂຣກເຮື້ອນຢ່າງຮ້າຍແຮງ ນັບວ່າເປັນມົນທິນ

52 ໃຫ້ປະໂຣຫິດເຜົາເຄື່ອງນຸ່ງນັ້ນເສັຽ ບໍ່ວ່າເປັນໂຣກທີ່ດ້າຍເສັ້ນຍືນຫລືເສັ້ນພຸ່ງ ເປັນທີ່ຜ້າຂົນສັດຫລືຜ້າປ່ານ ຫລືສິ່ງໃດໆທີ່ເຮັດດ້ວຍຫນັງສັດ ເພາະເປັນໂຣກເຮື້ອນທີ່ຮ້າຍ ຈຶ່ງໃຫ້ເຜົາເສັຽໃນໄຟ

53 “ແລະຖ້າປະໂຣຫິດນັ້ນກວດເບິ່ງ ແລະໂຣກນັ້ນບໍ່ໄດ້ລາມໄປໃນເຄື່ອງທັງທີ່ດ້າຍເສັ້ນຍືນຫລືເສັ້ນພຸ່ງ ຫລືໃນສິ່ງໃດທີ່ທຳດ້ວຍຫນັງສັດ

54 ກໍໃຫ້ປະໂຣຫິດບັນຊາໃຫ້ເຂົາຊັກຕົວທີ່ເປັນໂຣກນັ້ນເສັຽ ແລະໃຫ້ກັກໄວ້ອີກເຈັດວັນ

55 ເມື່ອຊັກແລ້ວກໍໃຫ້ປະໂຣຫິດກວດເບິ່ງຕົວທີ່ເປັນໂຣກນັ້ນອີກ ຖ້າບໍຣິເວນທີ່ເປັນໂຣກບໍ່ປ່ຽນສີ ເຖິງແມ່ນວ່າໂຣກນັ້ນບໍ່ລາມໄປ ກໍເປັນມົນທິນ ເຈົ້າຈຶ່ງເອົາໃສ່ໃນໄຟເຜົາເສັຽ ບໍ່ວ່າບໍຣິເວນທີ່ເປັນໂຣກເຮື້ອນນັ້ນຈະຢູ່ຂ້າງໃນຫລືຂ້າງນອກ

56 “ຖ້າປະໂຣຫິດກວດເບິ່ງເມື່ອຊັກແລ້ວເຫັນວ່າໂຣກນັ້ນຈາງ ກໍໃຫ້ຈີກບໍຣິເວນນັ້ນອອກເສັຽຈາກເສື້ອຫລືຫນັງສັດ ຫລືເສັ້ນຍືນຫລືເສັ້ນພຸ່ງ

57 ຖ້າປາກົດຂຶ້ນອີກໃນເຄື່ອງນຸ່ງບໍ່ວ່າທີ່ດ້າຍເສັ້ນຍືນຫລືເສັ້ນພຸ່ງ ຫລືໃນສິ່ງໃດໆທີ່ທຳດ້ວຍຫນັງສັດ ໂຣກນັ້ນແຜ່ລາມໄປແລ້ວ ເຈົ້າຈຶ່ງເຜົາສິ່ງທີ່ເປັນໂຣກນັ້ນດ້ວຍໄຟ

58 ຖ້າເຄື່ອງທັງທີ່ດ້າຍເສັ້ນຍືນຫລືເສັ້ນພຸ່ງ ຫລືສິ່ງທີ່ທຳດ້ວຍໜັງສັດ ຊຶ່ງເມື່ອຊັກແລ້ວໂຣກນັ້ນໝົດໄປ ກໍໃຫ້ຊັກ
ອີກເປັນຄັ້ງທີສອງສະອາດໄດ້ແລ້ວ”
59 ນີ້ເປັນກົດວ່າດ້ວຍໂຣກເຮື້ອນໃນເຄື່ອງທີ່ທຳດ້ວຍຂົນສັດຫລືຜ້າປ່ານ ບໍ່ວ່າເປັນທີ່ດ້າຍເສັ້ນຍືນຫລືເສັ້ນພຸ່ງ ຫລື
ເປັນທີ່ສິ່ງໃດໆທີ່ທຳດ້ວຍໜັງສັດ ເພື່ອໃຫ້ພິຈາຣະນາວ່າຢ່າງໃດສະອາດ ຢ່າງໃດເປັນມົນທິນ

## 14 ການຊຳຣະຕົວແລະເຮືອນຂອງໂຣກເຮື້ອນ

Purification of Lepers and Leprous House

(ມທ 8:1-4; ລກ 5:12-14)

1 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ,
2 “ຕໍ່ໄປນີ້ເປັນກົດເຣື່ອງຄົນເປັນໂຣກເຮື້ອນ ໃນວັນຊຳຣະຕົວຂອງເຂົາ ໃຫ້ພາເຂົາມາຫາປະໂຣຫິດ
3 ແລະໃຫ້ປະໂຣຫິດທຳການກວດ ຖ້າຜູ້ປ່ວຍຫາຍດີຈາກໂຣກເຮື້ອນແລ້ວ
4 ກໍໃຫ້ປະໂຣຫິດສັ່ງເຂົາໃຫ້ຈັດຂອງສຳລັບຜູ້ຈະຮັບການຊຳຣະ ຄືນົກສະອາດທີ່ມີຊີວິດສອງໂຕ ໄມ້ສົນ ກັບດ້າຍ
ສີແດງ ແລະຕົ້ນຫູສົບ
5 ໃຫ້ປະໂຣຫິດສັ່ງໃຫ້ເຂົາຂ້ານົກໂຕນຶ່ງໃນພາຊນະດິນຂ້າງເທິງນ້ຳໄຫລ
6 ໃຫ້ປະໂຣຫິດເອົານົກໂຕທີ່ຍັງເປັນຢູ່ກັບໄມ້ສົນ ດ້າຍສີແດງ ຕົ້ນຫູສົບ ຈຸ່ມເຂົາໄປໃນເລືອດຂອງນົກທີ່ຖືກຂ້າ
ຂ້າງເທິງນ້ຳໄຫລ
7 ແລະໃຫ້ປະໂຣຫິດຊິດໃສ່ຄົນທີ່ຈະຮັບການຊຳຣະຈາກໂຣກເຮື້ອນນັ້ນເຈັດເທື່ອ ແລ້ວປະກາດວ່າເຂົາສະອາດ
ແລະໃຫ້ປ່ອຍນົກຕົວທີ່ຍັງມີຊີວິດນັ້ນໄປໃນພື້ນທົ່ງ
8 ແລະໃຫ້ຜູ້ທີ່ຮັບການຊຳຣະນັ້ນຊັກເຄື່ອງນຸ່ງຂອງຕົນ ແລະໃຫ້ແຖຜົມກັບຂົນທັງໝົດເສັຽ ແລະອາບນ້ຳ ເຂົາກໍ
ຈະສະອາດ ຕໍ່ຈາກນັ້ນກໍໃຫ້ເຂົາເຂົ້າຄ້າຍໄດ້ ແຕ່ໃຫ້ນອນຢູ່ນອກເຕັນຂອງເຂົາເຈັດວັນ
9 ພໍວັນທີເຈັດໃຫ້ເຂົາແຖຜົມຈາກຫົວຂອງເຂົາໃຫ້ໝົດ ໃຫ້ແຖໜວດ ແລະແຖຂົນຄິ້ວ ຄືແຖໃຫ້ໝົດ ແລ້ວໃຫ້
ຊັກເຄື່ອງນຸ່ງ ແລະອາບນ້ຳ ເຂົາກໍຈະສະອາດ
10 “ໃນວັນທີແປດໃຫ້ເຂົາເອົາລູກແກະເຖິກສອງໂຕປາສຈາກຕຳໜິ ແລະຍອດແປ້ງປົ່ນໃສ່ນ້ຳມັນສາມໃນສິບເອ
ຟາເປັນທັນຍາບູຊາ ກັບນ້ຳມັນລົກນຶ່ງ (Log)
11 ໃຫ້ປະໂຣຫິດຜູ້ທຳການຊຳຣະ ນຳຜູ້ທີ່ຮັບການຊຳຣະກັບສິ່ງຂອງເຫລົ່ານີ້ມາຕໍ່ພຣະພັກພຣະຜູ້ເປັນເຈົ້າທີ່ປະຕູ
ເຕັນນັດພົບ
12 ໃຫ້ປະໂຣຫິດນຳລູກແກະເຖິກໂຕນຶ່ງໄປຖວາຍເປັນເຄື່ອງບູຊາໄຖ່ບາບກັມພ້ອມກັບນ້ຳມັນລົກນຶ່ງ ນຳຍື່ນ
ຖວາຍເປັນເຄື່ອງຍື່ນຖວາຍແດ່ພຣະຜູ້ເປັນເຈົ້າ
13 ໃຫ້ປະໂຣຫິດຂ້າລູກແກະນັ້ນໃນບ່ອນທີ່ເຂົາຂ້າສັດ ອັນເປັນເຄື່ອງບູຊາໄຖ່ບາບ ແລະສັດອັນເປັນເຄື່ອງເຜົາບູ
ຊາໃນບ່ອນບໍຣິສຸດ ເພາະວ່າເຄື່ອງບູຊາໄຖ່ກັມບາບກໍເໝືອນເຄື່ອງບູຊາໄຖ່ບາບ ເປັນຂອງທີ່ຕົກແກ່ປະໂຣ
ຫິດ ເປັນຂອງບໍຣິສຸດທີ່ສຸດ
14 ປະໂຣຫິດຈະນຳເລືອດຂອງເຄື່ອງບູຊາໄຖ່ກັມບາບມາ ແລະປະໂຣຫິດຈະເຈີມທີ່ປາຍຫູຂ້າງຂວາຂອງຜູ້ທີ່ຮັບ
ການຊຳຣະ ແລະເຈີມທີ່ນິ້ວຫົວໂປ້ມືຂວາແລະທີ່ນິ້ວຫົວໂປ້ຕີນຂວາຂອງເຂົາ
15 ແລະປະໂຣຫິດຈະນຳນ້ຳມັນນຶ່ງລົກນັ້ນມາ ຖອກໃສ່ຝ່າມືຊ້າຍຂອງເຂົາ
16 ແລະເອົານິ້ວມືຂວາແປະນ້ຳມັນຊຶ່ງຢູ່ໃນມືຊ້າຍ ແປະນ້ຳມັນດ້ວຍນິ້ວຂອງເຂົາເຈັດເທື່ອຕໍ່ພຣະພັກພຣະຜູ້ເປັນ
ເຈົ້າ

17 ສ່ວນນໍ້າມັນທີ່ເຫລືອຢູ່ໃນມືນັ້ນ ປະໂຣຫິດຈະເອົາມາ ເຈີມທີ່ປາຍຫູຂວາຂອງຜູ້ທີ່ຮັບການຊໍາຣະ ແລະທີ່ນິ້ວໂປ້
ມືຂວາແລະທີ່ນິ້ວໂປ້ຕີນຂວາທັບເທິງເລືອດເຄື່ອງບູຊາໄຖ່ບາບກັມ
18 ສ່ວນນໍ້າມັນທີ່ຍັງເຫລືອຢູ່ໃນມືຂອງປະໂຣຫິດນັ້ນ ເຂົາຈະທົດສົງຂອງຜູ້ຮັບການຊໍາຣະ ແລ້ວປະໂຣຫິດຈະທໍາ
ການລຶບມົນທິນຂອງເຂົາຕໍ່ພຣະພັກພຣະຜູ້ເປັນເຈົ້າ
19 ປະໂຣຫິດຈະຖວາຍເຄື່ອງບູຊາໄຖ່ບາບ ເພື່ອທໍາການລຶບມົນທິນຂອງຜູ້ຮັບການຊໍາຣະໃຫ້ພົ້ນຈາກມົນທິນຂອງ
ເຂົາ ພາຍຫລັງປະໂຣຫິດຈຶ່ງຂ້າສັດອັນເປັນເຄື່ອງເຜົາບູຊາ
20 ແລະປະໂຣຫິດຈະຖວາຍເຄື່ອງເຜົາບູຊາແລະທັນຍາບູຊາເທິງແທ່ນ ປະໂຣຫິດຈະທໍາການລຶບມົນທິນຂອງເຂົາ
ດັ່ງນີ້ ແລະເຂົາກໍຈະສະອາດໄດ້
21 "ຖ້າຜູ້ນັ້ນເປັນຄົນຍາກຈົນແລະບໍ່ສາມາດຈະຫາມາໄດ້ເທົ່ານັ້ນ ກໍໃຫ້ເຂົານໍາລູກແກະເຖິກໂຕນຶ່ງເປັນເຄື່ອງບູ
ຊາໄຖ່ບາບກັມເພື່ອຍື່ນຖວາຍ ກະທໍາການລຶບມົນທິນຂອງເຂົາ ແລະນໍາຍອດແປ້ງນຶ່ງໃນສິບເອຟາປົນໃສ່ກັບ
ນໍ້າມັນ ເປັນທັນຍາບູຊາກັບນໍ້າມັນລົກນຶ່ງ
22 ພ້ອມກັບນົກສອງໂຕ ຫລືລູກນົກກາງແກສອງໂຕ ຕາມທີ່ເຂົາສາມາດຫາມາໄດ້ ໂຕນຶ່ງເປັນເຄື່ອງບູຊາໄຖ່ບາບ
ນົກອີກໂຕນຶ່ງເປັນເຄື່ອງເຜົາບູຊາ
23 ໃນວັນທີ່ແປດໃຫ້ເຂົານໍາມາມອບໃຫ້ແກ່ປະໂຣຫິດເພື່ອການຊໍາຣະຂອງຕົນທີ່ປະຕູເຕັນນັດພົບຖວາຍຕໍ່ພຣະ
ພັກພຣະຜູ້ເປັນເຈົ້າ
24 ແລະປະໂຣຫິດຈະນໍາລູກແກະທີ່ເປັນເຄື່ອງບູຊາໄຖ່ກັມບາບ ແລະນໍາມັນລົກນຶ່ງນັ້ນ ແລະປະໂຣຫິດຈະທໍາພິທີ
ຍື່ນຖວາຍເປັນເຄື່ອງຍື່ນບູຊາຖວາຍແດ່ພຣະຜູ້ເປັນເຈົ້າ
25 ແລະເຂົາຈະຂ້າລູກແກະເຄື່ອງບູຊາໄຖ່ບາບ ແລະປະໂຣຫິດຈະເອົາເລືອດຂອງເຄື່ອງບູຊາໄຖ່ກັມບາບມາເຈີມ
ທີ່ປາຍຫູຂ້າງຂວາຂອງຜູ້ຮັບການ
ຊໍາຣະ ແລະທີ່ນິ້ວໂປ້ມືຂວາ ກັບທີ່ນິ້ວໂປ້ຕີນຂວາຂອງເຂົາ
26 ແລ້ວປະໂຣຫິດຈະຖອກນໍ້າມັນໃສ່ເບື້ອງມືຊ້າຍຂອງຕົນ
27 ແລະໃຊ້ມືຂວາຊິດນໍ້າມັນເຈັດຄັ້ງຕໍ່ພຣະພັກພຣະຜູ້ເປັນເຈົ້າ
28 ແລະປະໂຣຫິດຈະເອົານໍ້າມັນທີ່ຢູ່ໃນມືເຈີມທີ່ປາຍຫູຂ້າງຂວາຂອງຜູ້ຮັບການຊໍາຣະ ແລະທີ່ຫົວໂປ້ມືຂວາກັບ
ຫົວໂປ້ຕີນຂວາຂອງເຂົາ ຕົງບ່ອນທີ່ເຈີມດ້ວຍເລືອດຂອງເຄື່ອງບູຊາໄຖ່ກັມບາບ
29 ນໍ້າມັນທີ່ເຫລືອຢູ່ໃນມືຂອງປະໂຣຫິດນັ້ນ ເຂົາຈະເຈີມຫົວຂອງຜູ້ທີ່ຮັບການຊໍາຣະ ທໍາການລຶບມົນທິນຂອງເຂົາ
ຕໍ່ພຣະພັກ ພຣະຜູ້ເປັນເຈົ້າ
30 ແລະເຂົາຈະຖວາຍນົກເຂົາຫລືນົກກາງແກໜຸ່ມຕາມທີ່ເຂົາສາມາດຫາມາໄດ້
31 ຖວາຍນົກໂຕນຶ່ງເປັນເຄື່ອງເຜົາບູຊາ ພ້ອມກັບທັນຍາບູຊາ ແລະປະໂຣຫິດຈະທໍາການລຶບມົນທິນຂອງຜູ້ຮັບ
ການຊໍາຣະຕໍ່  ພຣະພັກພຣະຜູ້ເປັນເຈົ້າ
32 ນີ້ເປັນກົດສໍາລັບຜູ້ທີ່ເປັນເຮື້ອນ ບໍ່ສາມາດຫາເຄື່ອງບູຊາເພື່ອການຊໍາຣະຂອງຕົນໄດ້"
33 ພຣະຜູ້ເປັນເຈົ້າຊົງກ່າວກັບໂມເຊ ແລະອາໂຣນວ່າ,
34 "ເມື່ອເຈົ້າເຂົ້າໄປໃນແຜ່ນດິນການາອານ ຊຶ່ງເຮົາໄດ້ໃຫ້ແກ່ເຈົ້າເປັນກໍາມະສິດນັ້ນ ແລະເຮົາຈະໃສ່ເຮື້ອນເຂົ້າທີ່
ເຮືອນຫລັງນຶ່ງຫລັງໃດໃນແຜ່ນດິນທີ່ເຈົ້າຖືກໍາມະສິດນັ້ນ
35 ຜູ້ໃດທີ່ຖືກໍາມະສິດຂອງເຮືອນນັ້ນຈະຕ້ອງມາບອກແກ່ປະໂຣຫິດວ່າ "ຂ້າພະເຈົ້າເຫັນໂຣກຢ່າງນຶ່ງເກີດຂຶ້ນໃນ
ເຮືອນຂອງຂ້າພະເຈົ້າ"
36 ແລ້ວປະໂຣຫິດຈະສັ່ງໃຫ້ເຂົາຂົນຂອງອອກຈາກເຮືອນໃຫ້ໝົດ ກ່ອນທີ່ປະໂຣຫິດຈະໄປກວດໂຣກ ຢ້ານ
ວ່າຂອງທຸກຢ່າງທີ່ຢູ່ໃນເຮືອນນັ້ນຈະຖືກປະກາດວ່າ ມົນທິນ ຕໍ່ຈາກນັ້ນປະໂຣຫິດຈຶ່ງຈະເຂົ້າໄປກວດເບິ່ງເຮືອນ

37 ແລະປະໂຣຫິດຈະກວດເບິ່ງໂຣກ ຖ້າໂຣກນັ້ນຢູ່ທີ່ຝາຂອງເຮືອນເປັນຮອຍສີຂຽວໆ ແດງໆ ແລະປາກົດວ່າຢູ່ເລິກກວ່າຜິວ
38 ແລ້ວປະໂຣຫິດຈະອອກຈາກເຮືອນໄປຢູ່ທີ່ປະຕູເຮືອນ ແລ້ວປິດເຮືອນເສັຽເຈັດວັນ
39 ພໍເຖິງວັນທີເຈັດປະໂຣຫິດຈະກັບມາກວດເບິ່ງອີກ ຖ້າໂຣກນັ້ນແຜ່ລາມໄປໃນຝາເຮືອນ
40 ແລ້ວປະໂຣຫິດຈະສັ່ງໃຫ້ເອົາຫີນກ້ອນທີ່ຕິດໂຣກນັ້ນອອກເສັຽນຳໄປໂຍນຖິ້ມໃນບ່ອນມົນທິນພາຍນອກເມືອງ
41 ແລະສັ່ງໃຫ້ຂູດຂ້າງໃນເຮືອນທົ່ວໆໄປ ຜົງປູນທີ່ຂູດອອກມານັ້ນໃຫ້ນຳໄປຖິ້ມເສັຽໃນບ່ອນມົນທິນພາຍນອກເມືອງ
42 ແລ້ວໃຫ້ຫາຫີນອື່ນມາແທນຫີນກ້ອນທີ່ນຳອອກໄປ ແລະເອົາປູນອື່ນມາໂບກຝາເຮືອນນັ້ນ
43 "ເມື່ອເຂົາເອົາຫີນອອກ ຂູດເຮືອນແລະໂບກປູນໃຫມ່ແລ້ວ ຍັງເກີດໂຣກຂຶ້ນໃນເຮືອນນັ້ນອີກ
44 ແລ້ວປະໂຣຫິດຈະໄປກວດເບິ່ງ ຖ້າໂຣກນັ້ນແຜ່ລາມໄປໃນເຮືອນເປັນໂຣກເຮື້ອນຢ່າງຮ້າຍໃນເຮືອນ ເຮືອນກໍເປັນມົນທິນ
45 ໃຫ້ເຂົາພັງເຮືອນນັ້ນລົງ ຫີນ ໄມ້ ແລະປູນທີ່ເຮັດເຮືອນນັ້ນໃຫ້ຂົນໄປຖິ້ມເສັຽໃນບ່ອນທີ່ມົນທິນພາຍນອກເມືອງ
46 ນອກຈາກນີ້ ເມື່ອເຮືອນປິດຢູ່ ມີຜູ້ໃດເຂົ້າໄປຜູ້ນັ້ນຈະເປັນມົນທິນຈົນເຖິງເວລາຄ່ຳ
47 ຜູ້ໃດທີ່ນອນລົງໃນເຮືອນນັ້ນຕ້ອງຊັກເຄື່ອງນຸ່ງຂອງເຂົາ ແລະຜູ້ທີ່ຮັບປະທານໃນເຮືອນນັ້ນຕ້ອງຊັກເຄື່ອງນຸ່ງຂອງເຂົາດ້ວຍ
48 "ແຕ່ຖ້າປະໂຣຫິດມາທຳການກວດເຫັນວ່າເມື່ອໂບກປູນໃຫມ່ແລ້ວ ໂຣກນັ້ນບໍ່ໄດ້ແຜ່ລາມໄປໃນເຮືອນ ແລ້ວປະໂຣຫິດຈະປະກາດວ່າເຮືອນນັ້ນສະອາດ ເພາະໂຣກຫາຍແລ້ວ
49 ແລະເພື່ອຈະຊຳຣະເຮືອນນັ້ນໃຫ້ເຈົ້າຂອງເຮືອນນຳນົກນ້ອຍສອງໂຕກັບໄມ້ສົນ ດ້າຍສີແດງ ແລະຕົ້ນຫູສົບ
50 ໃຫ້ຂ້ານົກໂຕນຶ່ງໃນພາຊນະດິນຂ້າງເທິງນ້ຳທີ່ໄຫລ
51 ເອົາໄມ້ສົນ ຕົ້ນຫູສົບ ແລະດ້າຍສີແດງ ພ້ອມກັບນົກໂຕທີ່ຍັງມີຊີວິດຢູ່ຈຸ່ມລົງໃນເລືອດນົກທີ່ໄດ້ຂ້າຂ້າງເທິງນ້ຳທີ່ໄຫລນັ້ນ ແລ້ວຊິດໃສ່ເຮືອນນັ້ນເຈັດຄັ້ງ
52 ດັ່ງນີ້ເຂົາຈະໄດ້ຊຳຣະເຮືອນດ້ວຍເລືອດນົກ ດ້ວຍນ້ຳໄຫລແລະດ້ວຍນົກທີ່ມີຊີວິດ ດ້ວຍໄມ້ສົນ ຕົ້ນຫູສົບ ແລະດ້າຍສີແດງ
53 ໃຫ້ເຂົາປ່ອຍນົກທີ່ມີຊີວິດອອກໄປຈາກເມືອງຍັງພື້ນທົ່ງ ດັ່ງນີ້ແຫລະເຂົາຈະໄດ້ທຳການລົບມົນທິນຂອງເຮືອນ ແລະເຮືອນນັ້ນກໍສະອາດ"
54 ນີ້ເປັນກົດກ່ຽວກັບເຮື້ອນຕ່າງໆ ໂຣກຄັນ
55 ໂຣກເຮື້ອນໃນເຄື່ອງນຸ່ງຫົ່ມ ຫລືໃນເຮືອນ
56 ບ່ອນບວມ ຫລືໂພງ ຫລືບ່ອນດ່າງ
57 ເພື່ອໃຫ້ສະແດງວ່າເມື່ອໃດຈຶ່ງເອີ້ນວ່າມົນທິນ ເມື່ອເອີ້ນວ່າສະອາດ ນີ້ເປັນກົດເຣື່ອງໂຣກເຮື້ອນ

## 15 ສິ່ງອັນເປັນມົນທິນທີ່ໄຫລອອກຈາກຮ່າງກາຍ

Concerning Bodily Discharges

1 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊ ແລະອາໂຣນວ່າ,
2 "ຈົ່ງກ່າວແກ່ຄົນອິສຣາເອນວ່າ ເມື່ອຜູ້ໃດມີສິ່ງໄຫລອອກຈາກຮ່າງກາຍ ສິ່ງທີ່ໄຫລອອກຂອງເຂົານັ້ນເປັນມົນທິນ
3 ຕໍ່ໄປນີ້ເປັນກົດກ່ຽວກັບເຣື່ອງມົນທິນຂອງເຂົາເນື່ອງຈາກສິ່ງທີ່ໄຫລອອກ ຮ່າງກາຍຂອງເຂົາຈະມີສິ່ງໄຫລອອກ ຫລືສິ່ງທີ່ໄຫລອອກຄ້າງຢູ່ໃນຮ່າງກາຍຂອງເຂົາກໍດີ ເຣື່ອງນີ້ເປັນມົນທິນແກ່ເຂົາ

4 ຕຽງນອນຊຶ່ງຜູ້ໃດທີ່ມີສິ່ງໄຫລອອກຂຶ້ນໄປນອນ ຕຽງນັ້ນກໍເປັນມົນທິນ ທຸກສິ່ງທີ່ເຂົາຮອງນັ່ງກໍເປັນມົນທິນ

5 ຜູ້ໃດທີ່ແຕະຕ້ອງຕຽງຂອງເຂົາ ຕ້ອງຊັກເຄື່ອງນຸ່ງຂອງຕົນແລະອາບນໍ້າ ແລະຈະເປັນມົນທິນໄປຈົນເຖິງເວລາຄໍ່າ

6 ຜູ້ໃດໄປນັ່ງເທິງສິ່ງທີ່ຜູ້ມີສິ່ງໄຫລອອກໄດ້ນັ່ງກ່ອນ ຜູ້ນັ້ນຕ້ອງຊັກເຄື່ອງນຸ່ງຂອງເຕີນ ແລະອາບນໍ້າ ແລະຈະເປັນມົນທິນໄປຈົນເຖິງເວລາຄໍ່າ

7 ຜູ້ໃດໄປແຕະຕ້ອງຮ່າງກາຍຂອງຜູ້ທີ່ມີສິ່ງໄຫລອອກ ຜູ້ນັ້ນຕ້ອງຊັກເຄື່ອງນຸ່ງຂອງຕົນແລະອາບນໍ້າ ແລະເປັນມົນທິນໄປຈົນເຖິງເວລາຄໍ່າ

8 ແລະຖ້າຜູ້ໃດທີ່ມີສິ່ງໄຫລອອກນັ້ນຖົ່ມນໍ້າລາຍຖືກຕ້ອງຊັກເຄື່ອງນຸ່ງແລະອາບນໍ້າ ແລະເປັນມົນທິນໄປຈົນເຖິງເວລາຄໍ່າ

9 ແລະອານໃດໆຊຶ່ງຜູ້ມີສິ່ງໄຫລອອກນັ່ງຢູ່ ອານນັ້ນກໍເປັນມົນທິນ

10 ຜູ້ນຶ່ງຜູ້ໃດແຕະຕ້ອງສິ່ງທີ່ຮອງເຂົາຢູ່ນັ້ນ ຜູ້ນັ້ນຈະເປັນມົນທິນໄປຈົນເຖິງເວລາຄໍ່າ ແລະຜູ້ໃດທີ່ຈັບຖືສິ່ງນັ້ນຕ້ອງຊັກເຄື່ອງນຸ່ງຂອງຕົນ ແລະອາບນໍ້າ ຜູ້ນັ້ນຈະເປັນມົນທິນໄປຈົນເຖິງເວລາຄໍ່າ

11 ຜູ້ທີ່ມີສິ່ງໄຫລອອກແຕະຕ້ອງຜູ້ໃດດ້ວຍມືທີ່ບໍ່ໄດ້ລ້າງ ຜູ້ຖືກແຕະຕ້ອງນັ້ນຕ້ອງຊັກເຄື່ອງນຸ່ງຂອງຕົນແລະອາບນໍ້າ ແລະເປັນມົນທິນໄປຈົນເຖິງເວລາຄໍ່າ

12 ພາຊນະດິນຊຶ່ງຜູ້ມີສິ່ງໄຫລອອກແຕະຕ້ອງໃຫ້ທຸບເສັຽ ແລະພາຊນະໄມ້ທຸກຢ່າງກໍໃຫ້ຊໍາຮະເສັຽດ້ວຍນໍ້າ

13 “ເມື່ອຜູ້ມີສິ່ງໄຫລອອກໄດ້ຊໍາຮະສິ່ງໄຫລອອກຂອງເຂົາແລ້ວ ເຂົາຕ້ອງນັບການຊໍາຮະຂອງເຂົາໃຫ້ຄົບເຈັດວັນ ແລະເຂົາຕ້ອງຊັກເຄື່ອງນຸ່ງ ແລະອາບນໍ້າທີ່ໄຫລເຂົາຈຶ່ງຈະສະອາດ

14 ໃນວັນທີແປດໃຫ້ເຂົານໍານົກເຂົາສອງໂຕ ຫລືນົກກາງແກຫນຸ່ມສອງໂຕມາຕໍ່ພຣະພັກພຣະຜູ້ເປັນເຈົ້າທີ່ປະຕູເຕັນນັດພົບ ແລະມອບຂອງເຫລົ່ານັ້ນໃຫ້ແກ່ປະໂຣຫິດ

15 ໃຫ້ປະໂຣຫິດຖວາຍບູຊາ ຄືຖວາຍນົກໂຕນຶ່ງເປັນເຄື່ອງຖວາຍໄຖ່ບາບ ແລະນົກອີກໂຕນຶ່ງເປັນເຄື່ອງເຜົາບູຊາ ແລະປະໂຣຫິດຈະທໍາການລຶບມົນທິນຂອງເຂົາຕໍ່ພຣະຜູ້ເປັນເຈົ້າ ດ້ວຍເຣື່ອງສິ່ງໄຫລອອກຂອງເຂົາ

16 “ຊາຍຄົນໃດມີນໍ້າກາມໄຫລອອກໃຫ້ເຂົາອາບນໍ້າ ແລະເປັນມົນທິນໄປຈົນເຖິງເວລາຄໍ່າ

17 ເຄື່ອງນຸ່ງຫົ່ມທຸກໂຕ ແລະຜິວຫນັງທຸກສ່ວນທີ່ນໍ້າກາມໄຫລຖືກຕ້ອງຊໍາຮະເສັຽໃນນໍ້າ ແລະເປັນມົນທິນໄປຈົນເຖິງເວລາຄໍ່າ

18 ຊາຍຄົນໃດສົມສູ່ກັບຍິງຄົນໃດ ແລະມີນໍ້າກາມໄຫລອອກທັງສອງຈະຕ້ອງອາບນໍ້າ ແລະເປັນມົນທິນໄປຈົນເຖິງເວລາຄໍ່າ

19 “ເມື່ອຍິງມີສິ່ງໄຫລອອກເປັນໂລຫິດປະຈໍາເດືອນ ນາງຈະຕ້ອງເປັນມົນທິນໄປເຈັດວັນ ແລະຜູ້ໃດແຕະຕ້ອງນາງຈະຕ້ອງເປັນມົນທິນຈົນເຖິງເວລາຄໍ່າ

20 ຂນະເມື່ອນາງມີມົນທິນ ນາງໄປນອນທີ່ໃດທີ່ນັ້ນກໍມີມົນທິນ ສິ່ງໃດທີ່ນາງໄປນັ່ງທັບສິ່ງນັ້ນກໍເປັນມົນທິນ

21 ຜູ້ໃດໄປແຕະຕ້ອງບ່ອນນອນຂອງນາງ ຜູ້ນັ້ນຕ້ອງຊັກເຄື່ອງນຸ່ງ ແລະອາບນໍ້າ ແລະເປັນມົນທິນໄປຈົນເຖິງເວລາຄໍ່າ

22 ແລະຜູ້ນຶ່ງຜູ້ໃດແຕະຕ້ອງສິ່ງບ່ອນນາງນັ່ງ ຜູ້ນັ້ນຕ້ອງຊັກເຄື່ອງນຸ່ງແລະອາບນໍ້າ ແລະເປັນມົນທິນໄປຈົນເຖິງເວລາຄໍ່າ

23 ສິ່ງທີ່ນາງນັ່ງທັບຈະເປັນບ່ອນນອນຫລືສິ່ງໃດກໍດີ ເມື່ອຊາຍໃດໄປແຕະຕ້ອງເຂົ້າ ຜູ້ນັ້ນຈະເປັນມົນທິນໄປຈົນເຖິງເວລາຄໍ່າ

24 ຖ້າຊາຍໃດໄປສົມສູ່ກັບນາງ ແລະມົນທິນຂອງນາງມາຕິດທີ່ຊາຍນັ້ນ ຊາຍນັ້ນຈະເປັນມົນທິນໄປເຈັດວັນ ເຂົາໄປນອນທີ່ຕຽງໃດ ຕຽງນັ້ນກໍເປັນມົນທິນ

25 "ຖ້າຍິງໃດມີໂລຫິດໄຫລອອກຫລາຍວັນ ບໍ່ແມ່ນເປັນເວລາເປັນມົນທິນປະຈຳຂອງນາງ ຫລືຖ້ານາງມີໂລຫິດ
ໄຫລອອກກາຍກຳນົດເປັນມົນທິນປະຈຳຂອງນາງ ທຸກວັນທີ່ມີໂລຫິດໄຫລອອກນາງຕ້ອງເປັນມົນທິນ ນາງ
ຕ້ອງເປັນມົນທິນຢ່າງດຽວກັບເວລາເປັນມົນທິນປະຈຳຂອງນາງ
26 ບ່ອນນອນທຸກຫລັງທີ່ນາງນອນ ເມື່ອວັນນາງມີສິ່ງໄຫລອອກ ບ່ອນນອນນັ້ນເປັນດັ່ງບ່ອນນອນເປັນມົນທິນປະ
ຈຳຂອງນາງ ທຸກສິ່ງທີ່ນາງນັ່ງທັບຕ້ອງເປັນມົນທິນຢ່າງດຽວກັບມົນທິນໃນມົນທິນປະຈຳຂອງນາງ
27 ຜູ້ໃດແຕະຕ້ອງສິ່ງເຫລົ່ານັ້ນ ຜູ້ນັ້ນກໍເປັນມົນທິນດ້ວຍ ເຂົາຕ້ອງຊັກເຄື່ອງນຸ່ງ ແລະອາບນ້ຳ ແລະເປັນມົນທິນ
ໄປຈົນເຖິງເວລາຄ່ຳ
28 ຖ້ານາງຊຳຣະສິ່ງໄຫລອອກຂອງນາງແລ້ວ ໃຫ້ນາງນັບເອງໃຫ້ຄົບເຈັດວັນ ຕໍ່ຈາກນັ້ນນາງຈຶ່ງຈະສະອາດ
29 ແລະໃນວັນທີແປດໃຫ້ນາງນຳນົກເຂົາສອງໂຕ ຫລືລູກນົກກາງແກສອງໂຕໄປໃຫ້ປະໂຣຫິດທີ່ປະຕູເຕັນນັດພົບ
30 ແລະປະໂຣຫິດຈະຖວາຍນົກໂຕນຶ່ງເປັນເຄື່ອງບູຊາໄຖ່ບາບ ແລະອີກໂຕນຶ່ງເປັນເຄື່ອງເຜົາ ແລະປະໂຣຫິດຈະ
ທຳການລຶບມົນທິນໃຫ້ນາງຕໍ່ພຣະຜູ້ເປັນເຈົ້າ ດ້ວຍເຣື່ອງສິ່ງໄຫລອອກທີ່ເປັນມົນທິນຂອງນາງ
31 "ດັ່ງນີ້ແຫລະ, ພວກເຈົ້າຄວນຈະໃຫ້ຄົນອິສຣາເອນແຍກຈາກມົນທິນຂອງເຂົາທັງຫລາຍ ຢ້ານວ່າເຂົາຈະຕ້ອງ
ຕາຍດ້ວຍມົນທິນຂອງເຂົາ ເມື່ອເຂົາເຮັດໃຫ້ຫໍເຕັນຂອງເຮົາທີ່ຢູ່ຖ້າມກາງພວກເຂົາເປັນມົນທິນໄປ"
32 ນີ້ເປັນກົດເຣື່ອງຜູ້ທີ່ມີສິ່ງໄຫລອອກ ແລະຊາຍທີ່ມີນ້ຳກາມໄຫລອອກ ຊຶ່ງກະທຳໃຫ້ຕົວເປັນມົນທິນ
33 ແລະກ່ຽວກັບຍິງທີ່ປ່ອຍດ້ວຍເປັນມົນທິນປະຈຳຂອງນາງ ຄືທັງນີ້ກ່ຽວກັບຜູ້ທີ່ມີສິ່ງໄຫລອອກບໍ່ວ່າຊາຍຫລືຍິງ
ແລະກ່ຽວກັບຊາຍຜູ້ສົມສູ່ກັບຍິງຜູ້ມີມົນທິນ

## 16 ວັນລຶບລ້າງບາບ

The Day of Atonement

1 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊຫລັງຈາກທີ່ບຸດທັງສອງຂອງອາໂຣນສິ້ນຊີວິດ ຄືເມື່ອເຂົາເຂົ້າມາໃກ້ພຣະຜູ້
ເປັນເຈົ້າ ແລະເຖິງແກ່ຄວາມຕາຍ
2 ແລະພຣະຜູ້ເປັນເຈົ້າກ່າວກັບໂມເຊວ່າ, "ເຈົ້າຈົ່ງບອກອາໂຣນອ້າຍຂອງເຈົ້າວ່າ "ຢ່າເຂົ້າໄປໃນສະຖານສັກສິດ
ຕລອດທຸກເວລາ ຄືເຂົ້າໄປຫນ້າພຣະທີ່ນັ່ງພຣະກະຣຸນາຊຶ່ງຢູ່ເທິງຫລັງຫີບ ຢ້ານວ່າເຂົາຈະຕ້ອງຕາຍ ເພາະວ່າ
ເຮົາຈະປາກົດໃນເມກເຫນືອພຣະທີ່ນັ່ງກະຣຸນາ
3 ແຕ່ອາໂຣນຈະເຂົ້າມາໃນທີ່ບໍຣິສຸດໄດ້ດັ່ງນີ້ ຄືໃຫ້ເອົາງົວຫນຸ່ມໂຕນຶ່ງໄປເປັນເຄື່ອງບູຊາໄຖ່ບາບ ແລະແກະ
ເຖິກໂຕນຶ່ງເປັນເຄື່ອງເຜົາບູຊາ
4 ໃຫ້ເຂົານຸ່ງເສື້ອຜ້າປ່ານບໍຣິສຸດ ແລະນຸ່ງສົ້ງຜ້າປ່ານ ສາຍຮັດແອວ ແລະຜ້າມາລາປ່ານ ນີ້ເປັນເຄື່ອງນຸ່ງບໍຣິສຸດ
ເຂົາຈະຕ້ອງອາບນ້ຳແລ້ວຈຶ່ງນຸ່ງ
5 ແລະໃຫ້ເຂົານຳແບ້ເຖິກສອງໂຕເປັນເຄື່ອງບູຊາໄຖ່ບາບກັບແກະເຖິກໂຕນຶ່ງເປັນເຄື່ອງເຜົາບູຊາຈາກຊຸມນຸມ
ຊົນອິສຣາເອນ
6 "ອາໂຣນຈະຖວາຍງົວເປັນເຄື່ອງບູຊາໄຖ່ບາບຂອງຕົນເອງ ແລະຈະທຳການລຶບມົນທິນບາບຕົນເອງແລະຄອບ
ຄົວຂອງຕົນ
7 ແລ້ວເຂົາຈະນຳແບ້ສອງໂຕນັ້ນໄປຖວາຍພຣະຜູ້ເປັນເຈົ້າທີ່ປະຕູເຕັນນັດພົບ
8 ແລະອາໂຣນຈະຈັບສລາກແບ້ສອງໂຕນັ້ນ ສລາກນຶ່ງຕົກເປັນຂອງພຣະຜູ້ເປັນເຈົ້າ ແລະອີກສລາກນຶ່ງເພື່ອອາ
ຊາເຊນ
9 ແບ້ໂຕທີ່ສລາກຕົກເປັນຂອງພຣະຜູ້ເປັນເຈົ້ານັ້ນ ອາໂຣນຈະຖວາຍເປັນເຄື່ອງບູຊາໄຖ່ບາບ

10 ແຕ່ແບ້ອີກໂຕນຶ່ງຊຶ່ງສລາກຕົກເພື່ອອາຊາເຊນນັ້ນ ຈະນຳຖວາຍຕໍ່ພຣະພັກພຣະຜູ້ເປັນເຈົ້າເປັນສັດເປັນ ເພື່ອ
ທຳການລຶບມົນທິນບາບໃຫ້ຕົກທີ່ມັນ ແລ້ວຈະໄດ້ປ່ອຍມັນເຂົ້າໄປໃນຖິ່ນກັນດານໃຫ້ແກ່ອາຊາເຊນ
11 “ອາໂຣນຈະຖວາຍງົວເປັນເຄື່ອງໄຖ່ບາບຂອງຕົນ ແລະຈະທຳການລຶບມົນທິນບາບຕົນເອງກັບຄອບຄົວຂອງ
ຕົນ ເຂົາຈະຂ້າງົວເປັນເຄື່ອງບູຊາໄຖ່ບາບຂອງເຂົາເອງ
12 ແລະອາໂຣນຈະເອົາກະຖາງໄຟທີ່ມີຖ່ານລຸກຢູ່ມາຈາກແທ່ນບູຊາຕໍ່ພຣະພັກພຣະຜູ້ເປັນເຈົ້າ ແລະເຄື່ອງຫອມ
ທຸບລະອຽດສອງກຳມືນຳເຂົ້າໄປພາຍໃນຜ້າກັ້ງ
13 ແລ້ວເອົາເຄື່ອງຫອມນັ້ນໃສ່ໄຟຖວາຍແດ່ພຣະຜູ້ເປັນເຈົ້າ ໃຫ້ຄວັນເຄື່ອງຫອມຂຶ້ນຄຸມພຣະທີ່ນັ່ງກະຣຸນາຊຶ່ງຢູ່
ເຫນືອຫີບຄຳສັນຍາ ຢ້ານວ່າເຂົາຈະຕ້ອງຕາຍ
14 ເຂົາຈະເອົາເລືອດງົວມາຊິດໃສ່ທີ່ຫນ້າພຣະທີ່ນັ່ງກະຣຸນາດ້ວຍນິ້ວ ແລ້ວຈະຊິດໃສ່ທີ່ພຣະທີ່ນັ່ງກະຣຸນາເຈັດ
ເທື່ອດ້ວຍນິ້ວຂອງເຂົາ
15 ແລ້ວອາໂຣນຈະຂ້າແບ້ອັນເປັນເຄື່ອງບູຊາໄຖ່ບາບສຳລັບປະຊາຊົນ ແລະນຳເລືອດແບ້ເຂົ້າໄປໃນພາຍໃນຜ້າ
ກັ້ງ ແລະເອົາເລືອດແບ້ໄປກະທຳເຊັ່ນດຽວກັບກະທຳເລືອດງົວ ຄືຊິດໃສ່ເທິງພຣະທີ່ນັ່ງກະຣຸນາແລະທີ່ຂ້າງ
ຫນ້າພຣະທີ່ນັ່ງກະຣຸນາ
16 ດັ່ງນີ້ແຫລະເຂົາຈະທຳການລຶບມົນທິນຂອງສະຖານສັກສິດ ເພາະເຫດມົນທິນຂອງຄົນອິສຣາເອນ ແລະເພາະ
ເຫດການທໍຣະຍົດ ເພາະບາບທັງສິ້ນຂອງເຂົາ ແລະອາໂຣນຈະກະທຳຕໍ່ເຕັນນັດພົບຊຶ່ງຢູ່ກັບເຂົາຖ້າມກາງມົນ
ທິນຂອງປະຊາຊົນ
17 ຢ່າໃຫ້ມີຜູ້ໃດຢູ່ໃນເຕັນນັດພົບ ເມື່ອອາໂຣນເຂົ້າໄປທຳການລຶບມົນທິນໃນສະຖານສັກສິດ ຈົນກວ່າເຂົາຈະ
ອອກມາແລະທຳການລຶບມົນທິນສຳລັບຕົວເຂົາ ແລະສຳລັບຄອບຄົວຂອງເຂົາ ແລະສຳລັບຊຸມນຸມຊົນອິສຣາ
ເອນ
18 ແລະອາໂຣນຈະອອກໄປຍັງແທ່ນຊຶ່ງຢູ່ຕໍ່ພຣະພັກພຣະຜູ້ເປັນເຈົ້າ ແລະທຳການລຶບມົນທິນແທ່ນນັ້ນ ເຂົາຈະ
ເອົາເລືອດງົວ ເລືອດແບ້ ຊິດໃສ່ຍອດຂອງແທ່ນໂດຍຮອບ
19 ແລະເອົານິ້ວຈຸ່ມເລືອດຊິດໃສ່ແທ່ນນັ້ນເຈັດຄັ້ງ ແລະຊຳຣະກະທຳໃຫ້ແທ່ນບໍຣິສຸດພົ້ນຈາກມົນທິນຂອງຄົນອິສ
ຣາເອນ
20 “ເມື່ອອາໂຣນເສັດຈາກການລຶບມົນທິນຂອງສະຖານສັກສິດ ແລະເຕັນນັດພົບແລະແທ່ນບູຊາແລ້ວ ເຂົາຈະ
ຖວາຍແບ້ໂຕທີ່ເປັນຢູ່
21 ແລະອາໂຣນຈະເອົາມືທັງສອງວາງເທິງຫົວແບ້ທີ່ມີຊີວິດນັ້ນ ແລະກ່າວຄຳສາຣະພາບບັນດາບາບຂອງຄົນອິສ
ຣາເອນ ແລະການທໍຣະຍົດທັງຫມົດ ແລະບາບທັງສິ້ນໃຫ້ຕົກລົງເທິງຫົວແບ້ນັ້ນ ແລະໃຫ້ຄົນທີ່ຕຽມມືໄວ້ພ້ອມ
ແລ້ວມານຳແບ້ໄປປ່ອຍເຂົ້າຖິ່ນກັນດານ
22 ແບ້ນັ້ນຈະບັນທຸກມົນທິນທັງຫມົດໄປຍັງທີ່ປ່ຽວ ແລ້ວເຂົາກໍປ່ອຍໃຫ້ມັນເຂົ້າຖິ່ນກັນດານໄປ
23 “ແລ້ວອາໂຣນຈະເຂົ້າມາໃນເຕັນນັດພົບ ເຂົາຈະແກ້ເຄື່ອງນຸ່ງຜ້າປ່ານຊຸດທີ່ແຕ່ງເຂົ້າໄປໃນສະຖານທີ່ສັກສິດ
ອອກເສັຽເກັບໄວ້ທີ່ນັ້ນ
24 ແລະເຂົາຈະຊຳຣະຕົວໃນນ້ຳໃນທີ່ບໍຣິສຸດແລ້ວນຸ່ງເຄື່ອງຂອງຕົນ ແລະເດີນອອກມາຖວາຍເຄື່ອງເຜົາບູຊາຂອງ
ຕົນ ແລະເຄື່ອງເຜົາບູຊາຂອງປະຊາຊົນ ແລະທຳການລຶບມົນທິນຂອງຕົນເອງກັບປະຊາຊົນທັງຫລາຍ
25 ເຂົາຈະເອົາໄຂມັນຂອງເຄື່ອງບູຊາໄຖ່ບາບໄປເຜົາເສັຽເທິງແທ່ນ
26 ຜູ້ທີ່ປ່ອຍແບ້ໄປໃຫ້ອາຊາເຊນນັ້ນຈະຕ້ອງຊັກເຄື່ອງນຸ່ງຂອງຕົນ ແລ້ວຕໍ່ມາຈຶ່ງຈະເຂົ້າໃນຄ້າຍໄດ້
27 ເຂົາຈະເອົາງົວຊຶ່ງເປັນເຄື່ອງບູຊາໄຖ່ບາບແລະແບ້ຊຶ່ງເປັນເຄື່ອງບູຊາໄຖ່ບາບທີ່ອາໂຣນເອົາເລືອດໄປທຳການ
ລຶບມົນທິນສະຖານສັກສິດນັ້ນໄປເສັຽຂ້າງນອກຄ້າຍ ແລະເຂົາຈະເຜົາຊີ້ນຫນັງແລະມູນເສັຽດ້ວຍໄຟ

28 ຜູ້ທີ່ທຳການເຜົາກໍຕ້ອງຊັກເຄື່ອງນຸ່ງຂອງຕົນແລະອາບນໍ້າ ພາຍຫລັງເຂົາຈຶ່ງຈະກັບເຂົ້າຄ້າຍໄດ້
29 "ໃຫ້ເປັນກົດເກນຖາວອນແກ່ເຈົ້າທັງຫລາຍວ່າໃນວັນທີສິບເດືອນທີເຈັດ ເຈົ້າຕ້ອງບັງຄັບໃຈຕົນເອງບໍ່ກະທຳ
ການງານສິ່ງໃດ ທັງຕົວຊາວເມືອງເອງຫລືຄົນຕ່າງດ້າວທີ່ອາໄສຢູ່ຖ້າມກາງເຈົ້າ
30 ເພາະວ່າໃນວັນນີ້ຈະກະທຳການລຶບມົນທິນບາບຂອງເຈົ້າ ແລະຊໍາຣະເຈົ້າ ເຈົ້າຈະສະອາດຕໍ່ພຣະພັກພຣະຜູ້
ເປັນເຈົ້າ ພົ້ນຈາກບາບທັງສິ້ນຂອງເຈົ້າ
31 ເປັນວັນສະບາໂຕໃຫ້ເຈົ້າທັງຫລາຍຢຸດພັກສງົບ ແລະເຈົ້າຕ້ອງບັງຄັບໃຈຂອງເຈົ້າ ທັງນີ້ໃຫ້ເປັນກົດເກນຖາ
ວອນ
32 ປະໂຣຫິດທີ່ຖືກເຈີມ ແລະຖືກຊໍາຣະໃຫ້ບໍຣິສຸດແທນບິດາຂອງຕົນຈະຕ້ອງທຳການລຶບມົນທິນໂດຍນຸ່ງເສື້ອ
ປ່ານບໍຣິສຸດ
33 ໃຫ້ເຂົາທຳການລຶບມົນທິນແກ່ສະຖານສັກສິດ ແລະເຂົາຈະທຳການລຶບມົນທິນໃຫ້ແກ່ເຕັນນັດພົບແລະໃຫ້ແກ່
ແທ່ນ ແລະເຂົາຈະທຳການລຶບມົນທິນໃຫ້ແກ່ປະໂຣຫິດ ແລະປະຊາຊົນທັງຫມົດໃນຊຸມນຸມຊົນນັ້ນ
34 ທັງນີ້ໃຫ້ເປັນກົດເກນຖາວອນແກ່ເຈົ້າທັງຫລາຍ ໃຫ້ທຳການລຶບມົນທິນເພື່ອຄົນອິສຣາເອນປີລະຄັ້ງ ເພາະບາບ
ທັງສິ້ນຂອງເຂົາ" ແລະໂມເຊກໍກະທຳຕາມທີ່ພຣະຜູ້ເປັນເຈົ້າຊົງບັນຊາທ່ານໄວ້

## 17 ສະຖານທີ່ແຫ່ງດຽວສຳລັບການສັກກາຣະບູຊາ

The Slaughtering of Animals

1 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ,
2 "ຈົ່ງກ່າວແກ່ອາໂຣນແລະບຸດທັງຫລາຍຂອງເຂົາ ແລະແກ່ຄົນອິສຣາເອນວ່າ ຕໍ່ໄປນີ້ເປັນສິ່ງຊຶ່ງພຣະຜູ້ເປັນເຈົ້າ
ໄດ້ຊົງບັນຊາໄວ້
3 ຖ້າຊາວອິສຣາເອນຄົນໃດຂ້າງົວ ຫລືລູກແກະ ຫລືແບ້ໃນຄ້າຍ ຫລືຂ້າພາຍນອກຄ້າຍ
4 ແລະບໍ່ໄດ້ນຳມາທີ່ປະຕູເຕັນນັດພົບ ເພື່ອຖວາຍເປັນຂອງບູຊາແດ່ພຣະຜູ້ເປັນເຈົ້າ ທີ່ຫນ້າທໍາເຕັນແຫ່ງພຣະຜູ້
ເປັນເຈົ້າ ຜູ້ນັ້ນຕ້ອງມີໂທດດ້ວຍມີກັມບາບເຣື່ອງເລືອດ ຄືເຂົາທຳໃຫ້ເລືອດຕົກ ໃຫ້(ອະເປທີ) ຕັດຜູ້ນັ້ນເສັຽ
ຈາກຊົນຊາດຂອງຕົນ
5 ທັງນີ້ເພື່ອປະສົງໃຫ້ຄົນອິສຣາເອນນຳເຄື່ອງຖວາຍຊຶ່ງເຂົາຂ້າທີ່ພື້ນທົ່ງ ມາຖວາຍແດ່ພຣະຜູ້ເປັນເຈົ້າ ມາຍັງປະ
ໂຣຫິດທີ່ປະຕູເຕັນນັດພົບ ແລະຂ້າສັດນັ້ນເປັນສານຕິບູຊາຖວາຍແດ່ພຣະຜູ້ເປັນເຈົ້າ
6 ແລະປະໂຣຫິດຈະເອົາເລືອດສັດນັ້ນຊິດໃສ່ເທິງແທ່ນບູຊາພຣະຜູ້ເປັນເຈົ້າທີ່ປະຕູເຕັນນັດພົບ ແລະເຜົາໄຂມັນ
ໃຫ້ເປັນກິ່ນທີ່ພໍພຣະທັຍຖວາຍແດ່ພຣະຜູ້ເປັນເຈົ້າ
7 ເຂົາກໍຈະບໍ່ຂ້າສັດບູຊາແບ້ຜີປີສາດອີກຕໍ່ໄປ ຊຶ່ງເຂົາທັງຫລາຍຫລົ້ນຊູ້ນັ້ນ ໃຫ້ເຣື່ອງນີ້ເປັນກົດເກນແກ່ເຂົາຕ
ລອດຊົ່ວຊາດ  ເຊື້ອສາຍຂອງເຂົາ
8 "ແລະເຈົ້າຈົ່ງກ່າວແກ່ເຂົາວ່າ ວົງວານອິສຣາເອນຄົນໃດຫລືຄົນຕ່າງດ້າວຄົນໃດຜູ້ອາໄສຢູ່ໃນຫມູ່ພວກເຂົາ ຜູ້
ຖວາຍເຄື່ອງເຜົາບູຊາ ຫລືເຄື່ອງສັດບູຊາ
9 ແລະບໍ່ໄດ້ນຳເຄື່ອງສັຕບູຊານັ້ນມາທີ່ປະຕູເຕັນນັດພົບເພື່ອຖວາຍແດ່ພຣະຜູ້ເປັນເຈົ້າກໍໃຫ້ຕັດຜູ້ນັ້ນເສັຽຈາກ
ຊົນຊາດຂອງ ຕົນ

Eating Blood Prohibited

10 "ຖ້າວົງວານອິສຣາເອນຫລືຄົນຕ່າງດ້າວຄົນໃດຜູ້ອາໄສຢູ່ຖ້າມກາງເຂົາຮັບປະທານເລືອດ ເຮົາຈະຫມາຍຫນ້າ
ບຸກຄົນຜູ້ຮັບປະທານເລືອດນັ້ນ ແລະຈະຕັດເຂົາເສັຽຈາກຊົນຊາດຂອງຕົນ

11 ເພາະວ່າຊີວິດຂອງເນື້ອໜັງຢູ່ໃນເລືອດ ເຮົາໄດ້ໃຫ້ເລືອດແກ່ເຈົ້າເພື່ອໃຊ້ເທິງແທ່ນ ເພື່ອຈະທຳການລຶບມົນທິນບາບແຫ່ງວິນຍານຈິດຂອງເຈົ້າ ເພາະວ່າໂລຫິດເປັນສິ່ງທີ່ທຳການລຶບມົນທິນບາບ ດ້ວຍຊີວິດເປັນເຫດ
12 ເພາະສະນັ້ນເຮົາຈຶ່ງໄດ້ເວົ້າກັບຄົນອິສຣາເອນວ່າ ໃນພວກເຈົ້າຢ່າໃຫ້ຄົນໃດຮັບປະທານເລືອດເລີຍ ຫລືຄົນຕ່າງດ້າວຜູ້ອາໄສຖ້າມກາງເຈົ້າກໍຢ່າໄດ້ຮັບປະທານເລືອດ
13 ຄົນອິສຣາເອນຄົນໃດຫລືຄົນຕ່າງດ້າວທີ່ອາໄສຢູ່ຖ້າມກາງເຂົາ ໄປລ້າສັດຫລືນົກເພື່ອນຳມາຮັບປະທານກໍໃຫ້ຫລັ່ງເລືອດອອກແລ້ວເອົາຝຸ່ນດິນຖົມໄວ້
14 "ເພາະວ່າຊີວິດຂອງສັດທຸກໂຕກໍຄືເລືອດຂອງມັນນັ້ນເອງ ເຫດສັນນັ້ນເຮົາຈຶ່ງໄດ້ກ່າວແກ່ປະຊາຊົນອິສຣາເອນວ່າ ເຈົ້າຢ່າຮັບປະທານເລືອດຂອງສັດໃດໆເລີຍ ເພາະວ່າຊີວິດຂອງສັດທຸກໂຕກໍຄືເລືອດຂອງມັນນັ້ນເອງ ຜູ້ໃດຮັບປະທານກໍຕ້ອງຖືກຕັດອອກ
15 ແລະທຸກຄົນບໍ່ວ່າຊາວເມືອງຫລືຄົນຕ່າງດ້າວຜູ້ຮັບປະທານສັດທີ່ຕາຍເອງຫລືສັດທີ່ຖືກສັດອື່ນກັດຕາຍ ຕ້ອງຊັກເຄື່ອງນຸ່ງແລະອາບນໍ້າ ແລະເປັນມົນທິນຢູ່ຈົນເຖິງເວລາຄໍ່າ ແລ້ວຈຶ່ງຈະສະອາດໄດ້
16 ຖ້າເຂົາບໍ່ຊັກເຄື່ອງນຸ່ງ ຫລືອາບນໍ້າ ເຂົາຕ້ອງຮັບໂທດຂອງເຂົາ"

## 18 ຫ້າມການລ່ວງປະເວນີ

Sexual Relations

1 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ,
2 "ຈົ່ງກ່າວແກ່ຄົນອິສຣາເອນວ່າ ເຮົາຄືພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າ
3 ເຈົ້າທັງຫລາຍຢ່າກະທຳດັ່ງທີ່ເຂົາກະທຳກັນໃນແຜ່ນດິນເອຢິບຊຶ່ງເຈົ້າເຄີຍອາໄສຢູ່ນັ້ນ ແລະເຈົ້າຢ່າກະທຳດັ່ງທີ່ເຂົາກະທຳກັນໃນແຜ່ນດິນການາອານຊຶ່ງເຮົາກຳລັງພາເຈົ້າໄປນັ້ນ ເຈົ້າຢ່າປະພຶດຕາມກົດເກນຂອງເຂົາ
4 ເຈົ້າທັງຫລາຍຈົ່ງກະທຳຕາມກົດໝາຍຂອງເຮົາແລະຮັກສາກົດເກນຂອງເຮົາແລະປະພຶດຕາມ ເຮົາຄືພຣະຜູ້ເປັນເຈົ້າ ພຣະເຈົ້າຂອງເຈົ້າ
5 ເພາະສະນັ້ນເຈົ້າທັງຫລາຍຈຶ່ງຕ້ອງຮັກສາກົດເກນຂອງເຮົາ ແລະກົດໝາຍຂອງເຮົາດ້ວຍການກະທຳຕາມນັ້ນແຫລະ ມະນຸດຈຶ່ງຈະມີຊີວິດຢູ່ໄດ້ ເຮົາຄືພຣະຜູ້ເປັນເຈົ້າ
6 "ເຈົ້າຢ່າໃຫ້ຜູ້ໃດສົມສູ່ກັບຍາດຕິພີ່ນ້ອງຂອງຕົນ ເຮົາຄືພຣະຜູ້ເປັນເຈົ້າ
7 ເຈົ້າຢ່າທຳໃຫ້ພໍ່ຂອງຕົນຕ້ອງອັບອາຍຂາຍໜ້າໂດຍສົມສູ່ກັບແມ່ຂອງຕົນ ຢ່າທຳໃຫ້ແມ່ຂອງຕົນຕ້ອງອັບອາຍຂາຍໜ້າ
8 ເຈົ້າຢ່າທຳໃຫ້ພໍ່ຂອງຕົນຕ້ອງອັບອາຍຂາຍໜ້າໂດຍສົມສູ່ກັບພັຣຍາຄົນອື່ນໆຂອງທ່ານ
9 ເຈົ້າຢ່າສົມສູ່ກັບເອື້ອຍ ຫລືນ້ອງສາວຂອງເຈົ້າ ຜູ້ເປັນລູກສາວຂອງພໍ່ ຫລືຂອງແມ່ເຈົ້າ ຜູ້ໄດ້ເກີດໃນເຮືອນ ຫລືເກີດໃນທີ່ຕ່າງດ້າວ
10 ເຈົ້າຢ່າສົມສູ່ກັບລູກຍິງຂອງລູກຊາຍຂອງເຈົ້າ ຫລືຂອງບຸດຍິງຂອງລູກສາວຂອງເຈົ້າ ເຫດວ່າຂອງລັບຂອງເຂົາເປັນຂອງລັບຂອງເຈົ້າ
11 ເຈົ້າຢ່າສົມສູ່ກັບລູກສາວຂອງເມັຽພໍ່ເຈົ້າ ຊຶ່ງໄດ້ເກີດຈາກພໍ່ເຈົ້າເອງ ເປັນເອື້ອຍເປັນນ້ອງສາວຂອງເຈົ້າ
12 ເຈົ້າຢ່າສົມສູ່ກັບເອື້ອຍຫລືນ້ອງສາວຂອງພໍ່ເຈົ້າ ເພາະນາງເປັນຍາດຍິງທີ່ສນິດຂອງພໍ່ເຈົ້າ
13 ເຈົ້າຢ່າສົມສູ່ກັບເອື້ອຍຫລືນ້ອງສາວຂອງແມ່ເຈົ້າ ເພາະນາງເປັນຍາດຍິງທີ່ສນິດຂອງແມ່ເຈົ້າ
14 ເຈົ້າຢ່າສົມສູ່ກັບພັຣຍາຂອງອ້າຍ ຫລືນ້ອງຊາຍຂອງເຈົ້າ ເພາະນາງເປັນປ້າສະໃພ້ ແລະອາສະໃພ້ຂອງເຈົ້າ
15 ເຈົ້າຢ່າສົມສູ່ກັບລູກໃພ້ຂອງເຈົ້າ ນາງເປັນພັຣຍາລູກຊາຍເຈົ້າ
16 ເຈົ້າຢ່າສົມສູ່ກັບພັຣຍາອ້າຍ ຫລືພັຣຍານ້ອງຊາຍຂອງເຈົ້າ ເພາະນາງເປັນຂອງພີ່ນ້ອງຜູ້ຊາຍຂອງເຈົ້າ

17 ເຈົ້າຢ່າສົມສູ່ກັບຍິງຄົນນຶ່ງກັບລູກສາວຂອງນາງ ແລະເຈົ້າຢ່າເອົາລູກສາວຂອງລູກຊາຍຂອງນາງຫລືລູກສາວ
ຂອງລູກສາວຂອງນາງ ເພາະວ່າເຂົາເປັນຍາດຍິງທີ່ສນິດ ເປັນການອະທັມ
18 ແລະເຈົ້າຢ່າສົມສູ່ກັບເອື້ອຍຫລືນ້ອງສາວຂອງພັຣຍາ ມາເປັນຄູ່ແຂ່ງກັບພັຣຍາ ເມື່ອພັຣຍາຍັງມີຊີວິດຢູ່
19 "ເມື່ອຍິງຄົນໃດກຳລັງມີປະຈຳເດືອນ ເພາະວ່ານາງເປັນມົນທິນ
20 ເຈົ້າຢ່າສົມສູ່ກັບພັຣຍາຂອງເພື່ອນບ້ານຂອງເຈົ້າ ກະທຳໃຫ້ຕົວເຈົ້າລາມົກອານາຈານກັບນາງ
21 ເຈົ້າຢ່າຖວາຍລູກຫລານຂອງເຈົ້າໃຫ້ພຣະໂມເລກ ດ້ວຍໃຫ້ລຸຍໄຟ ກະທຳໃຫ້ພຣະນາມພຣະເຈົ້າຂອງເຈົ້າ
ເສື່ອມເສັຽກຽດ ເຮົາຄືພຣະຜູ້ເປັນເຈົ້າ
22 ເຈົ້າຢ່າສົມສູ່ກັບຜູ້ຊາຍໃຊ້ຕ່າງຜູ້ຍິງເປັນສິ່ງທີ່ໜ້າກຽດໜ້າຊັງ
23 ເຈົ້າຢ່າສົມສູ່ກັບສັດເດັຽຣະສານ ກະທຳຕົນໃຫ້ລາມົກອານາຈານ ຫລືຢ່າໃຫ້ຍິງຄົນໃດຍອມຕົວສົມສູ່ກັບສັດ
ເດັຽຣະສານ ເພາະການເຮັດຢ່າງບ້າຄັ່ງເຊັ່ນນີ້ ພາໃຫ້ພວກເຈົ້າເປັນມົນທິນ
24 "ເຈົ້າທັງຫລາຍຢ່າກະທຳຕົວໃຫ້ຖ່ອຍຮ້າຍອານາຈານດ້ວຍສິ່ງເຫລົ່ານີ້ເລີຍ ເພາະວ່າບັນດາປະຊາຊາດ ທີ່ເຮົາ
ໄດ້ໄລ່ໄປເສັຽຕໍ່ໜ້າເຈົ້ານັ້ນ ກະທຳລາມົກອານາຈານຢ່າງນີ້ເອງ
25 ແລະແຜ່ນດິນນັ້ນກໍເປັນມົນທິນ ເຮົາຈຶ່ງຕ້ອງລົງໂທດແກ່ແຜ່ນດິນນັ້ນ ແລະແຜ່ນດິນກໍເປັນສ້ຽນໜາມຕໍ່ຄົນທີ່
ເຄີຍຢູ່ອາໄສ
26 ແຕ່ເຈົ້າທັງຫລາຍຈະຕ້ອງຮັກສາກົດເກນຂອງເຮົາ ແລະກົດໝາຍຂອງເຮົາ ແລະຢ່າກະທຳສິ່ງທີ່ໜ້າລັງກຽດ
ເຫລົ່ານີ້ ບໍ່ວ່າເປັນຊາວເມືອງຫລືຄົນຕ່າງດ້າວຜູ້ອາໄສຢູ່ໃນໝູ່ພວກເຈົ້າ
27 (ປະຊາຊົນໃນແຜ່ນດິນຜູ້ຢູ່ກ່ອນໄດ້ກະທຳສິ່ງທີ່ໜ້າລັງກຽດເຫລົ່ານີ້ ດັ່ງນັ້ນແຜ່ນດິນກາຍເປັນມົນທິນ)
28 ຢ້ານວ່າເມື່ອເຈົ້າທັງຫລາຍທຳໃຫ້ແຜ່ນດິນເປັນມົນທິນ ແຜ່ນດິນກໍຈະເປັນສ້ຽນໜາມຕໍ່ພວກເຈົ້າ ດັ່ງທີ່ແຜ່ນ
ດິນໄດ້ເປັນສ້ຽນໜາມແກ່ປະຊາຊາດທີ່ຢູ່ກ່ອນເຈົ້າອອກໄປນັ້ນ
29 ເພາະຜູ້ໃດກະທຳສິ່ງທີ່ໜ້າລັງກຽດເຫລົ່ານີ້ ໃຫ້ຕັດຜູ້ກະທຳນັ້ນເສັຽຈາກຊົນຊາດຂອງຕົນ
30 ເຫດສະນັ້ນເຈົ້າທັງຫລາຍຈົ່ງປະຕິບັດຕາມຄຳສັ່ງຂອງເຮົາ ຢ່າປະພຶດຕາມທັມນຽມອັນໜ້າລັງກຽດ ຊຶ່ງເຂົາ
ປະພຶດກັນຢູ່ຕໍ່ໜ້າເຈົ້າ ແລະຢ່າທຳຕົວເຈົ້າໃຫ້ເປັນມົນທິນດ້ວຍສິ່ງເຫລົ່ານີ້ ເຮົາຄື
ພຣະຜູ້ເປັນເຈົ້າ ພຣະເຈົ້າຂອງເຈົ້າ"

## 19 ກົດໝາຍເຣື່ອງຄວາມບໍຣິສຸດ ແລະຄວາມຍຸດຕິທັມ

Ritual and Moral Holiness

1 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ,
2 "ຈົ່ງກ່າວແກ່ຊຸມນຸມຊົນອິສຣາເອນວ່າ ເຈົ້າທັງຫລາຍຕ້ອງບໍຣິສຸດ ເພາະເຮົາຄືພຣະຜູ້ເປັນເຈົ້າ ພຣະເຈົ້າຂອງ
ເຈົ້າເປັນບໍຣິສຸດ
3 ເຈົ້າທຸກຄົນຕ້ອງໂຄຣົບມານດາແລະບິດາຂອງຕົນ ແລະເຈົ້າຕ້ອງຮັກສາບັນດາສະບາໂຕຂອງເຮົາ ເຮົາຄືພຣະ
ຜູ້ເປັນເຈົ້າ ພຣະເຈົ້າຂອງເຈົ້າ
4 ຢ່າໃຫ້ຜູ້ໃດກັບບັນຖືຮູບໂຄຣົບ ຫລືຫລໍ່ພຣະໄວ້ເປັນຮູບໂຄຣົບສຳລັບຕົນ ເຮົາຄືພຣະຜູ້ເປັນເຈົ້າພຣະເຈົ້າຂອງ
ເຈົ້າ
5 "ເມື່ອເຈົ້າຖວາຍສານຕິບູຊາແດ່ພຣະຜູ້ເປັນເຈົ້າ ຈົ່ງຖວາຍເພື່ອໃຫ້ເຈົ້າເປັນທີ່ພໍພຣະທັຍ
6 ເຈົ້າຈົ່ງຮັບປະທານເຄື່ອງບູຊານັ້ນເສັຽໃນວັນທີ່ເຈົ້າຖວາຍບູຊາ ຫລືໃນວັນຮຸ່ງຂຶ້ນ ຖ້າມີສ່ວນໃດເຫລືອຢູ່ຈົນວັນ
ທີສາມ ຈົ່ງເຜົາໄຟເສັຽ
7 ຖ້າເອົາເຄື່ອງບູຊານັ້ນມາຮັບປະທານໃນວັນທີສາມກໍເປັນການໜ້າລັງກຽດ ບໍ່ເປັນທີ່ພໍພຣະທັຍ

8 ແລະທຸກຄົນທີ່ຮັບປະທານເຄື່ອງບູຊານັ້ນຕ້ອງຮັບໂທດ ເພາະເຂົາໄດ້ກະທຳສິ່ງບໍຣິສຸດຂອງພຣະຜູ້ເປັນເຈົ້າໃຫ້
ມົນທິນ ໃຫ້ຕັດຜູ້ນັ້ນເສັຽຈາກຊົນຊາດຂອງຕົນ
9 “ເມື່ອເຈົ້າທັງຫລາຍກ່ຽວເຂົ້າໃນນາ ຢ່າເກັບກ່ຽວເຂົ້າທີ່ຂອບນາໃຫ້ຫມົດ ເມື່ອກ່ຽວແລ້ວກໍຢ່າເກັບເຂົ້າທີ່ຕົກ
10 ຢ່າເກັບຜົນທີ່ສວນອະງຸ່ນໃຫ້ຫມົດ ເຈົ້າຢ່າເກັບອະງຸ່ນທີ່ຕົກໃນສວນຂອງເຈົ້າ ຈົ່ງເຫລືອໄວ້ໃຫ້ຄົນຍາກຈົນແລະ
ຄົນຕ່າງດ້າວແດ່ ເຮົາຄືພຣະຜູ້ເປັນເຈົ້າພຣະເຈົ້າຂອງພວກເຈົ້າ
11 “ເຈົ້າຢ່າລັກຊັບ ຫລືໂກງ ຫລືມຸສາຕໍ່ກັນ
12 ຢ່າສາບານອອກນາມຂອງເຮົາເປັນຄວາມເທັດ ກະທຳໃຫ້ພຣະນາມພຣະຜູ້ເປັນເຈົ້າຂອງເຈົ້າເປັນທີ່ຢຽດ
ຫຍາມ ເຮົາຄືພຣະຜູ້ເປັນເຈົ້າ
13 “ເຈົ້າຢ່າບີບຄັ້ນເພື່ອນບ້ານຫລືປຸ້ນເຂົາ ຢ່າໃຫ້ຄ່າຈ້າງຂອງລູກຈ້າງຄ້າງຢູ່ກັບເຈົ້າຈົນເຖິງຮຸ່ງເຊົ້າ
14 ເຈົ້າຢ່າດ່າຄົນຫູຫນວກ ຫລືວາງຂອງໃຫ້ຄົນຕາບອດສະດຸດ ແຕ່ເຈົ້າຈົ່ງຢຳເກງພຣະເຈົ້າຂອງເຈົ້າ ເຮົາຄືພຣະຜູ້
ເປັນເຈົ້າ
15 “ເຈົ້າຢ່າພິພາກສາດ້ວຍຄວາມອະຍຸດຕິທັມ ເຈົ້າຢ່າລຳອຽງເຂົ້າຂ້າງຄົນຈົນ ຫລືເຫັນແກ່ຫນ້າຜູ້ເປັນໃຫຍ່ ແຕ່
ເຈົ້າຈົ່ງພິພາກສາເພື່ອນບ້ານຂອງເຈົ້າດ້ວຍຄວາມຊອບທັມ
16 ຢ່າທ່ຽວຂຶ້ນທ່ຽວລົງໃສ່ຮ້າຍປ້າຍສີຄົນອື່ນຖ້າມກາງຊົນຊາດຂອງຕົນ ແລະຢ່າປອງຮ້າຍຕໍ່ຊີວິດຂອງເພື່ອນບ້ານ
ເຮົາຄືພຣະຜູ້ເປັນເຈົ້າ
17 “ຢ່າກຽດຊັງພີ່ນ້ອງຂອງເຈົ້າຢູ່ໃນໃຈ ແຕ່ເຈົ້າຈົ່ງຕັກເຕືອນເພື່ອນບ້ານຂອງເຈົ້າ ເພື່ອເຈົ້າຈະບໍ່ຕ້ອງຮັບໂທດ
ເພາະເຂົາ
18 ເຈົ້າຢ່າແກ້ແຄ້ນຫລືຜູກພຍາບາດລູກຫລານຍາດພີ່ນ້ອງຂອງເຈົ້າ ແຕ່ເຈົ້າຈົ່ງຮັກເພື່ອນບ້ານເຫມືອນຮັກຕົນ
ເອງ ເຮົາຄືພຣະຜູ້ເປັນເຈົ້າ
19 “ເຈົ້າຈົ່ງຮັກສາກົດເກນຂອງເຮົາ ເຈົ້າຢ່າສະສົມສັດຂອງເຈົ້າກັບສັດປະເພດອື່ນ ເຈົ້າຢ່າຫວ່ານພືດປົນກັນສອງ
ຊະນິດໃນນາຂອງເຈົ້າ ຢ່າໃຊ້ເຄື່ອງນຸ່ງທີ່ທຳດ້ວຍຜ້າສອງຊະນິດປົນກັນ
20 “ຖ້າຜູ້ໃດເຂົ້ານອນກັບຜູ້ຍິງທີ່ເປັນທາດ ທີ່ຊາຍອີກຄົນນຶ່ງສູ່ຂໍໄວ້ແລ້ວ ແຕ່ຍັງບໍ່ໄດ້ໄຖ່ຖອນຫລືປ່ອຍເປັນອິສ
ຣະ ຕ້ອງສືບສວນເບິ່ງກ່ອນແຕ່ຢ່າໃຫ້ເຖິງຕາຍ ເພາະວ່າທາດຍິງນັ້ນຍັງບໍ່ເປັນອິສຣະ
21 ແຕ່ໃຫ້ຜູ້ນັ້ນນຳເຄື່ອງບູຊາໄຖ່ກັມບາບສຳລັບຕົວເຂົາຖວາຍແດ່ພຣະຜູ້ເປັນເຈົ້າທີ່ປະຕູເຕັນນັດພົບ ຄືແກະເຖິກ
ໂຕນຶ່ງເປັນເຄື່ອງບູຊາໄຖ່ກັມບາບ
22 ແລະປະໂຣຫິດຈະທຳການລົບມົນທິນບາບຂອງເຂົາດ້ວຍຖວາຍແກະເຖິກນັ້ນເປັນເຄື່ອງບູຊາໄຖ່ບາບກັມແດ່ພ
ຣະຜູ້ເປັນເຈົ້າ ເພາະບາບຊຶ່ງເຂົາໄດ້ກະທຳໄປ ແລະໃຫ້ເຂົາໄດ້ຮັບການອະພັຍບາບທີ່ເຂົາໄດ້ກະທຳໄປນັ້ນເສັຽ
23 “ເມື່ອເຈົ້າເຂົ້າໄປໃນແຜ່ນດິນ ແລະປູກຕົ້ນໄມ້ທຸກຊະນິດທີ່ມີຜົນເປັນອາຫານ ຜົນທີ່ໄດ້ນັ້ນຕ້ອງເປັນຜົນທີ່ຕ້ອງ
ຫ້າມສາມປີ ເຈົ້າຢ່າຮັບປະທານເລີຍ
24 ແລະປີທີສີ່ ຜົນທີ່ໄດ້ທັງຫມົດຈະເປັນຂອງບໍຣິສຸດ ເປັນເຄື່ອງບູຊາຍົກຍໍພຣະກຽດແດ່ພຣະຜູ້ເປັນເຈົ້າ
25 ແຕ່ໃນປີທີຫ້າເຈົ້າຈົ່ງຮັບປະທານຜົນຫມາກໄມ້ນັ້ນໄດ້ ເພື່ອຈະບັງເກີດຜົນທະວີຂຶ້ນເພື່ອເຈົ້າ ເຮົາຄືພຣະຜູ້ເປັນ
ເຈົ້າພຣະເຈົ້າຂອງເຈົ້າ
26 “ເຈົ້າຢ່າຮັບປະທານຊີ້ນສັດມີເລືອດໃນຊີ້ນນັ້ນເຈົ້າຢ່າເປັນຫມໍດູ ຫລືເປັນຫມໍຜີ
27 ເຈົ້າຢ່າກຽນຜົມກາຍຫູຂຶ້ນໄປ ຫລືກຽນຮິມຫນວດຂອງພວກເຈົ້າ
28 ເຈົ້າຢ່າປາດເນື້ອຂອງເຈົ້າເພາະເຫດມີຄົນຕາຍ ຫລືສັກເປັນເຄື່ອງຫມາຍໃດໆລົງທີ່ຕົວເຈົ້າ ເຮົາຄືພຣະຜູ້ເປັນ
ເຈົ້າ

29 “ຢ່າທຳບຸດສາວຂອງຕົນໃຫ້ເປັນຄົນຖ່ອຍຮ້າຍດ້ວຍໃຫ້ເປັນຍິງໂສເພນີ ຢ້ານວ່າແຜ່ນດິນນັ້ນຈະເປັນຖິ່ນການຫລິ້ນຊູ້ ແລະແຜ່ນດິນຈະເຕັມດ້ວຍການຊົ່ວຮ້າຍຫນ້າອັບອາຍ

30 ເຈົ້າຈົ່ງຮັກສາສະບາໂຕທັງຫລາຍຂອງເຮົາ ແລະເຄົາຣົບຕໍ່ສະຖານທີ່ນະມັສການຂອງເຮົາ ເຮົາຄືພຣະຜູ້ເປັນເຈົ້າ

31 “ຢ່າໄປຫາຄົນຫມໍຜີທີ່ປຸກວິນຍານຄົນຂຶ້ນມາປຶກສາ ຫລືພໍ່ມົດ ແມ່ມົດ ຢ່າຫຽວຄົ້ນຫາ ໃຫ້ຕົນມົນທິນໄປເພາະເຂົາເລີຍ ເຮົາຄືພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າ

32 “ເຈົ້າຈົ່ງລຸກຂຶ້ນຄຳນັບຄົນຜົມຫງອກ ແລະໂຄຣົບຄົນເຖົ້າແກ່ຊະຣາ ແລະຈົ່ງຢຳເກງເຈົ້າຂອງເຈົ້າ ເຮົາຄືພຣະຜູ້ເປັນເຈົ້າ

33 “ເມື່ອຄົນຕ່າງດ້າວອາໄສຢູ່ກັບເຈົ້າໃນແຜ່ນດິນຂອງເຈົ້າ ຢ່າຂົ່ມເຫັງເຂົາ

34 ຄົນຕ່າງດ້າວທີ່ອາໄສຢູ່ກັບເຈົ້ານັ້ນກໍເຫມືອນກັບຊາວເມືອງຂອງເຈົ້າ ເຈົ້າຈົ່ງຮັກເຂົາເຫມືອນກັບຮັກຕົນເອງ ເພາະວ່າເຈົ້າເຄີຍເປັນຄົນຕ່າງດ້າວໃນແຜ່ນດິນເອຢິບ ເຮົາຄືພຣະຜູ້ເປັນເຈົ້າ ພຣະເຈົ້າຂອງເຈົ້າ

35 “ເຈົ້າຢ່າກະທຳຜິດໃນການພິພາກສາ ໃນການວັດແທກ ຫລືຊັ່ງນ້ຳຫນັກ ຫລືນັບຈຳນວນ

36 “ເຈົ້າຈົ່ງໃຊ້ຕາຊັ່ງທ່ຽງຕົງ ລູກຕຸ້ມທ່ຽງຕົງ ເອຟາທ່ຽງຕົງ ແລະຮິນທ່ຽງຕົງ ເຮົາຄືພຣະຜູ້ເປັນເຈົ້າ ພຣະເຈົ້າຂອງເຈົ້າ ຜູ້ໄດ້ພາເຈົ້າອອກມາຈາກແຜ່ນດິນເອຢິບ

37 ດັ່ງນີ້ແຫລະ ເຈົ້າຈົ່ງຮັກສາກົດເກນທັງຫມົດຂອງເຮົາ ແລະກົດຫມາຍຂອງເຮົາທັງສິ້ນ ແລະກະທຳຕາມ ເຮົາຄືພຣະຜູ້ເປັນເຈົ້າ

## 20 ໂທດຂອງການບໍ່ເຊື່ອຟັງ

Penalties for Violations of Holiness

1 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ,

2 “ຈົ່ງກ່າວແກ່ຄົນອິສຣເອນວ່າ ຄົນອິສຣາເອນຄົນໃດຫລືຄົນຕ່າງດ້າວຄົນໃດທີ່ອາໄສຢູ່ໃນອິສຣາເອນ ຜູ້ທີ່ມອບລູກຫລານຂອງຕົນໃຫ້ແກ່ພຣະໂມເລກ ຜູ້ນັ້ນຕ້ອງມີໂທດເຖິງຕາຍ ໃຫ້ປະຊາຊົນເອົາຫີນແກ່ວງໃສ່ເຂົາເສັຽໃຫ້ຕາຍ

3 ຕົວເຮົາເອງຈະຫມາຍຫນ້າຜູ້ນັ້ນໄວ້ ແລະຈະຕັດເຂົາຈາກຖ້າມກາງຊົນຊາດຂອງຕົນ ເພາະວ່າເຂົາໄດ້ໃຫ້ລູກຂອງເຂົາຄົນນຶ່ງແກ່ພຣະໂມເລກ ກະທຳໃຫ້ສະຖານສັກສິດຂອງເຮົາເປັນມົນທິນ ແລະກະທຳໃຫ້ນາມບໍຣິສຸດຂອງເຮົາເປັນທີ່ເສື່ອມເສັຽ

4 ແລະຖ້າຣາສດອນຫລັບຫູຫລັບຕາ ເຣື່ອງຊາຍຄົນທີ່ໃຫ້ລູກຫລານແກ່ພຣະໂມເລກນັ້ນເສັຽ ບໍ່ລົງໂທດເຂົາໃຫ້ເຖິງຕາຍ

5 ເຮົາຈະຫມາຍຫນ້າຊາຍຄົນນັ້ນ ແລະສູ້ກັບຄອບຄົວຂອງເຂົາ ແລະຕັດເຂົາເສັຽຈາກຊົນຊາດຂອງຕົນ ທັງຕົວເຂົາກໍດີແລະຜູ້ໃດທີ່ເຮັດຕາມເຂົາໃນການຫລິ້ນຊູ້ກັບພຣະໂມເລກນັ້ນກໍດີ

6 “ຜູ້ໃດໃຝ່ຫາຫມໍຜີທີ່ປຸກວິນຍານຄົນຕາຍຂຶ້ນມາປຶກສາ ຫລືພໍ່ມົດ ແມ່ມົດ ຫລິ້ນຊູ້ກັບເຂົາ ເຮົາຈະຫມາຍຫນ້າຜູ້ນັ້ນ ແລະຕັດເຂົາເສັຽຈາກຊົນຊາດຂອງຕົນ

7 ເຫດສະນັ້ນເຈົ້າຈົ່ງຊຳຣະຕົວໃຫ້ບໍຣິສຸດ ເພາະເຮົາຄືພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າ

8 ຈົ່ງຮັກສາກົດເກນຂອງເຮົາແລະກະທຳຕາມ ເຮົາຄືພຣະຜູ້ເປັນເຈົ້າ ຜູ້ຕັ້ງເຈົ້າໄວ້ໃຫ້ບໍຣິສຸດ

9 ເພາະວ່າທຸກຄົນທີ່ດ່າບິດາຫລືມານດາຂອງຕົນຈະຕ້ອງມີໂທດເຖິງຕາຍ ເຂົາໄດ້ດ່າບິດາ ຫລືມານດາຂອງເຂົາທີ່ເຂົາຕ້ອງຕາຍນັ້ນເຂົາເອງຮັບຜິດຊອບ

10 “ຖ້າຜູ້ໃດຫລິ້ນຊູ້ກັບພັຣຍາຂອງຄົນອື່ນ ຖ້າຜູ້ໃດ

ຫລິ້ນຊູ້ກັບພັຣຍາຂອງເພື່ອນບ້ານ ໃຫ້ລົງໂທດທັງຊາຍແລະຍິງນັ້ນເສັຽໃຫ້ຕາຍ
11 ຊາຍຄົນໃດທີ່ສົມສູ່ກັບເມັຽຂອງບິດາຕົນ ກໍເຮັດໃຫ້ບິດາຕົນໄດ້ຮັບຄວາມເຊື່ອມເສັຽແລະອັບອາຍຂາຍຫນ້າ ໃຫ້ລົງໂທດທັງສອງຄົນນັ້ນເສັຽໃຫ້ຕາຍ ທີ່ເຂົາຕ້ອງຕາຍນັ້ນເຂົາເອງຮັບຜິດຊອບ
12 ຊາຍຄົນໃດທີ່ສົມສູ່ກັບລູກໃພ້ຂອງຕົນ ເຂົາທັງສອງຈະຕ້ອງຖືກໂທດເຖິງຕາຍ ເຂົາໄດ້ປະພຶດຜິດຊາຍຍິງທີ່ຮ່ວມພໍ່ແມ່ດຽວກັນ ທີ່ເຂົາຕ້ອງຕາຍນັ້ນເຂົາເອງຮັບຜິດຊອບ
13 ຊາຍໃດສົມສູ່ກັບຜູ້ຊາຍກະທຳຢ່າງກັບຜູ້ຍິງ ທັງສອງຄົນກະທຳຜິດໃນສິ່ງອັນຫນ້າລັງກຽດ ທັງສອງຈະຕ້ອງໄດ້ຮັບໂທດເຖິງຕາຍ ທີ່ເຂົາຕ້ອງຕາຍນັ້ນເຂົາເອງຮັບຜິດຊອບ
14 ຊາຍຄົນໃດໄດ້ພັຣຍາ ແລະໄດ້ມານດາຂອງນາງມາເປັນພັຣຍາດ້ວຍ ນີ້ເປັນເຣື່ອງອະທັມ ໃຫ້ເຜົາທັງຊາຍນັ້ນແລະຍິງທັງສອງນັ້ນເສັຽດ້ວຍໄຟ ເພື່ອວ່າຈະບໍ່ມີຄວາມອະທັມໃນຖ້າມກາງພວກເຈົ້າ
15 ຖ້າຊາຍໃດສົມສູ່ກັບສັດເດັຽຣະສານ ຊາຍຜູ້ນັ້ນແລະສັດຈະຕ້ອງຮັບໂທດເຖິງຕາຍ
16 ຖ້າຍິງໃດເຂົ້າໃກ້ສັດເດັຽຣະສານ ແລະເຂົ້ານອນກັບມັນ ຍິງຜູ້ນັ້ນກັບສັດຈະຕ້ອງຮັບໂທດເຖິງຕາຍຄືກັນ ທີ່ເຂົາຕ້ອງຕາຍນັ້ນເຂົາເອງຮັບຜິດຊອບ
17 "ຖ້າຊາຍຄົນໃດແຕ່ງງານກັບເອື້ອຍ ຫລືນ້ອງຂອງຕົນເອງ ຫລືເອື້ອຍນ້ອງຕ່າງພໍ່ຕ່າງແມ່ກັນ ເປັນສິ່ງທີ່ຫນ້າລະອາຍຫລາຍ ຈະຕ້ອງຖືກຂັບໄລ່ໃຫ້ອອກໄປຈາກຫນ້າຊຸມນຸມຊົນຂອງເຂົາ ເພາະເຂົາໄດ້ສົມສູ່ກັບເອື້ອຍຫລືນ້ອງຂອງຕົນ ເຂົາຕ້ອງຮັບໂທດຂອງເຂົາ
18 ຊາຍຄົນໃດສົມສູ່ກັບຍິງຜູ້ມີປະຈຳເດືອນ ໃຫ້ຕັດທັງສອງຄົນອອກຈາກຊົນຊາດຂອງເຂົາ ເພາະພວກເຂົາໄດ້ຝ່າຝືນລະບຽບການກ່ຽວກັບການເປັນມົນທິນ
19 ເຈົ້າຢ່າສົມສູ່ກັບເອື້ອຍຫລືນ້ອງສາວມານດາເຈົ້າ ຫລືເອື້ອຍ ນ້ອງສາວຂອງບິດາເຈົ້າ ເຂົາທັງສອງຕ້ອງໄດ້ຮັບຜົນກັມສຳລັບການຜິດຊາຍຍິງທີ່ຮ່ວມພໍ່ແມ່ດຽວກັນ
20 ຖ້າຊາຍຄົນໃດສົມສູ່ກັບພັຣຍາຂອງລຸງ ເຂົາກໍທຳໃຫ້ລຸງຂອງເຂົາເສື່ອມເສັຽ ທັງສອງຈະຕ້ອງຮັບໂທດ ເຂົາຈະຕາຍໂດຍບໍ່ມີບຸດ
21 ຖ້າຊາຍຄົນໃດເອົາພັຣຍາຂອງອ້າຍ ຫລືນ້ອງຊາຍໄປ ເປັນເຣື່ອງມົນທິນ ເຂົາຈະຕ້ອງຕາຍໂດຍບໍ່ມີບຸດ ທັງໄດ້ສ້າງຄວາມອັບອາຍຂາຍຫນ້າໃຫ້ແກ່ອ້າຍນ້ອງຂອງຕົນດ້ວຍ
22 "ເຫດສັນນັ້ນເຈົ້າຈົ່ງຮັກສາກົດເກນທັງສິ້ນຂອງເຮົາ ແລະກົດຫມາຍທັງສິ້ນຂອງເຮົາ ແລະກະທຳຕາມ ເພື່ອວ່າແຜ່ນດິນຊຶ່ງເຮົານຳເຈົ້າໃຫ້ມາຢູ່ນັ້ນຈະບໍ່ໄດ້ຄາຍພວກເຈົ້າໃຫ້ອອກໄປເສັຽ
23 ແລະເຈົ້າຢ່າປະພຶດຕາມທັມນຽມຂອງປະຊາຊາດທີ່ເຮົາໄລ່ໄປເສັຽໃຫ້ພົ້ນຫນ້າເຈົ້າ ດ້ວຍວ່າເຂົາທັງຫລາຍໄດ້ປະພຶດຜິດໃນສິ່ງເຫລົ່ານີ້ ເຮົາຈຶ່ງກຽດຊັງເຂົາ
24 ແຕ່ເຮົາໄດ້ບອກເຈົ້າແລ້ວວ່າ ເຈົ້າທັງຫລາຍຈະໄດ້ຮັບແຜ່ນດິນນີ້ເປັນມໍຣະດົກ ເຮົາຈະໃຫ້ແກ່ເຈົ້າເປັນກຳມະສິດ ເປັນແຜ່ນດິນທີ່ມີນ້ຳນົມແລະນ້ຳເຜິ້ງໄຫລບໍຣິບູນ ເຮົາຄືພຣະຜູ້ເປັນເຈົ້າ ພຣະເຈົ້າຂອງເຈົ້າຜູ້ໄດ້ແຍກເຈົ້າອອກຈາກຊົນຊາດທັງຫລາຍ
25 ເຫດສະນັ້ນ ເຈົ້າຈົ່ງສັງເກດຄວາມແຕກຕ່າງລະຫວ່າງສັດສະອາດແລະສັດມົນທິນ ລະຫວ່າງນົກມົນທິນແລະນົກສະອາດ ເຈົ້າຢ່າກະທຳຕົວໃຫ້ເປັນທີ່ຫນ້າລັງກຽດດ້ວຍສັດຫລືນົກຫລືສິ່ງໃດໆທີ່ເລືອຄານຢູ່ເທິງດິນ ຊຶ່ງເຮົາໄດ້ແຍກໃຫ້ເຈົ້າແລ້ວວ່າເປັນຂອງມົນທິນ
26 ເຈົ້າຕ້ອງບໍຣິສຸດສຳລັບເຮົາ ເພາະເຮົາຄືພຣະເຈົ້າບໍຣິສຸດ ແລະໄດ້ແຍກເຈົ້າອອກຈາກຊົນຊາດທັງຫລາຍເພື່ອເຈົ້າຈະເປັນຂອງເຮົາ
27 "ຊາຍຫລືຍິງຄົນໃດທີ່ເປັນຄົນປຸກວິນຍານຂອງຄົນຕາຍຂຶ້ນມາປຶກສາ ຫລືພໍ່ມົດ ແມ່ມົດ ຈົ່ງຂ້າເສັຽ ຈົ່ງເອົາກ້ອນຫີນຄວ່າງໃສ່ ທີ່ເຂົາຕ້ອງຕາຍນັ້ນເຂົາເອງຮັບຜິດຊອບ"

## 21 ຄວາມບໍຣິສຸດຂອງປະໂຣຫິດ

The Holiness of Priests

(ອຊກ 44:15-31)

1 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ, “ຈົ່ງກ່າວແກ່ບັນດາປະໂຣຫິດ ຄືບຸດຫລານຂອງອາໂຣນ ແລະສັ່ງເຂົາວ່າ
ຢ່າໃຫ້ຜູ້ໃດກະທຳຕົວໃຫ້ເປັນມົນທິນດ້ວຍເຣື່ອງສົບໃນຫມູ່ປະຊາຊົນ
2 ເວັ້ນແຕ່ຍາດທີ່ສນິດທີ່ສຸດ ຄືມານດາ ບິດາ ບຸດຊາຍຍິງ ອ້າຍແລະນ້ອງຊາຍ
3 ຫລືເອື້ອຍແລະນ້ອງສາວພົມມາຈາຣີ (ຜູ້ທີ່ຍັງສນິດກັບເຂົາ ເພາະນາງຍັງບໍ່ມີຜົວ ເຂົາຈຶ່ງຍອມຕົວເປັນມົນທິນ
ເພາະນາງໄດ້)
4 ຢ່າໃຫ້ເຂົາມີມົນທິນເພາະເປັນຜົວໃນຫມູ່ຊົນຊາດຂອງເຂົາ ແລະກະທຳໃຫ້ຕົນເປັນມົນທິນ
5 ຢ່າແຖຫົວຫລືກຽນຫນວດກຽນເຄົາ ຫລືປາດເນື້ອຕົວເອງ
6 ພວກປະໂຣຫິດຕ້ອງເປັນຄົນບໍຣິສຸດຕໍ່ພຣະເຈົ້າຂອງຕົນ ແລະບໍ່ກະທຳໃຫ້ພຣະນາມຂອງພຣະເຈົ້າເປັນ
ທີ່ເສື່ອມເສັຽ ເພາະເຂົາທັງຫລາຍຖວາຍເຄື່ອງບູຊາດ້ວຍໄຟແດ່ພຣະຜູ້ເປັນເຈົ້າ ເປັນພຣະກະຍາຫານແຫ່ງພ
ຣະເຈົ້າຂອງເຂົາທັງຫລາຍ ເຫດສັນນັ້ນເຂົາທັງຫລາຍຈຶ່ງຕ້ອງບໍຣິສຸດ
7 ປະໂຣຫິດຈະແຕ່ງງານກັບຍິງແມ່ຈ້າງ ຫລືຍິງທີ່ມີມົນທິນບໍ່ໄດ້ ຫລືຈະແຕ່ງງານກັບຍິງທີ່ຮ້າງຈາກຜົວກໍບໍ່ໄດ້
ເພາະປະໂຣຫິດຈະຕ້ອງບໍຣິສຸດແດ່ພຣະເຈົ້າຂອງເຂົາ
8 ເຈົ້າຈົ່ງຊຳຣະເຂົາໃຫ້ບໍຣິສຸດ ເພາະເຂົາຖວາຍພຣະກະຍາຫານແຫ່ງພຣະເຈົ້າຂອງເຈົ້າ ເຂົາຈະຕ້ອງບໍຣິສຸດສຳ
ລັບເຈົ້າ ເພາະເຮົາຄືພຣະເຈົ້າຜູ້ຊຳຣະເຈົ້າທັງຫລາຍໃຫ້ບໍຣິສຸດ ເຮົາບໍຣິສຸດ
9 ລູກສາວຂອງປະໂຣຫິດຄົນໃດ ຖ້ານາງກະທຳຕົວໃຫ້ມົນທິນໂດຍໄປເປັນໂສເພນີກໍກະທຳໃຫ້ບິດາເປັນມົນທິນ
ຈະຕ້ອງເຜົານາງເສັຽດ້ວຍໄຟ
10 “ປະໂຣຫິດເປັນຜູ້ໃຫຍ່ໃນຫມູ່ພວກພີ່ນ້ອງ ຜູ້ຖືກເຈີມທີ່ຫົວດ້ວຍນ້ຳມັນແລະຜູ້ທີ່ໄດ້ຮັບການຊຳຣະໃຫ້ບໍຣິສຸດທີ່
ຈະນຸ່ງເສື້ອຍົດ ຢ່າປ່ອຍຜົມຫລືຈີກເສື້ອຜ້າຂອງຕົນ
11 ຢ່າເຂົ້າໄປຖືກຕ້ອງສົບ ຫລືກະທຳຕົວໃຫ້ເປັນມົນທິນ ແມ້ວ່າສົບນັ້ນເປັນບິດາຫລືມານດາ
12 ຢ່າອອກໄປຈາກສະຖານນະມັສການ ຫລືກະທຳສະຖານນະມັສການຂອງພຣະເຈົ້າໃຫ້ເປັນມົນທິນ ເພາະວ່າ
ການຊຳຣະໃຫ້ບໍຣິສຸດດ້ວຍນ້ຳມັນເຈີມຂອງພຣະເຈົ້າຢູ່ເທິງຕົວເຂົາ ເຮົາຄືພຣະຜູ້ເປັນເຈົ້າ
13 ເຂົາຈະຕ້ອງມີພັຣຍາ ເປັນຍິງພົມມະຈາຣີ
14 ຢ່າໃຫ້ເຂົາແຕ່ງງານກັບຍິງຫມ້າຍ ແມ່ຮ້າງ ຍິງທີ່ມີມົນທິນ ຫລືຍິງແມ່ຈ້າງ ເຂົາຈະຕ້ອງຫາຍິງພົມມະຈາຣີໃນ
ຊົນຊາດຂອງເຂົາມາເປັນເມັຽ
15 ເພື່ອເຂົາຈະບໍ່ໄດ້ກະທຳໃຫ້ລູກຫລານຂອງເຂົາໃນຫມູ່ຊົນຊາດຂອງເຂົາເປັນມົນທິນ ເພາະເຮົາຄືພຣະຜູ້ເປັນ
ເຈົ້າຜູ້ຕັ້ງເຂົາໄວ້ໃຫ້ບໍຣິສຸດ”
16 ພຣະຜູ້ເປັນເຈົ້າຊົງກ່າວກັບໂມເຊວ່າ,
17 “ຈົ່ງກ່າວແກ່ອາໂຣນວ່າ ໃນບັນດາເຊື້ອສາຍຂອງເຈົ້າຕລອດທຸກຊົ່ວຊາດເຊື້ອສາຍຂອງເຂົາທັງຫລາຍ ຢ່າໃຫ້ຜູ້
ມີຕຳຫນິພິການເຂົ້າໄປຖວາຍພຣະກະຍາຫານແຫ່ງພຣະເຈົ້າຂອງເຂົາ
18 ເພາະວ່າຜູ້ໃດທີ່ມີຕຳຫນິຈະເຂົ້າໃກ້ບໍ່ໄດ້ ບໍ່ວ່າເປັນຄົນຕາບອດຫລືເປັນຄົນຂາພິການ ຫລືທີ່ຫນ້າມີແຜເປັນ
ຫລືແຂນຂາຍາວເກີນ
19 ຫລືມີຕີນພິການ ຫລືມືພິການ
20 ຄົນຫລັງຄ່ອມ ຄົນເຕັ້ຍຜິດປົກກະຕິ ຄົນເສັຽຕາ ຄົນເປັນຂີ້ກາກ ຫລືຂີ້ທິດ ຫລືຄົນທີ່ເປັນກະເທືອຍ

21 ຜູ້ໃດໃນເຊື້ອສາຍອາໂຣນທີ່ມີຕຳໜິ ຢ່າໃຫ້ເຂົ້າມາຖວາຍເຄື່ອງບູຊາດ້ວຍໄຟແດ່ພຣະເຈົ້າ ເພາະວ່າເຂົາເປັນຄົນມີຕຳໜິ ຢ່າໃຫ້ເຂົາມາຖວາຍພຣະກະຍາຫານແຫ່ງພຣະເຈົ້າຂອງເຂົາ
22 ເຂົາຈະຮັບປະທານພຣະກະຍາຫານແຫ່ງພຣະເຈົ້າຂອງເຂົາໄດ້ທັງຂອງທີ່ບໍຣິສຸດທີ່ສຸດ ແລະຂອງບໍຣິສຸດ
23 ແຕ່ຢ່າໃຫ້ເຂົາເຂົ້າມາໃກ້ຜ້າກັ້ງ ຫລືໃກ້ແທ່ນ ເພາະເຂົາມີຕຳໜິ ເພື່ອເຂົາຈະບໍ່ກະທຳໃຫ້ສະຖານນະມັສການຂອງເຮົາເປັນມົນທິນ ເພາະເຮົາຄືພຣະເຈົ້າ ຜູ້ຕັ້ງເຂົາໄວ້ໃຫ້ບໍຣິສຸດ”
24 ໂມເຊຈຶ່ງບອກອາໂຣນແລະບຸດຫລານຂອງອາໂຣນ ແລະຄົນອິສຣາເອນດັ່ງນັ້ນ

## 22 ຄວາມບໍຣິສຸດຂອງເຄື່ອງຖວາຍບູຊາ

The Use of Holy Offerings

1 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ,
2 “ຈົ່ງບອກອາໂຣນກັບບຸດຫລານຂອງເຂົາໃຫ້ອອກຫ່າງເສັຽຈາກສິ່ງບໍຣິສຸດຂອງຄົນອິສຣາເອນ ຊຶ່ງເຂົາທັງຫລາຍຖວາຍແກ່ເຮົາ ເພື່ອວ່າເຂົາທັງຫລາຍຈະບໍ່ໄດ້ກະທຳໃຫ້ນາມຂອງເຮົາເປັນມົນທິນ ເຮົາຄືພຣະຜູ້ເປັນເຈົ້າ
3 ຈົ່ງກ່າວແກ່ເຂົາວ່າ “ຖ້າຄົນນຶ່ງຄົນໃດໃນເຊື້ອສາຍຂອງເຈົ້າຕລອດຊົ່ວຊາດເຊື້ອສາຍເຂົ້າໃກ້ຂອງບໍຣິສຸດຊຶ່ງຄົນອິສຣາເອນຖວາຍແດ່ພຣະຜູ້ເປັນເຈົ້າ ຂນະທີ່ເຂົາມີມົນທິນຢູ່ຈະຕ້ອງຕັດເຂົາຄົນນັ້ນອອກໄປໃຫ້ພົ້ນໜ້າເຮົາ ເຮົາຄືພຣະຜູ້ເປັນເຈົ້າ
4 ຢ່າໃຫ້ເຊື້ອສາຍອາໂຣນຄົນໃດທີ່ເປັນໂຣກເຮື້ອນຫລືມີສິ່ງໄຫລອອກມາຮັບປະທານຂອງບໍຣິສຸດ ໃຫ້ລໍຈົນກວ່າເຂົາສະອາດແລ້ວກ່ອນ ຜູ້ໃດແຕະຕ້ອງສິ່ງທີ່ມົນທິນ ໂດຍແຕະຕ້ອງສົບ ຫລືຜູ້ທີ່ມີນ້ຳກາມໄຫລອອກ
5 ຜູ້ໃດທີ່ແຕະຕ້ອງສິ່ງເລືອຄານ ຊຶ່ງກະທຳໃຫ້ເຂົາມົນທິນ ຫລືແຕະຕ້ອງຄົນຊຶ່ງອາດໃຫ້ເຂົາມົນທິນ ບໍ່ວ່າຈະເປັນມົນທິນຊະນິດໃດ
6 ບຸກຄົນຜູ້ແຕະຕ້ອງສິ່ງເຫລົ່ານີ້ ຕ້ອງມົນທິນໄປຈົນເຖິງຕອນແລງ ແລະຈະຮັບປະທານສິ່ງບໍຣິສຸດບໍ່ໄດ້ ນອກຈາກເຂົາຈະອາບນ້ຳຊຳຮະຕົວເສັຽກ່ອນ
7 ເມື່ອດວງຕາເວັນຕົກເຂົາກໍສະອາດ ພາຍຫລັງເຂົາຈຶ່ງຮັບປະທານສິ່ງບໍຣິສຸດໄດ້ ເພາະສິ່ງເຫລົ່ານັ້ນເປັນອາຫານຂອງເຂົາ
8 ສິ່ງໃດທີ່ຕາຍເອງ ຫລືຖືກສັດກັດຕາຍ ຢ່າຮັບປະທານ ເຂົາຈະເປັນມົນທິນດ້ວຍສິ່ງເຫລົ່ານີ້ ເຮົາຄືພຣະຜູ້ເປັນເຈົ້າ
9 ເພາະສັນນັ້ນ ເຂົາທັງຫລາຍຕ້ອງຮັກສາຄຳສັ່ງຂອງເຮົາ ຢ້ານວ່າເຂົາຈະຕ້ອງຮັບໂທດເພາະສິ່ງນັ້ນ ແລະຈະຕ້ອງຕາຍຮັບໂທດເມື່ອເຂົາກະທຳສິ່ງນັ້ນໃຫ້ເປັນມົນທິນ ເຮົາຄືພຣະຜູ້ເປັນເຈົ້າຜູ້ທີ່ຕັ້ງເຂົາໄວ້ໃຫ້ບໍຣິສຸດ
10 “ຢ່າໃຫ້ຄົນພາຍນອກຮັບປະທານສິ່ງບໍຣິສຸດ ຜູ້ທີ່ມາອາໄສຢູ່ກັບປະໂຣຫິດ ຫລືລູກຈ້າງຢ່າໃຫ້ຮັບປະທານສິ່ງບໍຣິສຸດນັ້ນ
11 ແຕ່ຖ້າປະໂຣຫິດຄົນນຶ່ງຊື້ທາດມາດ້ວຍເງິນເປັນຊັບຂອງຕົນ ທາດນັ້ນຈະຮັບປະທານກໍໄດ້ ແລະຜູ້ທີ່ເກີດໃນຄົວເຮືອນຂອງປະໂຣຫິດຮັບປະທານອາຫານນັ້ນໄດ້
12 ຖ້າລູກສາວຂອງປະໂຣຫິດໄປແຕ່ງງານກັບຄົນພາຍນອກ ນາງກໍຮັບປະທານສິ່ງບໍຣິສຸດນັ້ນບໍ່ໄດ້
13 ຖ້າລູກສາວຂອງປະໂຣຫິດເປັນແມ່ໝ້າຍ ຫລືແມ່ຮ້າງ ແລະບໍ່ມີບຸດ ແລະກັບມາຢູ່ທີ່ເຮືອນຂອງບິດາຢ່າງເມື່ອນາງຍັງເປັນສາວ ນາງຮັບປະທານອາຫານຂອງບິດາໄດ້
14 ຖ້າຄົນໃດຮັບປະທານສິ່ງບໍຣິສຸດໂດຍບໍ່ໄດ້ເຈຕນາ ເຂົາຈະຕ້ອງເພີ້ມຄ່າຂອງນັ້ນນຶ່ງໃນຫ້າ ແລະມອບຂອງບໍຣິສຸດນັ້ນແກ່ປະໂຣຫິດ

15 ຢ່າໃຫ້ປະໂຣຫິດກະທຳສິ່ງບໍຣິສຸດຂອງຄົນອິສຣາເອນທີ່ນຳມາຖວາຍແດ່ພຣະຜູ້ເປັນເຈົ້າໃຫ້ເປັນມົນທິນ
16 ຊຶ່ງຈະກະທຳໃຫ້ເຂົາໄດ້ຮັບໂທດດ້ວຍມີຄວາມຜິດທີ່ຮັບປະທານສິ່ງບໍຣິສຸດ ເພາະເຮົາຄືພຣະຜູ້ເປັນເຈົ້າຜູ້ຕັ້ງ
ເຂົາໄວ້ໃຫ້ບໍຣິສຸດ"

Acceptable Offerings

17 ພຣະເຈົ້າຊົງບອກກັບໂມເຊວ່າ,
18 "ຈົ່ງກ່າວແກ່ອາໂຣນ ແລະແກ່ຄົນອິສຣາເອນທັງຫມົດວ່າ ເມື່ອຄົນອິສຣເອນຜູ້ໃດຖວາຍເຄື່ອງບູຊາ ເປັນເຄື່ອງ
ແກ້ບົນຫລືເຄື່ອງບູຊາດ້ວຍໃຈສມັກ ຊຶ່ງຖວາຍບູຊາແດ່ພຣະຜູ້ເປັນເຈົ້າເປັນເຄື່ອງເຜົາບູຊາ
19 ເພື່ອໃຫ້ເປັນທີ່ໂປດປານ ເຈົ້າຈົ່ງຖວາຍສັດໂຕເຖິກປາສຈາກຕຳຫນິ ຄືງົວເຖິກ ຫລືແກະ ຫລືແບ້
20 ເຈົ້າຢ່າຖວາຍສິ່ງໃດໆທີ່ມີຕຳຫນິເພາະຈະບໍ່ຊົງຮັບເພື່ອເຈົ້າ
21 ເມື່ອຄົນໃດຖວາຍເຄື່ອງສານຕິບູຊາແດ່ພຣະຜູ້ເປັນເຈົ້າ ເພື່ອແກ້ບົນ ຫລືຖວາຍດ້ວຍໃຈສມັກ ເປັນສັດທີ່ໄດ້ມາ
ຈາກຝູງງົວ ຫລືຝູງແບ້ ແກະ ສັດນັ້ນຕ້ອງບໍ່ມີຕຳຫນິຈຶ່ງຈະຊົງຮັບ ຢ່າໃຫ້ສັດນັ້ນມີທີ່ຕິເລີຍ
22 ສັດທີ່ຕາບອດຫລືພິການ ຫລືມີແຜ ຫລືມີສິ່ງໄຫລອອກ ຫລືເປັນຂີ້ກາກ ຫລືເປັນຂີ້ຫິດ ເຈົ້າຢ່ານຳມາຖວາຍແດ່
ພຣະຜູ້ເປັນເຈົ້າ ຫລືນຳມາເປັນເຄື່ອງບູຊາດ້ວຍໄຟທີ່ເທິງແທ່ນຖວາຍແດ່ພຣະຜູ້ເປັນເຈົ້າ
23 ງົວຫລືລູກແກະທີ່ມີອະວັຍວະຍາວເກີນໄປ ຫລືສັ້ນເກີນໄປຈັກສ່ວນນຶ່ງ ທ່ານຈະມາຖວາຍເປັນເຄື່ອງບູຊາແກ້
ບົນກໍບໍ່ເປັນທີ່ໂປດປານ
24 ສັດໂຕໃດທີ່ມີລູກອັນທະຊ້ຳ ຫລືຖືກທຸບ ຫລືຈີກຂາດ ຫລືມີຮອຍຕັດ ເຈົ້າຢ່ານຳມາຖວາຍແດ່ພຣະຜູ້ເປັນເຈົ້າ
ໃຫ້ເປັນເຄື່ອງບູຊາໃນແຜ່ນດິນຂອງເຈົ້າ
25 ເຈົ້າຢ່ານຳສັດຊຶ່ງໄດ້ມາຈາກຄົນຕ່າງດ້າວຖວາຍເປັນພຣະກະຍາຫານແຫ່ງພຣະເຈົ້າຂອງເຈົ້າ ເພາະສັດນັ້ນມີ
ຕຳຫນິໂດຍຖືກທຳໃຫ້ພິການຈຶ່ງບໍ່ຊົງຮັບເພື່ອເຈົ້າ"
26 ພຣະເຈົ້າຊົງບອກກັບໂມເຊວ່າ,
27 "ເມື່ອງົວຫລືແກະຫລືແບ້ເກີດມາ ໃຫ້ຢູ່ກັບແມ່ເຈັດວັນ ຕັ້ງແຕ່ວັນທີ່ແປດເປັນຕົ້ນໄປຈະໃຊ້ເປັນເຄື່ອງບູຊາ
ດ້ວຍໄຟຖວາຍແດ່ພຣະຜູ້ເປັນເຈົ້າກໍເປັນທີ່ຊົງຮັບ
28 ເຖິງແມ່ນວ່າສັດນັ້ນຈະເປັນງົວຫລືແກະກໍດີ ເຈົ້າຢ່າຂ້າມັນພ້ອມກັບລູກຂອງມັນໃນວັນດຽວກັນ
29 ເມື່ອເຈົ້າຖວາຍເຄື່ອງສັດບູຊາເປັນເຄື່ອງບູຊາໂມທະນາພຣະຄຸນແດ່ພຣະຜູ້ເປັນເຈົ້າ ເຈົ້າຈົ່ງຖວາຍເຄື່ອງສັດບູ
ຊານັ້ນເພື່ອເຈົ້າຈະເປັນທີ່ໂປດປານ
30 ຈົ່ງຮັບປະທານເຄື່ອງບູຊານັ້ນໃນວັນຖວາຍເຄື່ອງບູຊາ ຢ່າເຫລືອໄວ້ຈົນຮຸ່ງເຊົ້າເລີຍ ເຮົາຄືພຣະຜູ້ເປັນເຈົ້າ
31 "ເພາະສະນັ້ນເຈົ້າຈົ່ງຮັກສາພຣະບັນຍັດຂອງເຮົາແລະກະທຳຕາມ ເຮົາຄືພຣະຜູ້ເປັນເຈົ້າ
32 ເຈົ້າຢ່າກະທຳໃຫ້ນາມບໍຣິສຸດຂອງເຮົາເປັນທີ່ເສື່ອມເສັຽ ແຕ່ໃຫ້ເຮົາເປັນທີ່ສັຣເສີນໃນຫມູ່ຄົນອິສຣາເອນ ເຮົາ
ຄືພຣະຜູ້ເປັນເຈົ້າຜູ້ທຳເຈົ້າໃຫ້ບໍຣິສຸດ
33 ຜູ້ນຳເຈົ້າອອກຈາກແຜ່ນດິນເອຢິບ ເພື່ອເປັນພຣະເຈົ້າຂອງເຈົ້າ ເຮົາຄືພຣະຜູ້ເປັນເຈົ້າ"

## 23 ເທສການລ້ຽງຕາມກຳນົດ

Appointed Festivals

1 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ,
2 ຈົ່ງກ່າວແກ່ຄົນອິສຣາເອນວ່າ ເທສການລ້ຽງຕາມກຳນົດແດ່ພຣະຜູ້ເປັນເຈົ້າ ຊຶ່ງເຈົ້າຈະຕ້ອງປະກາດວ່າເປັນ
ການປະຊຸມບໍຣິສຸດ ຄືເທສການລ້ຽງຕາມກຳຫນົດຂອງເຮົານັ້ນມີດັ່ງນີ້

**ປັສຄາ ແລະມື້ກິນເຂົ້າຈີ່ບໍ່ມີເຊື້ອແປ້ງ**

The Sabbath, Passover, and Unleavened Bread

( ຊບ 28:16-25)

3 ຈົ່ງທຳການງານໃນຫົກວັນ ແຕ່ວັນທີເຈັດນັ້ນເປັນສະບາໂຕແຫ່ງການຢຸດພັກສງົບ ເປັນວັນປະຊຸມ
ບໍຣິສຸດ ເຈົ້າຢ່າທຳການງານໃດໆ ເປັນສະບາໂຕແດ່ພຣະຜູ້ເປັນເຈົ້າຕາມທີ່ຢູ່ທົ່ວໄປຂອງເຈົ້າ

4 "ຕໍ່ໄປນີ້ເປັນເທສການລ້ຽງຕາມກຳນົດແດ່ພຣະຜູ້ເປັນເຈົ້າ ເປັນການປະຊຸມບໍຣິສຸດ ຊຶ່ງເຈົ້າຈະຕ້ອງປະກາດ
ຕາມເວລາກຳນົດໃຫ້ເຂົາຊາບ

5 ໃນຕອນແລງວັນທີສິບສີ່ເດືອນທີນຶ່ງເປັນວັນເທສການປັສຄາຂອງພຣະຜູ້ເປັນເຈົ້າ

6 ແລະໃນວັນທີສິບຫ້າເດືອນດຽວກັນ ເປັນເທສການກິນເຂົ້າຈີ່ທີ່ບໍ່ມີເຊື້ອແປ້ງຖວາຍແດ່ພຣະຜູ້ເປັນເຈົ້າ ໃຫ້ເຈົ້າ
ຮັບປະທານເຂົ້າຈີ່ທີ່ບໍ່ມີເຊື້ອແປ້ງເຈັດວັນ

7 ໃນວັນຕົ້ນເຈົ້າຈົ່ງມີການປະຊຸມບໍຣິສຸດ ເຈົ້າຢ່າທຳງານຫນັກ

8 ແຕ່ເຈົ້າຈົ່ງຖວາຍເຄື່ອງບູຊາດ້ວຍໄຟແດ່ພຣະຜູ້ເປັນເຈົ້າໃຫ້ຄົບເຈັດວັນ ໃນວັນທີເຈັດເປັນວັນປະຊຸມບໍຣິສຸດ
ເຈົ້າຢ່າທຳງານຫນັກ"

**ເທສການເກັບກ່ຽວ**

The Offering of First Fruits

9 ພຣະຜູ້ເປັນເຈົ້າສັ່ງກັບໂມເຊວ່າ,

10 "ຈົ່ງກ່າວແກ່ຄົນອິສຣາເອນວ່າ ເມື່ອເຈົ້າມາເຖິງແຜ່ນດິນຊຶ່ງເຮົາໃຫ້ເຈົ້າ ແລະກ່ຽວພືດຜົນຂອງແຜ່ນດິນນັ້ນ
ເຈົ້າຈົ່ງເອົາເຟືອງເຂົ້າທີ່ກ່ຽວໃນຮຸ່ນແຮກນຳໄປໃຫ້ປະໂຣຫິດ

11 ແລະປະໂຣຫິດຈະນຳເຟືອງເຂົ້ານັ້ນ ທຳພິທີຍື່ນຖວາຍແດ່ພຣະຜູ້ເປັນເຈົ້າ ເພື່ອເຈົ້າຈະເປັນທີ່ໂປດປານ ຮຸ່ງຂຶ້ນ
ຫລັງຈາກວັນສະບາໂຕປະໂຣຫິດຈະທຳພິທີຍື່ນຖວາຍ

12 ໃນວັນທີເຈົ້າທຳພິທີຍື່ນເຟືອງເຂົ້າ ເຈົ້າຈົ່ງຖວາຍລູກແກະເຖິກອາຍຸນຶ່ງປີບໍ່ມີຕຳຫນິເປັນເຄື່ອງເຜົາບູຊາຖວາຍ
ແດ່ພຣະຜູ້ເປັນເຈົ້າ

13 ແລະເຄື່ອງທັນຍາຍບູຊາທີ່ຄູ່ກັນນັ້ນ ຄືຍອດແປ້ງສອງໃນສິບເອຟາປົນໃສ່ນ້ຳມັນ ເຜົາດ້ວຍໄຟຖວາຍແດ່ພຣະ
ຜູ້ເປັນເຈົ້າເປັນກິ່ນພໍພຣະທັຍ ແລະເຄື່ອງດື່ມບູຊາທີ່ຄູ່ກັນຄືເຫລົ້າອະງຸ່ນນຶ່ງໃນສີ່ຮິນ

14 ເຈົ້າຢ່າຮັບປະທານເຂົ້າຈີ່ ຫລືເຂົ້າຂົ້ວ ເຂົ້າສົດຈົນກວ່າຈະເຖິງວັນດຽວກັນນີ້ ຄືກວ່າເຈົ້າຈະນຳເຄື່ອງບູຊາ
ຖວາຍແດ່ພຣະຜູ້ເປັນເຈົ້າຂອງເຈົ້າ ທັງນີ້ເປັນກົດເກນຖາວອນຕລອດຊົ່ວຊາດເຊື້ອສາຍຂອງເຈົ້າໃນທີ່ຢູ່ຂອງ
ເຈົ້າທົ່ວໄປ

**ເທສການສັປດາ**

The Festival of Weeks

(ອພຍ 34:22; ຈຊບ 28:26-31; ພບຍ 16:9-10)

15 "ຕັ້ງແຕ່ວັນຮຸ່ງຂຶ້ນຈົນວັນສະບາໂຕ ເຈົ້າຈົ່ງນັບໃຫ້ໄດ້ຄົບເຈັດສັປດາເຕັມໆ ຄືນັບຈາກວັນທີ່ເຈົ້ານຳເຟືອງເຂົາ
ເຂົ້າມາທຳພິທີຍື່ນຖວາຍເປັນຕົ້ນໄປ

16 ນັບໄປໃຫ້ໄດ້ຫ້າສິບວັນ ຈົນເຖິງວັນຖັດວັນສະບາໂຕທີເຈັດແລ້ວເຈົ້າຈົ່ງນຳເຂົ້າໃຫມ່ມາຖວາຍແດ່ພຣະຜູ້ເປັນ
ເຈົ້າເປັນທັນຍາບູຊາ

17 ຈົ່ງນຳເຂົ້າຈີ່ສອງກ້ອນທຳດ້ວຍແປ້ງສອງໃນສິບເອຟາຈາກທີ່ອາສັຍຂອງເຈົ້າມາທຳພິທີຍື່ນຖວາຍໃຫ້ທຳ
ດ້ວຍຍອດແປ້ງໃສ່ເຊື້ອປີ້ງເປັນຜົນຮຸ່ນແຮກຖວາຍແດ່ພຣະຜູ້ເປັນເຈົ້າ

18 ພ້ອມກັບເຂົ້າຈີ່ນັ້ນເຈົ້າຈົ່ງນຳລູກແກະເຈັດໂຕອາຍຸນຶ່ງປີປາສຈາກຕຳຫນິ ງົວຫນຸ່ມໂຕນຶ່ງ ແກະເຖິກສອງໂຕ
ມາເປັນເຄື່ອງເຜົາບູຊາຖວາຍແດ່ພຣະຜູ້ເປັນເຈົ້າ ພ້ອມກັບທັນຍາບູຊາແລະເຄື່ອງດື່ມບູຊາ ອັນເປັນຄູ່ກັນໃຫ້
ເປັນເຄື່ອງບູຊາດ້ວຍໄຟ ເປັນກິ່ນພໍພຣະທັຍຖວາຍແດ່ພຣະຜູ້ເປັນເຈົ້າ

19 ເຈົ້າຈົ່ງຖວາຍແບ້ເຖິກໂຕນຶ່ງ ເປັນເຄື່ອງບູຊາໄຖ່ບາບ ແລະລູກແກະເຖິກນຶ່ງປີສອງໂຕເປັນເຄື່ອງສານຕິບູຊາ
20 ໃຫ້ປະໂຣຫິດທຳພິທີຍື່ນຖວາຍພ້ອມກັບເຂົ້າຈີ່ຊຶ່ງເປັນຜົນຮຸ່ນແຮກເປັນເຄື່ອງຍື່ນຖວາຍແດ່ພຣະຜູ້ເປັນເຈົ້າ
ພ້ອມກັບລູກແກະສອງໂຕ ຈະເປັນສິ່ງບໍຣິສຸດແດ່ພຣະຜູ້ເປັນເຈົ້າສຳລັບປະໂຣຫິດ
21 ແລະໃນວັນດຽວກັນນັ້ນ ເຈົ້າຈົ່ງປະກາດເຈົ້າຈົ່ງມີການປະຊຸມກັນບໍຣິສຸດ ເຈົ້າຢ່າທຳງານໜັກ ທັງນີ້ເປັນກົດ
ເກນຖາວອນທົ່ວໄປໃນທີ່ອາສັຍຂອງເຈົ້າຕລອດຊົ່ວຊາດເຊື້ອສາຍຂອງເຈົ້າ
22 "ເມື່ອເຈົ້າກ່ຽວເຂົ້າໃນແຜ່ນດິນຂອງເຈົ້າ ເຈົ້າຢ່າກ່ຽວໄປທີ່ຂອບນາໃຫ້ໝົດ ແລະຢ່າເກັບເຂົ້າທີ່ກ່ຽວຕົກ ເຈົ້າ
ຈົ່ງຖິ້ມໄວ້ໃຫ້ຄົນຍາກຈົນ ແລະຄົນຕ່າງດ້າວ ເຮົາຄືພຣະຜູ້ເປັນເຈົ້າ ພຣະເຈົ້າຂອງເຈົ້າ"

**ເທສການປີໃໝ່**

The Festival of Trumpets

**(ຈຊບ 29:1-6)**

23 ພຣະຜູ້ເປັນເຈົ້າຊົງກ່າວກັບໂມເຊວ່າ,
24 "ຈົ່ງກ່າວແກ່ຄົນອິສຣາເອນວ່າ ໃນວັນທີນຶ່ງຂອງເດືອນທີເຈັດ ເຈົ້າທັງຫລາຍຈົ່ງຖືເປັນວັນຢຸດພັກສງົບວັນນຶ່ງ
ເປັນວັນປະຊຸມບໍຣິສຸດປະກາດເປັນທີ່ລະນຶກດ້ວຍສຽງແກ
25 ເຈົ້າຢ່າທຳງານໜັກ ແລະເຈົ້າຈົ່ງນຳເຄື່ອງບູຊາດ້ວຍໄຟຖວາຍແດ່ພຣະຜູ້ເປັນເຈົ້າ"

**ວັນລົບລ້າງມົນທິນ**

The Day of Atonement

**(ຈຊບ 29:7-11)**

26 ພຣະຜູ້ເປັນເຈົ້າຊົງກ່າວກັບໂມເຊວ່າ,
27 "ໃນວັນທີສິບຂອງເດືອນທີເຈັດນີ້ເປັນວັນທຳການລົບມົນທິນ ຈະເປັນວັນປະຊຸມບໍຣິສຸດແກ່ເຈົ້າ ແລະເຈົ້າຈົ່ງບັງ
ຄັບໃຈຕົນເອງ ແລະນຳເຄື່ອງບູຊາດ້ວຍໄຟຖວາຍແດ່ພຣະຜູ້ເປັນເຈົ້າ
28 ໃນວັນດຽວກັນນັ້ນເຈົ້າຢ່າທຳງານໃດໆ ເພາະເປັນວັນທຳການລົບມົນທິນ ທີ່ຈະທຳການລົບມົນທິນຂອງເຈົ້າຕໍ່
ພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າ
29 ໃນວັນດຽວກັນນີ້ ຖ້າຜູ້ໃດບໍ່ບັງຄັບໃຈກໍໃຫ້ຕັດຜູ້ນັ້ນເສັຽຈາກຖ້າມກາງຊົນຊາດຂອງຕົນ
30 ແລະໃນວັນດຽວກັນນີ້ຖ້າຜູ້ໃດທຳງານໃດໆ ເຮົາຈະທຳລາຍຜູ້ນັ້ນເສັຽຈາກຖ້າມກາງຊົນຊາດຂອງເຂົາ
31 ເຈົ້າຢ່າທຳງານສິ່ງໃດເລີຍ ທັງນີ້ເປັນກົດເກນຖາວອນຕລອດຊົ່ວຊາດເຊື້ອສາຍຂອງເຈົ້າທົ່ວໄປໃນທີ່ອາສັຍ
ຂອງເຈົ້າ
32 ຈະເປັນວັນສະບາໂຕສຳລັບຢຸດພັກສງົບແກ່ເຈົ້າ ແລະເຈົ້າຈົ່ງບັງຄັບໃຈຂອງເຈົ້າເລີ້ມແຕ່ຕອນແລງໃນວັນ
ທີເກົ້າຂອງເດືອນ ເຈົ້າຕ້ອງຮັກສາວັນສະບາໂຕຈາກເວລາຄ່ຳເຖິງເວລາຄ່ຳ"

**ເທສການປຸກຕູບ**

The Festival of Booths

**(ຈຊບ 29:12-40; ພບຍ 16:13-17)**

33 ພຣະຜູ້ເປັນເຈົ້າຊົງກ່າວກັບໂມເຊວ່າ,
34 "ຈົ່ງກ່າວແກ່ຄົນອິສຣາເອນວ່າ ໃນວັນທີສິບຫ້າເດືອນທີເຈັດນີ້ ເປັນວັນເທສການປຸກຕູບຖວາຍແດ່ພຣະຜູ້ເປັນ
ເຈົ້າສິ້ນເຈັດວັນ
35 ຈະມີການປະຊຸມບໍຣິສຸດໃນວັນແຮກ ເຈົ້າຢ່າທຳງານໜັກ
36 ຈົ່ງນຳເຄື່ອງບູຊາດ້ວຍໄຟຖວາຍແດ່ພຣະຜູ້ເປັນເຈົ້າທັງເຈັດວັນໃນວັນທີແປດ ເຈົ້າຈົ່ງມີການປະຊຸມບໍຣິສຸດ
ແລະນຳເຄື່ອງບູຊາດ້ວຍໄຟຖວາຍແດ່ພຣະຜູ້ເປັນເຈົ້າເປັນການປະຊຸມຕາມພິທີ ເຈົ້າທັງຫລາຍຢ່າທຳງານ
ໜັກ

37 "ທັງນີ້ເປັນເທສການລ້ຽງຕາມກຳນົດແດ່ພຣະຜູ້ເປັນເຈົ້າ ຊຶ່ງເຈົ້າຕ້ອງປະກາດເປັນເວລາປະຊຸມບໍຣິສຸດ ເພື່ອໃຫ້ນຳຖວາຍແດ່ພຣະຜູ້ເປັນເຈົ້າ ຊຶ່ງເຄື່ອງບູຊາດ້ວຍໄຟເຄື່ອງເຜົາບູຊາແລະທັນຍາບູຊາ ທັງເຄື່ອງສັຕບູຊາແລະເຄື່ອງດື່ມບູຊາ ຕ່າງໆໃຫ້ຖືກຕ້ອງຕາມວັນກຳນົດນັ້ນ

38 ນອກເຫນືອວັນສະບາໂຕແຫ່ງພຣະຜູ້ເປັນເຈົ້າ ແລະນອກເຫນືອເຄື່ອງບູຊາຂອງເຈົ້າ ແລະນອກເຫນືອເຄື່ອງບູຊາແກ້ບົນຂອງເຈົ້າ ແລະນອກເຫນືອເຄື່ອງບູຊາດ້ວຍໃຈສມັກຂອງເຈົ້າ ຊຶ່ງເຈົ້ານຳມາຖວາຍແດ່ພຣະຜູ້ເປັນເຈົ້າ

39 "ໃນວັນທີສິບຫ້າຂອງເດືອນທີເຈັດ ເມື່ອເຈົ້າໄດ້ເກັບພືດຜົນທີ່ໄດ້ຈາກແຜ່ນດິນນັ້ນເຂົ້າມາແລ້ວ ເຈົ້າຈົ່ງມີເທສການລ້ຽງແຫ່ພຣະຜູ້ເປັນເຈົ້າເຈັດວັນ ໃນວັນແຣກໃຫ້ຢຸດພັກສງົບ

40 ໃນວັນແຣກເຈົ້າຈົ່ງນຳມາຊຶ່ງຜົນຈາກຕົ້ນຫມາກຂອງພວກເຈົ້າມາ ໃບຕານກ້ານພ້າວ ກັບງ່າໄມ້ທີ່ມີໃບດົກ ແລະເຈົ້າຈົ່ງປິຕິຍິນດີຢູ່ເຈັດວັນຕໍ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າ

41 ເຈົ້າຈົ່ງຖືເປັນພິທີເທສການລ້ຽງປີລະເຈັດວັນຖວາຍແດ່ພຣະຜູ້ເປັນເຈົ້າ ທັງນີ້ເປັນກົດເກນຖາວອນຕລອດຊົ່ວຊາດເຊື້ອສາຍຂອງເຈົ້າ ເຈົ້າຈົ່ງຖືພິທີນີ້ໃນເດືອນທີ່ເຈັດ

42 ເຈົ້າຈະຕ້ອງປຸກຕູບຢູ່ເປັນເວລາເຈັດວັນ ທຸກຄົນທີ່ເປັນຊາວພື້ນເມືອງອິສຣາເອນໃຫ້ເຂົ້າຢູ່ໃນຕູບ

43 ເພື່ອຊາດເຊື້ອສາຍຂອງເຈົ້າຈະໄດ້ຊາບວ່າ ເມື່ອເຮົາພາຄົນອິສຣາເອນອອກຈາກແຜ່ນດິນເອຢິບນັ້ນ ເຮົາໄດ້ໃຫ້ເຂົາຢູ່ໃນຕູບ ເຮົາຄືພຣະຜູ້ເປັນເຈົ້າ ພຣະເຈົ້າຂອງເຈົ້າ"

44 ດັ່ງນີ້ແຫລະ ໂມເຊຈຶ່ງໄດ້ປະກາດໃຫ້ຄົນອິສຣາເອນຊາບເຖິງເທສການລ້ຽງຕາມກຳນົດຂອງພຣະຜູ້ເປັນເຈົ້າ

## 24 ການດູແລຮັກສາຕະກຽງ

The Lamp

(ອພຍ 27:20-21)

1 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊວ່າ,

2 "ເຈົ້າຈົ່ງສັ່ງຄົນອິສຣາເອນໃຫ້ນຳນ້ຳມັນຢ່າງບໍຣິສຸດສະກັດຈາກຫມາກກອກເທດເພື່ອເຕີມໃສ່ຕະກຽງ ເພື່ອໃຫ້ຕະກຽງລຸກຢູ່ສເມີ

3 ພາຍໃນເຕັນນັດພົບຂ້າງນອກຜ້າກັ້ງຫີບຄຳສັນຍານັ້ນ ໃຫ້ອາໂຣນຈັດຕະກຽງໃຫ້ເປັນລະບຽບຕັ້ງແຕ່ເວລາຄ່ຳຈົນເວລາເຊົ້າສເມີຕໍ່ພຣະຜູ້ເປັນເຈົ້າ ທັງນີ້ໃຫ້ເປັນກົດເກນຖາວອນຕລອດຊົ່ວຊາດເຊື້ອສາຍຂອງເຈົ້າ

4 ໃຫ້ອາໂຣນຈັດຕະກຽງໃຫ້ເປັນລະບຽບຢູ່ເທິງຄັນຕະກຽງທອງຄຳບໍຣິສຸດສເມີເປັນນິດແດ່ພຣະຜູ້ເປັນເຈົ້າ

**ເຂົ້າຈີ່ຫນ້າພຣະພັກ**

The Bread for the Tabernacle

5 "ເຈົ້າຈົ່ງເອົາຍອດແປ້ງ ເຮັດເຂົ້າຈີ່ສິບສອງກ້ອນ
ກ້ອນນຶ່ງໃຊ້ແປ້ງສອງໃນສິບເອຟາປີ້ງເສັ່ງ

6 ເຈົ້າຈົ່ງຈັດເຂົ້າຈີ່ນັ້ນວາງເທິງໂຕະທອງຄຳບໍຣິສຸດ ເປັນສອງແຖວໆລະຫົກກ້ອນ

7 ແລະເຈົ້າຈົ່ງເອົາເຄື່ອງກຳຍານບໍຣິສຸດໃສ່ໄວ້ທຸກແຖວ ເພື່ອຈະຄູ່ກັບເຂົ້າຈີ່ເປັນສ່ວນອະນຸສອນ ເພື່ອບູຊາດ້ວຍໄຟແດ່ພຣະຜູ້ເປັນເຈົ້າ

8 ທຸກໆວັນສະບາໂຕໃຫ້ອາໂຣນຈັດໄວ້ໃຫ້ເປັນລະບຽບຖວາຍແດ່ພຣະຜູ້ເປັນເຈົ້າສເມີໃນນາມຂອງອິສຣາເອນເປັນຄຳຫມັ້ນສັນຍາສືບໄປ

9 ເຂົ້າຈີ່ນີ້ຕົກເປັນຂອງອາໂຣນແລະບຸດຊາຍຂອງເຂົາ ໃຫ້ເຂົາຮັບປະທານໄດ້ໃນທີ່ບໍຣິສຸດ ເພາະເປັນສ່ວນບໍຣິສຸດທີ່ສຸດທີ່ໄດ້ຈາກເຄື່ອງບູຊາດ້ວຍໄຟຖວາຍແດ່ພຣະຜູ້ເປັນເຈົ້າເປັນສ່ວນໄດ້ອັນຖາວອນ"

**ການໝິ່ນປະໝາດພຣະນາມ ແລະກົດເຣື່ອງການລົງໂທດ**

10 ຄັ້ງນັ້ນມີຊາຍຄົນນຶ່ງເປັນບຸດຂອງຍິງຄົນອິສຣາເອນ ຊຶ່ງບິດາເປັນຊາວເອຢິບ ອອກໄປຖ້າມກາງຄົນອິສຣາເອນ ແລະບຸດຊາຍຂອງຍິງອິສຣາເອນ ຜິດຖຽງກັບຊາຍອິສຣາເອນຄົນນຶ່ງໃນຄ້າຍ

11 ແລະບຸດຊາຍຍິງອິສຣາເອນຄົນນັ້ນໄດ້ໝິ່ນປມາດພຣະນາມແລະໄດ້ປ້ອຍດ່າ ເຂົາຈຶ່ງນຳຕົວມາໃຫ້ໂມເຊ ມານດາຂອງເຂົາຊື່ ເຊໂລມິທບຸດສາວຂອງດິບຣີຄົນເຜົ່າດານ

12 ເຂົາຈຶ່ງຈັບຊາຍຄົນນັ້ນໄວ້ຈົນກວ່ານ້ຳພຣະທັຍຂອງພຣະຜູ້ເປັນເຈົ້າຈະເປັນທີ່ກະຈ່າງຕໍ່ເຂົາທັງຫລາຍ

13 ພຣະຜູ້ເປັນເຈົ້າຊົງກ່າວກັບໂມເຊວ່າ,

14 "ຈົ່ງນຳຜູ້ທີ່ປ້ອຍດ່ານັ້ນອອກມາຈາກຄ້າຍ ໃຫ້ບັນດາຜູ້ທີ່ໄດ້ຍິນຄຳປ້ອຍດ່າ ເອົາມືຂອງຕົນວາງໄວ້ເທິງຫົວຂອງ ເຂົາ ແລະໃຫ້ຊຸມນຸມຊົນເອົາຫີນຄວ່າງໃສ່ເຂົາໃຫ້ຕາຍ

15 ແລະຈົ່ງກ່າວແກ່ຄົນອິສຣາເອນວ່າ ຜູ້ໃດປ້ອຍດ່າພຣະຜູ້ເປັນເຈົ້າຂອງເຂົາ ຜູ້ນັ້ນຈະຕ້ອງໄດ້ຮັບໂທດບາບ

16 ຜູ້ໃດທີ່ໝິ່ນປມາດພຣະນາມຂອງພຣະເຈົ້າຈະຕ້ອງຖືກໂທດເຖິງຕາຍ ໃຫ້ຊຸມນຸມຊົນຄວ່າງກ້ອນຫີນໃສ່ເຂົາ ເສັຽໃຫ້ຕາຍ ຄົນຕ່າງດ້າວຫລືຊາວເມືອງກໍດີ ເມື່ອເຂົາໝິ່ນປມາດພຣະນາມ ຈະຕ້ອງຖືກໂທດເຖິງຕາຍ

17 "ຜູ້ທີ່ຂ້າຄົນຕາຍ ຈະຕ້ອງຖືກໂທດເຖິງຕາຍ

18 ຜູ້ທີ່ຂ້າສັດຂອງເຂົາຈະຕ້ອງຊົດໃຊ້ຊີວິດແທນຊີວິດ

19 ຖ້າຜູ້ໃດກະທຳໃຫ້ເພື່ອນບ້ານເສັຽໂສມ ເຂົາກະທຳໃຫ້ເສັຽໂສມຢ່າງໃດ ກໍໃຫ້ກະທຳແກ່ເຂົາຢ່າງນັ້ນ

20 ກະດູກຫັກແທນກະດູກຫັກ ຕາແທນຕາ ແຂ້ວແທນແຂ້ວ ເຂົາກະທຳໃຫ້ເສັຽໂສມຢ່າງໃດ ເຂົາກໍຕ້ອງຖືກທຳໃຫ້ ເສັຽໂສມຢ່າງນັ້ນ

21 ຜູ້ໃດທີ່ຂ້າສັດຂອງເຂົາຕ້ອງເສັຽຄ່າຊົດໃຊ້ ແລະຜູ້ໃດທີ່ຂ້າຄົນໃຫ້ຜູ້ນັ້ນຖືກໂທດເຖິງຕາຍ

22 ເຈົ້າຈົ່ງມີກົດໝາຍຢ່າງດຽວກັນສຳລັບຄົນຕ່າງດ້າວແລະສຳລັບຊາວເມືອງ ເພາະເຮົາຄືພຣະຜູ້ເປັນເຈົ້າ ພຣະ ເຈົ້າຂອງພວກເຈົ້າ"

23 ໂມເຊກໍກ່າວແກ່ຄົນອິສຣາເອນດັ່ງນັ້ນ ເຂົາຈຶ່ງພາຄົນທີ່ປ້ອຍດ່ານັ້ນອອກມາຈາກຄ້າຍ ແລະເອົາຫີນຄວ່າງໃສ່ ເຂົາຕາຍ ຄົນອິສຣາເອນກະທຳດັ່ງນີ້ຕາມທີ່ພຣະຜູ້ເປັນເຈົ້າຊົງສັ່ງໂມເຊໄວ້

## 25 ປີສະບາໂຕແລະປີສຽງເຂົາສັດ

The Sabbatical Year

(ພບຍ 15:1-11)

1 ພຣະຜູ້ເປັນເຈົ້າຊົງກ່າວແກ່ໂມເຊທີ່ພູເຂົາຊີນາອີວ່າ,

2 "ຈົ່ງກ່າວແກ່ຄົນອິສຣາເອນວ່າ ເມື່ອເຈົ້າທັງຫລາຍເຂົ້າແຜ່ນດິນທີ່ເຮົາໃຫ້ເຈົ້ານັ້ນ ຈົ່ງໃຫ້ແຜ່ນດິນນັ້ນຖືສະບາ ໂຕ

3 ເຈົ້າຈົ່ງຫວ່ານພືດໃນນາຂອງເຈົ້າທຸກປີ ແລະຈົ່ງເລັມກິ່ງງ່າສວນອະງຸ່ນຂອງເຈົ້າ ແລະເກັບຜົນທຸກປີ

4 ແຕ່ໃນປີທີເຈັດນັ້ນເປັນປີສະບາໂຕ ຈົ່ງໃຫ້ແຜ່ນດິນຢຸດພັກສົງົບ ເປັນປີສະບາໂຕແດ່ພະຜູ້ເປັນເຈົ້າ ເຈົ້າຢ່າ ຫວ່ານພືດໃນນາ ຫລືເລັມກິ່ງງ່າສວນອະງຸ່ນຂອງເຈົ້າ

5 ສິ່ງໃດທີ່ງອກຂຶ້ນມາເອງ ເຈົ້າຢ່າເກັບກ່ຽວ ອະງຸ່ນອັນເກີດຢູ່ໃນເຄືອ ອັນເຈົ້າບໍ່ໄດ້ຕົກແຕ່ງກໍຢ່າເກັບ ໃຫ້ເປັນປີທີ່ ແຜ່ນດິນຢຸດພັກສົງົບ

6 ແຜ່ນດິນໃນປີສະບາໂຕນັ້ນຈະຍັງພືດຜົນໃຫ້ແກ່ເຈົ້າທັງຫລາຍຄືແກ່ຕົວເຈົ້າເອງ ແກ່ທາດຊາຍທາດຍິງຂອງ ເຈົ້າ ແກ່ລູກຈ້າງຂອງເຈົ້າ ແລະແກ່ຄົນຕ່າງດ້າວທີ່ຢູ່ກັບເຈົ້າ

7 ພືດຜົນແຫ່ງແຜ່ນດິນທັງສິ້ນ ຈະເປັນອາຫານຂອງສັດລ້ຽງຂອງເຈົ້າແລະຂອງສັດປ່າໃນນັ້ນດ້ວຍ

**ວາຣະຄົບຮອບຫ້າສິບປີ**

The Year of Jubilee

8 “ເຈົ້າຈົ່ງນັບປີສະບາໂຕເຈັດປີ ຄືເຈັດຄູນເຈັດປີ ເວລາປີສະບາໂຕເຈັດປີຈຶ່ງເປັນສີ່ສິບເກົ້າປີແກ່ເຈົ້າ
9 ເຈົ້າຈົ່ງໃຫ້ເປົ່າເຂົາສັດດັງສນັ່ນໃນວັນທີສິບເດືອນທີເຈັດ ເຈົ້າຈົ່ງໃຫ້ເປົ່າເຂົາສັດທົ່ວແຜ່ນດິນໃນວັນທຳການລົບ
ມົນທິນ
10 ເຈົ້າຈົ່ງຖືປີທີຫ້າສິບໄວ້ເປັນປີບໍຣິສຸດແລະປະກາດອິສຣະພາບແກ່ບັນດາຄົນທີ່ອາໄສຢູ່ທົ່ວແຜ່ນດິນຂອງເຈົ້າ
ໃຫ້ເປັນປີສຽງເຂົາສັດແກ່ເຈົ້າ ໃຫ້ທຸກຄົນກັບໄປຍັງພູມລຳເນົາອັນເປັນຊັບສິນຂອງຕົນ ແລະກັບໄປສູ່ຕະກູນ
ຂອງຕົນ
11 ປີທີຫ້າສິບນັ້ນເປັນປີສຽງເຂົາສັດຂອງເຈົ້າ ໃນປີນັ້ນເຈົ້າຢ່າຫວ່ານພືດຫລືກ່ຽວເກັບຜົນທີ່ເກີດຂຶ້ນມາເອງ ຫລື
ເກັບອະງຸ່ນຈາກເຄືອທີ່ບໍ່ໄດ້ຕົກແຕ່ງ
12 ເພາະເປັນປີສຽງເຂົາສັດ ຈະເປັນປີບໍຣິສຸດແກ່ເຈົ້າ ເຈົ້າຈົ່ງຮັບປະທານພືດຜົນທີ່ງອກມາຈາກນາໃນປີນັ້ນ
13 “ໃນປີສຽງເຂົາສັດນີ້ໃຫ້ທຸກຄົນກັບໄປສູ່ພູມລຳເນົາອັນເປັນຊັບສິນຂອງຕົນ
14 ເຈົ້າຈະຂາຍນາໃຫ້ເພື່ອນບ້ານກໍດີ ຫລືຊື້ຈາກເພື່ອນບ້ານກໍດີ ເຈົ້າຢ່າໂລບກັນ
15 ຕາມຈຳນວນປີຫລັງຈາກປີສຽງເຂົາສັດ ເຈົ້າຈົ່ງຊື້ນາຈາກເພື່ອນບ້ານຂອງເຈົ້າ ແລະໃຫ້ເຂົາຂາຍແກ່ເຈົ້າຕາມ
ຈຳນວນປີທີ່ປູກພືດໄດ້
16 ຖ້າຫລາຍປີກໍຕ້ອງເພີ້ມຣາຄາສູງຂຶ້ນ ຖ້າຫນ້ອຍປີເຈົ້າຈົ່ງລົດຣາຄາໃຫ້ຕ່ຳລົງ ເພາະທີ່ເຂົາຂາຍນັ້ນ ເຂົາກໍຂາຍ
ຕາມຈຳນວນປີທີ່ປູກພືດ
17 ເຈົ້າຢ່າໂກງກັນ ແຕ່ເຈົ້າຈົ່ງຢຳເກງພຣະເຈົ້າຂອງເຈົ້າ ເພາະເຮົາຄືພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າ
18 “ເພາະສະນັ້ນເຈົ້າຈົ່ງກະທຳຕາມກົດເກນຂອງເຮົາ ແລະຮັກສາກົດຫມາຍຂອງເຮົາແລະປະຕິບັດຕາມ ດັ່ງນັ້ນ
ເຈົ້າຈະອາສັຍ ຢູ່ໃນແຜ່ນດິນນັ້ນຢ່າງປອດພັຍໄດ້
19 ແຜ່ນດິນຈະອຳນວຍຜົນໃຫ້ເຈົ້າໄດ້ຮັບປະທານຢ່າງອີ່ມຫນຳ ແລະອາສັຍຢູ່ຢ່າງປອດພັຍ
20 ຖ້າເຈົ້າຈະເວົ້າວ່າ “ຖ້າເຮົາທັງຫລາຍຫວ່ານຫລືກ່ຽວພືດຜົນຂອງເຮົາບໍ່ໄດ້ ໃນປີທີເຈັດເຮົາຈະເອົາຫຍັງມາຮັບ
ປະທານ”
21 ເຮົາຈະບັນຊາພອນຂອງເຮົາໃຫ້ມີເຫນືອເຈົ້າໃນປີທີຫົກ ເພື່ອຈະມີພືດຜົນພໍສຳລັບສາມປີ
22 ເມື່ອເຈົ້າຫວ່ານໃນປີທີແປດເຈົ້າຈະຮັບປະທານຂອງເກົ່າຂອງເຈົ້າ ຈົນປີທີເກົ້າເມື່ອເຈົ້າໄດ້ພືດຜົນໃຫມ່ເຂົ້າມາ
ເຈົ້າກໍຍັງຮັບປະທານພືດຜົນເກົ່າຂອງເຈົ້າຢູ່
23 ເຈົ້າທັງຫລາຍຈະຂາຍທີ່ດິນຂອງເຈົ້າໃຫ້ຂາດບໍ່ໄດ້ເພາະວ່າທີ່ດິນນັ້ນເປັນຂອງເຮົາ ເພາະເຈົ້າເປັນຄົນແຂກ
ເມືອງແລະເປັນຄົນອາສັຍຢູ່ກັບເຮົາ
24 ທົ່ວໄປໃນແຜ່ນດິນທີ່ເຈົ້າຍຶດຖືຢູ່ ເຈົ້າຈົ່ງໃຫ້ມີການໄຖ່ຖອນທີ່ດິນຄືນ
25 “ຖ້າພີ່ນ້ອງຂອງເຈົ້າຍາກຈົນລົງ ແລະຂາຍທີ່ດິນສ່ວນນຶ່ງຂອງເຂົາ ໃຫ້ຍາດສນິດຖັດເຂົາໄປມາໄຖ່ຖອນນາທີ່
ພີ່ນ້ອງຂອງເຂົາຂາຍໃຫ້ນັ້ນ
26 ຖ້າຊາຍຄົນນັ້ນບໍ່ມີຍາດມາໄຖ່ຖອນໃຫ້ ແຕ່ຕໍ່ມາເຂົາເປັນຄົນມັ່ງມີ ແລະມີຊັບພໍທີ່ຈະໄຖ່ຖອນໄດ້
27 ໃຫ້ເຂົານັບປີກັບຄືນໄປເຖິງປີທີ່ເຂົາຂາຍໃຫ້ ແລ້ວຈົ່ງນັບເງິນທີ່ຄວນຈ່າຍກັບຄືນນັ້ນໃຫ້ແກ່ຄົນທີ່ຕົນຂາຍໃຫ້
ແລະຕົວກໍເຂົ້າຢູ່ໃນທີ່ດິນຂອງເຂົາໄດ້
28 ຖ້າເຂົາບໍ່ມີຊັບພໍທີ່ຈະໄຖ່ຄືນ ທີ່ດິນທີ່ເຂົາໄດ້ຂາຍໄປຈະຄົງຢູ່ໃນມືຂອງຜູ້ຊື້ຈົນເຖິງປີສຽງເຂົາສັດ ໃຫ້ເຂົາຄືນ
ໃຫ້ແກ່ເຈົ້າຂອງໃນປີສຽງເຂົາສັດນີ້ ແລະເຈົ້າຂອງເດີມຈະກັບເຂົ້າຢູ່ໃນທີ່ເດີມຂອງເຂົາໄດ້

29 “ຖ້າຜູ້ໃດຂາຍເຮືອນຊຶ່ງຢູ່ໃນເມືອງທີ່ມີກຳແພງ ເມື່ອຂາຍໄປແລ້ວໃຫ້ເຂົາໄຖ່ຖອນຄືນໄດ້ພາຍໃນນຶ່ງປີແຮກ
ໃຫ້ເຂົາມີສິດໃນການໄຖ່ຄືນໄດ້ນຶ່ງປີເຕັມ
30 ຖ້າໃນເວລານຶ່ງປີເຕັມເຂົາບໍ່ທຳການໄຖ່ຖອນ ກໍໃຫ້ຈັດການເສັງໃຫ້ເປັນການແນ່ນອນວ່າຜູ້ທີ່ຊື້ໄປມີສິດເຫນືອ
ເຮືອນທີ່ຢູ່ໃນເມືອງທີ່ມີກຳແພງນັ້ນສິດຂາດແລ້ວ ຕລອດຊົ່ວຊາດເຊື້ອສາຍຂອງເຂົາ ໃນປີສຽງເຂົາສັດເຂົາກໍບໍ່
ຕ້ອງຄືນໃຫ້
31 ແຕ່ເຮືອນໃນຊົນນະບົດທີ່ບໍ່ມີກຳແພງລ້ອມ ໃຫ້ນັບເຂົ້າເປັນພວກດຽວກັບທົ່ງນາໃນປະເທດນັ້ນ ຄືໄຖ່ຖອນຄືນ
ໄດ້ ແລະຈະຕ້ອງຄືນກັບໃຫ້ເຈົ້າຂອງເດີມໃນປີສຽງເຂົາສັດ
32 ແຕ່ຢ່າງໃດກໍຕາມເມືອງຂອງຄົນເລວີ ຫລືບ້ານໃນເມືອງທີ່ເຂົາຖືກຳມະສິດ ຄົນເລວີຈະໄຖ່ຖອນຄືນໄດ້ທຸກເວ
ລາ
33 ຖ້າຄົນເລວີຄົນໃດໄຖ່ຖອນ ເຮືອນນັ້ນຊຶ່ງເຂົາຂາຍໄປກັບເມືອງທີ່ເຂົາຖືກຳມະສິດຕ້ອງກັບຄືນໃຫ້ເຈົ້າຂອງເດີມ
ໃນປີສຽງເຂົາສັດ ເພາະເຮືອນໃນເມືອງຂອງຄົນເລວີເປັນກຳມະສິດຂອງເຂົາໃນຫມູ່ຄົນອິສຣາເອນ
34 ແຕ່ທົ່ງນາທີ່ເປັນທີ່ດິນສາທາຣະນະນັ້ນຈະຊື້ຂາຍກັນບໍ່ໄດ້ເພາະວ່າເປັນກຳມະສິດຖາວອນຂອງເຂົາທັງຫລາຍ
35 “ຖ້າພີ່ນ້ອງຂອງເຈົ້າຍາກຈົນລົງ ແລະລ້ຽງຕົວເອງຢູ່ກັບເຈົ້າບໍ່ໄດ້ ເຈົ້າຈະຕ້ອງລ້ຽງດູເຂົາໃຫ້ເຂົາຢູ່ກັບເຈົ້າຢ່າງ
ຄົນຕ່າງດ້າວແລະຄົນທີ່ອາສັຍຢູ່
36 ຢ່າເອົາດອກເບັ້ຽຫລືເງິນເພີ້ມຈາກເຂົາ ແຕ່ຈົ່ງຢຳເກງພຣະເຈົ້າ ເພື່ອວ່າພີ່ນ້ອງຂອງເຈົ້າຈະຢູ່ໃກ້ຊິດກັບເຈົ້າໄດ້
37 ເຈົ້າຢ່າໃຫ້ເຂົາຢືມເງິນດ້ວຍຄິດດອກເບັ້ຽ ຫລືຂາຍອາຫານດ້ວຍເອົາກຳໄລຈາກເຂົາ
38 ເພາະເຮົາຄືພຣະຜູ້ເປັນເຈົ້າ ພຣະເຈົ້າຂອງເຈົ້າ ຊຶ່ງນຳເຈົ້າອອກຈາກແຜ່ນດິນເອຢິບ ເພື່ອຍົກແຜ່ນດິນການາ
ອານໃຫ້ແກ່ເຈົ້າ ແລະທີ່ຈະເປັນພຣະເຈົ້າຂອງເຈົ້າ
39 “ຖ້າພີ່ນ້ອງຂອງເຈົ້າຍາກຈົນລົງຢູ່ໃກ້ຊິດເຈົ້າ ແລະຂາຍຕົວໃຫ້ແກ່ເຈົ້າ ເຈົ້າຢ່າໃຫ້ເຂົາທຳງານເປັນທາດ
40 ໃຫ້ເຂົາຢູ່ກັບເຈົ້າຢ່າງລູກຈ້າງ ຫລືຄົນທີ່ອາສັຍຢູ່ນຳ ໃຫ້ເຂົາບົວລະບັດເຈົ້າໄປເຖິງປີສຽງເຂົາສັດ
41 ແລ້ວເຂົາແລະລູກຫລານຂອງເຂົາຈະອອກໄປຈາກເຈົ້າກັບໄປສູ່ຕະກູນຂອງເຂົາ ແລະກັບໄປຢູ່ໃນທີ່ດິນຂອງບິ
ດາຂອງເຂົາ
42 ເພາະວ່າເຂົາທັງຫລາຍເປັນຄົນໃຊ້ຂອງເຮົາທີ່ເຮົາພາອອກຈາກເອຢິບ ເຂົາຈະຂາຍຕົວເປັນທາດບໍ່ໄດ້
43 ເຈົ້າຢ່າຂົ່ມເຫັງເຂົາໃຫ້ລຳບາກ ແຕ່ຈົ່ງຢຳເກງພຣະເຈົ້າຂອງເຈົ້າ
44 ສ່ວນທາດຊາຍຍິງຊຶ່ງຈະມີໄດ້ນັ້ນ ເຈົ້າຈະຊື້ທາດຊາຍຍິງຈາກຖ້າມກາງບັນດາປະຊາຊາດທີ່ຢູ່ຂ້າງຄຽງເຈົ້າກໍ
ໄດ້
45 ເຈົ້າຈະຊື້ຈາກຄົນຕ່າງດ້າວທີ່ອາສັຍຢູ່ໃນຫມູ່ພວກເຈົ້າທັງຄອບຄົວຂອງເຂົາ ຊຶ່ງເປັນຄົນເກີດໃນແຜ່ນດິນຂອງ
ເຈົ້າ ແລະເຂົາຈະຕົກເປັນຊັບສິນຂອງເຈົ້າກໍໄດ້
46 ເຈົ້າຈະທຳພິນັຍກັມຍົກເຂົາໃຫ້ແກ່ບຸດຫລານຂອງເຈົ້າໃຫ້ເປັນມໍຣະດົກແກ່ເຂົາເປັນກຳມະສິດສືບໄປກໍໄດ້ ເຈົ້າ
ໃຊ້ເຂົາໄດ້ຢ່າງທາດ ແຕ່ເຈົ້າທັງຫລາຍຢ່າປົກຄອງພີ່ນ້ອງຄົນອິສຣາເອນດ້ວຍຄວາມຮຸນແຮງ
47 “ຖ້າຄົນຕ່າງດ້າວ ຫລືຄົນທີ່ອາສັຍຢູ່ກັບເຈົ້າຮັ່ງມີຂຶ້ນ ແລະພີ່ນ້ອງຂອງເຈົ້າທີ່ຢູ່ກັບເຂົາຍາກຈົນລົງ ແລະຂາຍ
ຕົວໃຫ້ແກ່ຄົນຕ່າງດ້າວຫລືຜູ້ທີ່ອາສັຍຢູ່ກັບເຈົ້ານັ້ນ ຫລືຂາຍໃຫ້ແກ່ຍາດຄົນນຶ່ງຄົນໃດຂອງຄົນຕ່າງດ້າວນັ້ນ
48 ເມື່ອເຂົາຂາຍຕົວແລ້ວກໍໃຫ້ມີການໄຖ່ຖອນ ຄືພີ່ນ້ອງຄົນນຶ່ງຄົນໃດຂອງເຂົາທຳການໄຖ່ຖອນເຂົາໄດ້
49 ຫລືລຸງຫລືລູກພີ່ລູກນ້ອງຈະທຳການໄຖ່ຖອນເຂົາກໍໄດ້ ຫລືຍາດສນິດຂອງຕະກູນຂອງເຂົາຈະໄຖ່ຖອນເຂົາກໍ
ໄດ້ ຫລືຖ້າເຂົາຮັ່ງມີຂຶ້ນ ເຂົາຈະໄຖ່ຖອນຕົວເອງກໍໄດ້
50 ໃຫ້ຜູ້ທີ່ຂາຍຕົວຕິດກັບຜູ້ທີ່ຮັບຊື້ຕົວເຂົາໄປວ່າເຂົາໄດ້ຂາຍຕົວຈັກປີຈຶ່ງເຖິງປີສຽງເຂົາສັດ ຄ່າຕົວຂອງເຂົາເປັນ
ຄ່າຕາມຈຳນວນປີ ເວລາທີ່ເຂົາຢູ່ກັບເຈົາຂອງຕົວເຂົານັ້ນຄິດຕາມເວລາຂອງລູກຈ້າງ

51 ຖ້າມີເວລາອີກຫລາຍປີ ເຂົາຕ້ອງຊຳລະເງິນຄືນເທົ່າຄ່າປີທີ່ເຫລືອຢູ່ ນັບເປັນຄ່າໄຖ່ຖອນຕົວເຂົາ
52 ຖ້າຍັງເຫລືອໜ້ອຍປີຈະເຖິງປີສຸງງເຂົາສັດ ກໍໃຫ້ຜູ້ຂາຍຕົວຄິດກັບຜູ້ຊື້ຕົວໄວ້ຄິດເງິນຕາມຈຳນວນປີທີ່ເຂົາ
ຄວນຈະຮັບໃຊ້ຄືນເປັນເງິນຄ່າໄຖ່ເຂົາ
53 ໃຫ້ເຂົາເປັນລູກຈ້າງລາຍປີຢູ່ກັບນາຍ ຢ່າໃຫ້ນາຍປົກຄອງຂົ່ມເຫັງເຂົາໃນໝູ່ພວກເຈົ້າ
54 ຖ້າເຂົາບໍ່ໄຖ່ຖອນຕາມທີ່ກ່າວມານີ້ກໍໃຫ້ປ່ອຍເຂົາໃນປີສຸງງເຂົາສັດ ທັງເຂົາພ້ອມກັບລູກຂອງເຂົາ
55 ຕໍ່ເຮົາ ຄົນອິສຣາເອນເປັນຄົນໃຊ້ເຂົາເປັນຄົນໃຊ້ຂອງເຮົາ ທີ່ເຮົາພາອອກຈາກແຜ່ນດິນເອຢິບ ເຮົາຄືພຣະຜູ້
ເປັນເຈົ້າ ພຣະເຈົ້າຂອງເຈົ້າ

## 26 ພຣະພອນຂອງການເຊື່ອຟັງ

Rewards for Obedience

( ພບຍ 7:12-24; 28:1-14)

1 ເຈົ້າທັງຫລາຍຢ່າສ້າງຮູບເຄົາຣົບສຳລັບຕົນ ຫລືຕັ້ງຮູບແກະສລັກ ຫລືເສົາສັກສິດ ແລະເຈົ້າທັງຫລາຍຢ່າຕັ້ງ
ຮູບສີລາແກະສລັກໄວ້ໃນແຜ່ນດິນຂອງເຈົ້າເພື່ອການຂາບໄຫວ້ ເພາະເຮົາຄືພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າ
2 ເຈົ້າຈົ່ງຖືຮັກສາສະບາໂຕທັງຫລາຍຂອງເຮົາ ແລະໂຄຣົບຕໍ່ສະຖານສັກສິດຂອງເຮົາ ເຮົາຄືພຣະຜູ້ເປັນເຈົ້າ
3 "ຖ້າເຈົ້າທັງຫລາຍດຳເນີນຕາມກົດເກນຂອງເຮົາແລະຮັກສາບັນຍັດຂອງເຮົາແລະກະທຳຕາມ
4 ເຮົາຈະປະທານຝົນຕາມຣະດູແກ່ເຈົ້າ ແລະແຜ່ນດິນຈະເກີດພືດຜົນແລະຕົ້ນໄມ້ໃນທົ່ງຈະບັງເກີດຜົນ
5 ແລະເວລານວດເຂົ້າຈະດົນນານເຖິງຣະດູເກັບຜົນອະງຸ່ນ ແລະຣະດູເກັບຜົນອະງຸ່ນຈະດົນນານໄປເຖິງຣະດູ
ຫວ່ານ ແລະເຈົ້າຈະຮັບປະທານອາຫານຢ່າງອີ່ມໜຳສຳຣານ ແລະຢູ່ໃນແຜ່ນດິນຂອງເຈົ້າຢ່າງປອດພັຍ
6 ເຮົາຈະໃຫ້ສັນຕິພາບໃນແຜ່ນດິນ ເຈົ້າທັງຫລາຍຈະນອນລົງ ແລະບໍ່ມີຜູ້ໃດທີ່ຈະທຳໃຫ້ເຈົ້າຢ້ານ ເຮົາຈະກຳ
ຈັດສັດຮ້າຍຈາກແຜ່ນດິນແລະດາບຈະບໍ່ຜ່ານແຜ່ນດິນຂອງເຈົ້າເລີຍ
7 ເຈົ້າຈະຂັບໄລ່ສັດຕຣູຂອງເຈົ້າ ແລະເຂົາທັງຫລາຍຈະລົ້ມລົງຕໍ່ໜ້າເຈົ້າດ້ວຍດາບ
8 ພວກເຈົ້າຫ້າຄົນຈະຂັບໄລ່ສັດຕຣູຮ້ອຍຄົນ ພວກເຈົ້າຮ້ອຍຄົນຈະຂັບໄລ່ສັດຕຣູໝື່ນຄົນ ແລະສັດຕຣູຂອງເຈົ້າ
ຈະລົ້ມລົງດ້ວຍດາບຕໍ່ໜ້າເຈົ້າ
9 ເຮົາຈະຄິດເຖິງເຈົ້າ ຈະກະທຳໃຫ້ເຈົ້າມີເຊື້ອສາຍຫລາຍຍິ່ງຂຶ້ນ ແລະດຳຣົງຄຳໝັ້ນສັນຍາຊຶ່ງມີໄວ້ກັບເຈົ້າ
10 ເຈົ້າຈະໄດ້ຮັບປະທານຂອງທີ່ສະສົມໄວ້ນານ ແລະເຈົ້າຈະຕ້ອງເອົາຂອງເກົ່າອອກໄປເພື່ອເອົາບ່ອນມາເກັບ
ຂອງໃໝ່
11 ແລະເຮົາຈະຢູ່ໃນໝູ່ພວກເຈົ້າ ແລະວິນຍານຈິດຂອງເຮົາຈະບໍ່ກຽດເຈົ້າ
12 ເຮົາຈະດຳເນີນໃນໝູ່ພວກເຈົ້າ ແລະຈະເປັນພຣະເຈົ້າຂອງເຈົ້າ ແລະເຈົ້າຈະເປັນໄພ່ພົນຂອງເຮົາ
13 ເຮົາຄືພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າ ຜູ້ນຳເຈົ້າອອກຈາກແຜ່ນດິນເອຢິບ ເພື່ອເຈົ້າຈະບໍ່ໄດ້ເປັນທາດຂອງ
ເຂົາ ເຮົາໄດ້ຫັກຄານແອກຂອງເຈົ້າອອກເສັຽ ເພື່ອໃຫ້ເຈົ້າເດີນຕົວຕົງໄດ້

### ໂທດຂອງການບໍ່ເຊື່ອຟັງ

Penalties for Disobedience

(ພບຍ 28:15-68)

14 "ຖ້າເຈົ້າບໍ່ໄດ້ເຊື່ອຟັງເຮົາ ແລະຈະບໍ່ກະທຳຕາມບບັນຍັດທັງໝົດເຫລົ່ານີ້
15 ຖ້າພວກເຈົ້າປະຕິເສດທີ່ຈະເຊື່ອຟັງບັນຍັດທັງຂໍ້ຄຳສັ່ງທັງຫລາຍຂອງເຮົາ ແລະທຳລາຍຄຳໝັ້ນສັນຍາທີ່ເຮົາ
ໄດ້ທຳໄວ້ກັບພວກເຈົ້າ

16 ເຮົາຈະກະທຳດັ່ງນີ້ແກ່ເຈົ້າ ຄືເຮົາຈະນຳພັຍອັນຕະຣາຍມາສູ່ພວກເຈົ້າ ຄວາມພິນາດ ແລະຄວາມເຈັບໄຂ້ ຊຶ່ງທຳໃຫ້ໜ່ວຍຕາບອດແລະກະທຳໃຫ້ຊີວິດຊຸດໂຊມຢູ່ເຫນືອເຈົ້າທັງຫລາຍ ເຈົ້າທັງຫລາຍຈະຫວ່ານພືດໄວ້ເສັຽເປົ່າ ເພາະສັດຕຣູຂອງ  ເຈົ້າຈະມາກິນ

17 ເຮົາຈະຫມາຍຫນ້າເຈົ້າ ເຈົ້າຈະແພ້ສັດຕຣູຂອງເຈົ້າ ຄົນທີ່ກຽດຊັງເຈົ້າ ຈະປົກຄອງຢູ່ເຫນືອເຈົ້າ ເຈົ້າຈະຫລົບຫນີໄປທັງທີ່ບໍ່ມີຜູ້ໃດໄລ່ຕິດຕາມ

18 ເມື່ອເປັນຢ່າງນີ້ແລ້ວເຈົ້າທັງຫລາຍຍັງບໍ່ຟັງເຮົາ ເຮົາກໍຈະຕີສອນເຈົ້າອີກດ້ວຍໂທດທີ່ເຈົ້າຜິດເຖິງເຈັດເທົ່າ

19 ເຮົາຈະທຳລາຍຄວາມດື້ດ້ານຈອງຫອງໃນກຳລັງອຳນາດຂອງເຈົ້າ ເຮົາຈະກະທຳໃຫ້ຟ້າສວັນຂອງເຈົ້າເຫມືອນທອງເຫລືອງ

20 ເຈົ້າທັງຫລາຍຈະເປືອງກຳລັງເສັຽເປົ່າໆ ເພາະວ່າແຜ່ນດິນຂອງເຈົ້າຈະບໍ່ມີພືດຜົນ ແລະຕົ້ນໄມ້ໃນແຜ່ນດິນກໍຈະບໍ່ບັງເກີດຜົນ

21 “ຖ້າເຈົ້າຍັງດຳເນີນຂັດແຍ້ງກັບເຮົາຢູ່ແລະບໍ່ເຊື່ອຟັງເຮົາ ເຮົາຈະນຳພັຍວິບັດມາເຫນືອເຈົ້າຍິ່ງຂຶ້ນ ເປັນເຈັດເທົ່າຂອງບາບຂອງເຈົ້າ

22 ເຮົາຈະປ່ອຍສັດປ່າໃຫ້ມາໃນຫມູ່ພວກເຈົ້າ ມັນຈະປຸ້ນເອົາລູກຫລານຂອງເຈົ້າ ແລະທຳລາຍສັດໃຊ້ຂອງເຈົ້າແລະທຳໃຫ້ເຈົ້າເຫລືອນ້ອຍ ເພື່ອຖນົນຫົນທາງຂອງເຈົ້າຈະໄດ້ຮ້າງເປົ່າ

23 “ຖ້າດ້ວຍການຕີສອນນີ້ເຈົ້າຍັງບໍ່ຫັນມາຫາເຮົາ ແລະຍັງປະພຶດຂັດແຍ້ງເຮົາຢູ່

24 ແລ້ວເຮົາຈະດຳເນີນການຂັດແຍ້ງເຈົ້າທັງຫລາຍ ແລະເຮົາເອງຈະຂ້ຽນຕີເຈົ້າດ້ວຍເຣື່ອງບາບຂອງເຈົ້າເຖິງເຈັດເທົ່າທະວີຄູນ

25 ເຮົາຈະນຳດາບມາເຫນືອເຈົ້າ ຊຶ່ງລົງໂທດເຈົ້າຕາມຄຳສັນຍາ ຖ້າເຈົ້າເຂົ້າມາຮວມກັນຢູ່ໃນເມືອງ ເຮົາຈະໃຫ້ໂຣກຮ້າຍມາໃນຫມູ່ພວກເຈົ້າ ແລະເຈົ້າຈະຕົກໃນມືຂອງສັດຕຣູ

26 ເມື່ອເຮົາທຳລາຍອາຫານຫລັກຂອງເຈົ້າ ຜູ້ຍິງສິບຄົນຈະປີ້ງເຂົ້າຫນົມຂອງເຈົ້າດ້ວຍເຕົາອົບອັນດຽວ ແລ້ວເອົາເຂົ້າຫນົມມາຊັ່ງໃຫ້ເຈົ້າ ເຈົ້າຈະຮັບປະທານແຕ່ຈະບໍ່ອີ່ມ

27 “ຖ້າເປັນຢ່າງນີ້ແລ້ວ ເຈົ້າຍັງບໍ່ເຊື່ອຟັງເຮົາ ແຕ່ປະພຶດຂັດແຍ້ງເຮົາ

28 ເຮົາຈະດຳເນີນການຂັດແຍ້ງເຈົ້າຢ່າງຮຸນແຮງ ແລະເຮົາເອງຈະລົງໂທດເຈົ້າເພາະຄວາມຜິດບາບຂອງເຈົ້າເຈັດເທົ່າ

29 ເຈົ້າຈະຮັບປະທານເນື້ອລູກຊາຍຂອງເຈົ້າ ແລະເຈົ້າຈະຮັບປະທານເນື້ອລູກສາວຂອງເຈົ້າ

30 ເຮົາຈະທຳລາຍບ່ອນອັນສູງທັງຫລາຍຂອງເຈົ້າ ແລະຕັດແທ່ນເຄື່ອງຫອມຂອງເຈົ້າລົງ ແລະໂຍນສົບຂອງເຈົ້າລົງເຫນືອຊາກຮູບໂຄຣົບຂອງເຈົ້າ ແລະຈິດໃຈຂອງເຮົາຈະກຽດຊັງເຈົ້າ

31 ເຮົາຈະໃຫ້ເມືອງຂອງເຈົ້າຮົກຮ້າງ ແລະຈະກະທຳໃຫ້ສະຖານນະມັສການຂອງເຈົ້າວ່າງເປົ່າ ແລະເຮົາຈະບໍ່ດົມກິ່ນຖວາຍຂອງເຈົ້າທີ່ພໍໃຈ

32 ເຮົາຈະໃຫ້ແຜ່ນດິນຂອງເຈົ້າແຫ້ງແລ້ງຈົນສັດຕຣູຂອງເຈົ້າຜູ້ຈະມາອາສັຍຢູ່ໃນນັ້ນແປກໃຈ

33 ເຮົາຈະໃຫ້ພວກເຈົ້າກະຈັດກະຈາຍໄປຢູ່ໃນບັນດາປະຊາຊາດ ແລະເຮົາຈະໃຫ້ດາບອອກຈາກຝັກໄລ່ຕາມເຈົ້າແລະແຜ່ນດິນຂອງເຈົ້າຈະຮົກຮ້າງ ແລະເມືອງຂອງເຈົ້າຈະວ່າງເປົ່າ

34 “ເມື່ອເຈົ້າຕ້ອງໄປຢູ່ໃນແຜ່ນດິນຂອງສັດຕຣູ ແຜ່ນດິນຂອງເຈົ້າຈະມີສະບາໂຕຕາບເທົ່າເວລາທີ່ວ່າງເປົ່າຢູ່ແຜ່ນດິນກໍຈະໄດ້ຢຸດພັກ ແລະມີສະບາໂຕ

35 ຕາບໃດທີ່ແຜ່ນດິນວ່າງເປົ່າຢູ່ກໍຈະໄດ້ຢຸດພັກ ຄືຈະໄດ້ຢຸດພັກຢ່າງທີ່ບໍ່ໄດ້ຢຸດໃນສະບາໂຕຂນະເມື່ອເຈົ້າອາສັຍຢູ່ໃນແຜ່ນດິນນັ້ນ

36 ສ່ວນພວກເຈົ້າທັງຫລາຍທີ່ຍັງເຫລືອຢູ່ເຮົາຈະໃຫ້ເຂົາມີໃຈອ່ອນແອໃນແຜ່ນດິນຂອງສັດຕຣູ ຈົນສຽງໃບໄມ້
ແຫ້ງປິວຈະທຳໃຫ້ເຂົາໜີ ແລະເຂົາຈະໜີເຫມືອນຄົນໜີຈາກດາບ ແລະເຂົາຈະລົ້ມລົງທັງທີ່ບໍ່ມີຄົນໄລ່ຕິດ
ຕາມມາ
37 ເຂົາຈະສະດຸດຊຶ່ງກັນແລະກັນ ເຫມືອນຄົນໜີດາບທັງທີ່ບໍ່ມີຄົນຕາມມາ ແລະເຈົ້າຈະບໍ່ມີກຳລັງຕໍ່ຕ້ານສັດຕຣູ
ຂອງເຈົ້າ
38 ເຈົ້າທັງຫລາຍຈະລົ້ມຕາຍຖ້າມກາງບັນດາປະຊາຊາດແລະແຜ່ນດິນຂອງສັດຕຣູຂອງເຈົ້າຈະກິນເຈົ້າເສັຽ
39 ສ່ວນເຈົ້າທັງຫລາຍທີ່ເຫລືອຢູ່ຈະຈ່ອຍຜອມໄປໃນແຜ່ນດິນສັດຕຣູຂອງເຈົ້ານັ້ນເພາະກັມບາບຂອງຕົນ ແລະ
ເພາະກັມບາບຂອງຕົນ ແລະເພາະກັມບາບຂອງບັນພະບຸຣຸດຂອງຕົນ ເຂົາຈະຕ້ອງຈ່ອຍຜອມໄປເຫມືອນຢ່າງ
ບັນພະບຸຣຸດດ້ວຍ
40 "ແຕ່ຖ້າເຂົາທັງຫລາຍສາຣະພາບກັມບາບຂອງເຂົາ ແລະກັມບາບຂອງບັນພະບຸຣຸດຊຶ່ງເຂົາທັງຫລາຍກະທຳ
ຜິດຕໍ່ເຮົາດ້ວຍຄວາມທໍຣະຍົດຂອງເຂົານັ້ນ ແລະທີ່ໄດ້ປະພຶດຂັດແຍ້ງເຮົາ
41 ເຮົາຈຶ່ງດຳເນີນກາຍຂັດແຍ້ງເຂົາທັງຫລາຍ ແລະໄດ້ນຳເຂົາເຂົ້າແຜ່ນດິນແຫ່ງສັດຕຣູຂອງເຂົາ ຖ້າເມື່ອນັ້ນຈິດ
ໃຈອັນນອກຮີດຂອງເຂົາຖ່ອມລົງແລ້ວ ແລະເຂົາໄດ້ແກ້ໄຂໃນເຣື່ອງກັມບາບຂອງເຂົາແລ້ວ
42 ເຮົາຈຶ່ງຈະລະນຶກເຖິງຄຳຫມັ້ນສັນຍາຂອງເຮົາຊຶ່ງມີຕໍ່ອີຊາກ ແລະຄຳຫມັ້ນສັນຍາຂອງເຮົາຕໍ່ອັບຣາຮາມ ແລະ
ເຮົາຈະລະນຶກເຖິງແຜ່ນດິນນັ້ນ
43 ແຕ່ເຂົາຍັງຕ້ອງຖິ້ມແຜ່ນດິນນັ້ນໄວ້ ແລະແຜ່ນດິນຈະມີສະບາໂຕ ຊຶ່ງໄດ້ວ່າງຢູ່ໂດຍບໍ່ມີພວກເຂົາທັງຫລາຍອາ
ສັຍ ເຂົາທັງຫລາຍຈຶ່ງໄດ້ຮັບໂທດທີ່ໄດ້ກະທຳຜິດດ້ວຍເຣື່ອງເບື່ອຫນ່າຍກົດຫມາຍຂອງເຮົາ ແລະຈິດໃຈຂອງ
ເຂົາກຽດຊັງກົດເກນຂອງເຮົາ
44 ເຖິງພຽງນັ້ນກໍດີເມື່ອເຂົາທັງຫລາຍຢູ່ໃນແຜ່ນດິນສັດຕຣູຂອງເຂົາ ເຮົາຈະບໍ່ເບື່ອຫນ່າຍເຂົາ ເຮົາຈະບໍ່ກຽດຊັງ
ເຂົາເຖິງກັບຈະທຳລາຍເຂົາເສັຽໃຫ້ຫມົດທີດຽວ ແລະທຳລາຍຄຳຫມັ້ນສັນຍາຊຶ່ງມີກັບເຂົາເສັຽ ເພາະເຮົາຄືພ
ຣະຜູ້ເປັນເຈົ້າພຣະເຈົ້າຂອງເຂົາ
45 ເພາະເຫັນແກ່ເຂົາເຮົາຈະລະນຶກເຖິງຄຳຫມັ້ນສັນຍາຊຶ່ງມີຕໍ່ບັບັນພະບຸຣຸດຂອງເຂົາ ຜູ້ຊຶ່ງເຮົາໄດ້ພາເຂົາອອກ
ມາຈາກແຜ່ນດິນເອຢິບ ຕໍ່ຫນ້າບັນດາປະຊາຊາດ ເພື່ອເຮົາຈະໄດ້ເປັນພຣະເຈົ້າຂອງເຂົາ ເຮົາພຣະຜູ້ເປັນເຈົ້າ"
46 ສິ່ງເຫລົ່ານີ້ເປັນກົດເກນແລະກົດຫມາຍ ແລະບົດບັນຍັດຊຶ່ງພຣະຜູ້ເປັນເຈົ້າຊົງກະທຳໄວ້ລະຫວ່າງພຣະອົງກັບ
ຊົນຊາດອິສຣາເອນເທິງພູເຂົາຊີນາອີໂດຍຜ່ານທາງໂມເຊ

## 27 ກົດຫມາຍກ່ຽວກັບການມອບຖວາຍ

Votive Offering

1 ພຣະເຈົ້າກ່າວແກ່ໂມເຊວ່າ,
2 "ຈົ່ງກ່າວແກ່ຄົນອິສຣາເອນວ່າ ເມື່ອຜູ້ໃດສາບານເປັນພິເສດໄວ້ ບຸກຄົນຜູ້ທີ່ຖືກສາບານໄວ້ນັ້ນ ເຈົ້າຕ້ອງນັບວ່າ
ເຂົາເປັນຂອງພຣະຜູ້ເປັນເຈົ້າ
3 ໃຫ້ເຈົ້າກຳນົດຣາຄາດັ່ງນີ້ ຜູ້ຊາຍອາຍຸຕັ້ງແຕ່ຊາວປີເຖິງຫົກສິບປີຈະເປັນຄ່າເງິນຫ້າສິບເຊເກລຂອງສະຖານ
ນະມັສການ
4 ຖ້າຜູ້ນັ້ນເປັນຜູ້ຍິງ ໃຫ້ເຈົ້າກຳນົດຣາຄາເປັນຄ່າເງິນສາມສິບເຊເກລ
5 ຖ້າຜູ້ນັ້ນອາຍຸຫ້າປີເຖິງຊາວປີ ໃຫ້ເຈົ້າກຳນົດຣາຄາຜູ້ຊາຍເປັນຄ່າເງິນຊາວເຊເກລ ແລະຜູ້ຍິງສິບເຊເກລ
6 ຖ້າຜູ້ນັ້ນອາຍຸນຶ່ງເດືອນເຖິງຫ້າປີ ໃຫ້ເຈົ້າກຳນົດຣາຄາຜູ້ຊາຍເປັນເງິນຄ່າຫ້າເຊເກລ ແລະຜູ້ຍິງສາມເຊເກລ

7 ຖ້າເປັນບຸກຄົນອາຍຸຫົກສິບປີຂຶ້ນໄປ ໃຫ້ເຈົ້າກຳນົດຣາຄາຜູ້ຊາຍເປັນຄ່າເງິນສິບຫ້າເຊເກລ ແລະຜູ້ຍິງເປັນສິບ
ເຊເກລ
8 ຖ້າຜູ້ຊາຍຄົນໃດຍາກຈົນເກີນທີ່ຈະຊຳຣະຕາມທີ່ເຈົ້າກຳນົດຣາຄາ ກໍໃຫ້ນຳຜູ້ຖືກສາບານໄປຫາປະໂຣຫິດ ໃຫ້
ປະໂຣຫິດກຳນົດຣາຄາຕາມກຳລັງຂອງຜູ້ທີ່ສາບານ ປະໂຣຫິດຈະກຳນົດຣາຄາຂອງຄົນນັ້ນ
9 “ຖ້າເປັນສັດຢ່າງທີ່ມະນຸດຈະມາຖວາຍພຣະຜູ້ເປັນເຈົ້າ ສິ່ງໃດໆທີ່ມະນຸດຖວາຍແດ່ພຣະຜູ້ເປັນເຈົ້າຖືວ່າເປັນ
ຂອງບໍຣິດສຸດ
10 ຢ່າໃຫ້ເຂົານຳສິ່ງໃດມາແທນ ຫລືປ່ຽນ ເອົາດີມາປ່ຽນບໍ່ດີ ຫລືເອົາບໍ່ດີມາປ່ຽນດີ ຖ້າເຂົາທຳການປ່ຽນສັດ ທັງ
ໂຕທີ່ນຳມາປ່ຽນ ແລະໂຕທີ່ຖືກປ່ຽນຈະຕ້ອງບໍຣິສຸດ
11 ຖ້າເປັນສັດມົນທິນຊຶ່ງບໍ່ຄວນນຳມາຖວາຍແດ່ພຣະຜູ້ເປັນເຈົ້າ ໃຫ້ຜູ້ນັ້ນນຳສັດໄປຫາປະໂຣຫິດ
12 ແລ້ວປະໂຣຫິດຈະຕີຄ່າວ່າເປັນຂອງດີຂອງບໍ່ດີ ທ່ານຜູ້ເປັນປະໂຣຫິດກຳນົດຣາຄາເທົ່າໃດກໍໃຫ້ເປັນເທົ່ານັ້ນ
13 ຖ້າເຂົາຈະມາໄຖ່ສັດນັ້ນກໍໃຫ້ເຂົາເພີ້ມອີກນຶ່ງໃນຫ້າຂອງຣາຄາທີ່ຕັ້ງໄວ້
14 “ເມື່ອຄົນໃດຖວາຍເຮືອນຂອງຕົນໄວ້ເປັນຂອງບໍຣິສຸດແດ່ພຣະຜູ້ເປັນເຈົ້າ ປະໂຣຫິດຕ້ອງກຳນົດຣາຄາຕາມດີ
ບໍ່ດີ ປະໂຣຫິດກຳນົດຣາຄາເທົ່າໃດກໍໃຫ້ເປັນເທົ່ານັ້ນ
15 ຖ້າຜູ້ທີ່ຖວາຍເຮືອນໄວ້ປະສົງຈະໄຖ່ເຮືອນຂອງເຂົາ ກໍໃຫ້ຜູ້ນັ້ນເພີ້ມເງິນອີກນຶ່ງໃນຫ້າຂອງຣາຄາເຮືອນທີ່ຕັ້ງ
ໄວ້ ແລ້ວເຮືອນນັ້ນຈຶ່ງຕົກເປັນຂອງເຂົາໄດ້
16 “ຖ້າຜູ້ໃດຖວາຍທີ່ດິນສ່ວນນຶ່ງແດ່ພຣະຜູ້ເປັນເຈົ້າຊຶ່ງເປັນມໍຣະດົກຕົກແກ່ເຂົາ ໃຫ້ເຈົ້າກຳນົດຣາຄາຂອງທີ່ດິນ
ຕາມຈຳນວນພືດພັນທີ່ຫວ່ານລົງດິນນັ້ນ ຖ້າທີ່ນາໃຊ້ພັນບາລີນຶ່ງໂຮເມີ ໃຫ້ກຳນົດຣາຄາເປັນເງິນຫ້າສິບເຊເກລ
17 ຖ້າເຂົາຖວາຍນາໃນປີສຽງເຂົາສັດ ກໍໃຫ້ຄົງເຕັມຣາຄາທີ່ເຈົ້າກຳນົດ
18 ຖ້າເຂົາຖວາຍທີ່ນາພາຍຫລັງປີສຽງເຂົາສັດ ກໍໃຫ້ປະໂຣຫິດໄລ່ຄຳນວນຄ່າເງິນ ຕາມຈຳນວນປີທີ່ເຫລືອຢູ່ກວ່າ
ຈະເຖິງປີສຽງເຂົາສັດ ໃຫ້ຫັກເສັຽຈາກຣາຄາທີ່ເຈົ້າກຳນົດ
19 ຖ້າຜູ້ທີ່ຖວາຍນາປະສົງຈະໄຖ່ນານັ້ນກໍໃຫ້ເຂົາເພີ້ມຄ່າເງິນອີກນຶ່ງໃນຫ້າ ຂອງກຳນົດຣາຄາທີ່ຕີໄວ້
20 ແຕ່ຖ້າເຂົາບໍ່ປະສົງທີ່ຈະໄຖ່ນາ ຫລືເຂົາໄດ້ຂາຍນານັ້ນໃຫ້ແກ່ອີກຄົນນຶ່ງແລ້ວ ກໍຢ່າໃຫ້ໄຖ່ອີກເລີຍ
21 ແຕ່ນານັ້ນເມື່ອເຂົາຕ້ອງສະລະໃນປີສຽງເຂົາສັດ ກໍເປັນຂອງບໍຣິສຸດແດ່ພຣະເຈົ້າ ເພາະເປັນນາທີ່ຖວາຍໄວ້ ປະ
ໂຣຫິດຈຶ່ງເຂົ້າຖືກຳມະສິດນານັ້ນໄດ້
22 ຖ້າຄົນໃດຊື້ນາມາຖວາຍແດ່ພຣະເຈົ້າ ຊຶ່ງບໍ່ແມ່ນສ່ວນມໍຣະດົກທີ່ຕົກເປັນກຳມະສິດຂອງເຂົາ
23 ປະໂຣຫິດຈະໄລ່ຄຳນວນຄາດຫມາຍຈົນເຖິງປີສຽງເຂົາສັດ ໃນວັນນັ້ນເຈົ້າຂອງນາຕ້ອງຖວາຍເງິນເທົ່າກຳນົດ
ຄ່ານາທີ່ຕີໄວ້ ເປັນສິ່ງບໍຣິສຸດແດ່ພຣະເຈົ້າ
24 ພໍເຖິງປີສຽງເຂົາສັດນານັ້ນຕ້ອງກັບໄປຕົກແກ່ຜູ້ທີ່ຂາຍໃຫ້ເຂົາຊຶ່ງເປັນເຈົ້າຂອງເດີມ ຕາມມໍຣະດົກທີ່ຕົກມາ
ເປັນຂອງເຂົາ
25 ການກຳນົດຣາຄາທຸກຢ່າງຈະຕ້ອງເປັນໄປຕາມຄ່າເງິນເຊເກລຂອງສະຖານນະມັສການ ຊາວເກຣາເປັນນຶ່ງ
ເຊເກລ
26 “ແຕ່ລູກສັດຫົວປີນັ້ນຢ່າໃຫ້ຜູ້ໃດນຳມາຖວາຍ ເພາະທີ່ເປັນສັດຫົວປີກໍຕົກເປັນຂອງພຣະເຈົ້າຢູ່ແລ້ວ ງົວກໍດີ
ແກະກໍດີ ເປັນຂອງພຣະເຈົ້າ
27 ຖ້າເປັນສັດມົນທິນຈຶ່ງໃຫ້ເຂົາຊື້ຄືນຕາມກຳນົດຣາຄາຂອງເຈົ້າ ໂດຍເພີ້ມນຶ່ງໃນຫ້າຂອງກຳນົດຣາຄາທີ່ຕີໄວ້
ຖ້າເຂົາບໍ່ໄຖ່ກໍໃຫ້ຂາຍເສັຽຕາມກຳນົດຣາຄາທີ່ຕີໄວ້
28 “ແຕ່ສິ່ງໃດທີ່ຖວາຍຂາດແດ່ພຣະເຈົ້າ ເປັນສິ່ງທີ່ເຂົາມີຢູ່ ບໍ່ວ່າເປັນຄົນຫລືສັດ ຫລືທີ່ນາອັນເປັນມໍຣະດົກຕົກ
ແກ່ເຂົາ ຈະຂາຍຫລືໄຖ່ບໍ່ໄດ້ເລີຍ ເພາະສິ່ງທີ່ຖວາຍຂາດແລ້ວເປັນສິ່ງບໍຣິສຸດທີ່ສຸດແດ່ພຣະເຈົ້າ

29 ຜູ້ໃດທີ່ຖືກຖວາຍຂາດແລ້ວ ຄືຜູ້ທີ່ຕ້ອງທຳລາຍເສັຽຈາກມະນຸດ ຢ່າໃຫ້ໄຖ່ຖອນຜູ້ນັ້ນ ຜູ້ນັ້ນຕ້ອງຖືກໂທດເຖິງ
ຕາຍ
30 ນຶ່ງສ່ວນສິບທັງສິ້ນທີ່ໄດ້ຈາກແຜ່ນດິນ ເປັນພືດທີ່ໄດ້ຈາກແຜ່ນດິນກໍດີ ຫລືຫມາກຈາກຕົ້ນໄມ້ກໍດີ ເປັນຂອງພ
ຣະເຈົ້າ ເປັນສິ່ງບໍຣິສຸດແດ່ພຣະເຈົ້າ
31 ຖ້າຄົນໃດປະສົງຈະໄຖ່ນຶ່ງສ່ວນສິບສ່ວນໃດຂອງເຂົາ ເຂົາຕ້ອງເພີ້ມອີກນຶ່ງໃນຫ້າຂອງນຶ່ງສ່ວນສິບນັ້ນ
32 ແລະນຶ່ງສ່ວນສິບໄດ້ມາຈາກຝູງງົວ ຫລືຝູງແບ້ ແກະ ຄືສັດນຶ່ງໃນສິບໂຕທີ່ລອດໃຕ້ໄມ້ເທົ້າຂອງຜູ້ລ້ຽງ ເປັນສັດ
ບໍຣິສຸດແດ່ພຣະເຈົ້າ
33 ຢ່າໃຫ້ຄິດວ່າດີຫລືບໍ່ດີ ແລະຢ່າໃຫ້ເຂົາສັບປ່ຽນ ທັງໂຕທີ່ນຳມາປ່ຽນກັບໂຕທີ່ຖືກປ່ຽນເປັນຂອງບໍຣິສຸດ ໄຖ່ບໍ່
ໄດ້"
34 ເຫລົ່ານີ້ເປັນບົດບັນຍັດທີ່ພຣະເຈົ້າຊົງບັນຍັດໄວ້ກັບໂມເຊສຳລັບຄົນອິສຣາເອນເທິງພູເຂົາຊີນາອີ